ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ

**Copyright © 2007 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-4
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 5-7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 5-7
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons  11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons  11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຈົ່ງໃຫ້ເສັ້ນເປັນຈຸດຕິດຕໍ່ກັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 1:1-17

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຣມ 1:1-17

**ຈຸດສຳຄັນຂອງບົດຮຽນນີ້:** ຂ່າວປະເສີດຂອງພຣະເຢຊູ ມີຄວາມໜາຍສຳລັບຊີວິດຂອງພວກເຮົາ ແລະສຳລັບປະວັດສາດດ້ວຍ ຖ້າພວກເຮົາຫາກມີຄວາມເຊື່ອ.

**ຄຳຖາມເພື່ອສຳຣວດ:** ອົງພຣະເຢຊູຊົງຈັດຕຽມຄວາມໜາຍນີ້ ໂດຍເຫດການໃດ ສຳລັບຊີວິດຂອງພວກເຮົາແລະສຳລັບປະວັດສາດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ຄວາມໜາຍຂອງຂ່າວປະເສີດ ແລະປະວັດສາດໄດ້ເຫັນເດັ່ນຊັດຂື້ນໃນຊີວິດຂອງເຮົາ

**ຄົ້ນຄວ້າ ພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ເຕົ້າໂຮມຄອບຄົວທີ່ເຊື່ອ ເພື່ອຈະກາຍມາເປັນຜູ້ຮັບໃຊ້
- ເຊື່ອຟັງແລະຮັບໃຊ້ພຣະເຢຊູດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ
- ສ້າງຜູ້ນຳ

## ຄຳນຳ

ກຸງໂຣມແມ່ນຈຸດສູນກາງຂອງໂລກ. ຢ່າງນ້ອຍກໍແມ່ນຄົນສມັຍເກົ່າທີ່ຄິດເຊັ່ນນັ້ນ. ໃນສມັຍຂອງໂປໂລ ແມ່ນເປັນຈຸດສູນກາງທີ່ມີອຳນາດທາງການເມືອງຂອງໂລກ. ຂົງເຂດທີ່ອານາຈັກໂຣມເຮືອງອຳນາດໄດ້ກວມໄປເຖິງປະເທດອັງກິດແລະກໍໄປເຖິງອີຣັກ. ຊ້ຳຍັງເປັນບ່ອນທີ່ມີກຳລັງອຳນາດທາງທະຫານແລະເປັນກອງທະຫານທີ່ເຂັ້ມແຂງໂດຍທີ່ບໍ່ເຄີຍເຫັນມາຈັກເທື່ອ. ການແລກປ່ຽນສິນຄ້າຂອງໂລກກໍຢູ່ທີ່ນັ້ນດ້ວຍ. ຜູ້ເຖົ້າເກົ່າແກ່ມັກເວົ້າວ່າ "**ເສັ້ນທາງນຳໄປສູ່ກຸງໂຣມ**" ເປັນຫຍັງຄົນໂຣມັນທັງຫລາຍຈຶ່ງບໍ່ພາກັນຄິດວ່າກຸງໂຣມເປັນສູນກາງທຸກຢ່າງຂອງໂລກ?

ພາຍໃນປະເທດທີ່ມີກຳລັງອັນມະຫາສານຢ່າງນີ້ ຊ້ຳພັດມີກຸ່ມນ້ອຍໆນຶ່ງທີ່ເປັນຄຣິສຕຽນ. ບໍ່ຕ້ອງສົງສັຍດອກຄົນໂຣມັນເຂົາກໍຕ້ອງປ່າວປະກາດເຖິງຂນົບທັມນຽມ ແລະຄວາມພາກພູມໃຈໃນປະເທດຂອງເຂົາເອງຢູ່ແລ້ວຢ່າງແນ່ນອນ. ແຕ່ເຖິງຈະຢ່າງໃດກໍຕາມ ຖ້າທຽບໃສ່ຄົນສ່ວນໃຫຍ່ໃນຕົວເມືອງແລ້ວ ຄຣິສຕຽນແມ່ນມີນ້ອຍເຕັມທີ. ບາງຄົນກໍໄປປ່າວປະກາດໃຫ້ຄົນຕ່າງຊາດຕາມສະຖານທີ່ພວກເຂົາກຳລັງນະມັສການຢູ່. ຄຣິສຕຽນພວກນີ້ມີຫລັກຄວາມເຊື່ອມາຈາກຊາວຍິວ ແລະພວກເຂົາກໍຮູ້ຈັກກັບພຣະເຈົ້າອົງທ່ຽງແທ້ມາຫລາຍຍຸກຫລາຍສມັຍມາແລ້ວ. ແຕ່ພວກນີ້ເປັນພວກທີ່ໄດ້ສຶກສາແລະຮັບຮູ້ວ່າພຣະເຢຊູຄຣິດເປັນພຣະບຸດຂອງພຣະເຈົ້າ ແລະພວກເຂົາກໍໄດ້ເຊື່ອໃນພຣະອົງ. ແຕ່ເມື່ອ

ພວກເຂົາຫລຽວເບິ່ງຮອບ ໆ ຂ້າງຂອງພວກເຂົາແລ້ວ ພວກເຂົາກໍພາກັນຄິດວ່າພະລັງອຳນາດຂອງພຣະເຈົ້າຢູ່ໃສ? ທີ່ນີ້ພວກເຮົາມີໂອກາດທີ່ຈະປະກາດແລ້ວເດ.

ໂປໂລໄດ້ຂຽນຈົດໝາຍໄປຫາພີ່ນ້ອງຄຣິສຕຽນທີ່ກຸງໂຣມເພື່ອໜູນໃຈແລະເພື່ອໃຫ້ພວກເຂົາເຂັ້ມແຂງຂື້ນໃນຄວາມເຊື່ອ. ໂປໂລບໍ່ເຄີຍໄປກຸງໂຣມແລະບໍ່ພົບໜ້າພີ່ນ້ອງພວກນີ້ຈັກເທື່ອ. ໃນ ຂໍ້ 1 ເຖິງ ຂໍ້ 7 ລາວຈຶ່ງຂຽນເຖິງດ້ວຍການແນະນຳຕົນເອງແລະຂອບພຣະຄຸນພຣະເຈົ້າ. ລາວຍັງໄດ້ກ່າວເຖິງຄວາມໝາຍຂອງຄວາມເຊື່ອ ຊຶ່ງຈະເຮັດໃຫ້ມີຄວາມໝາຍໃນການທີ່ພຣະເຈົ້າຊົງມີແຜນການຕໍ່ຊີວິດແລະປະວັດສາດຂອງໂລກ. ພຣະເຈົ້າໄດ້ເຊື່ອມໂຍງຊີວິດຂອງພວກເຂົາກັບພຣະປະສົງຂອງພຣະອົງໄວ້ແລ້ວ.

## 1. <u>ພີ່ນ້ອງຄຣິສຕຽນຊາວກຸງໂຣມທີ່ຮັກ:</u> (1:1-7)

ເມື່ອເຮົາເລີ້ມຕົ້ນຈົດໝາຍສ່ວນຫລາຍແລ້ວພວກເຮົາຈະໃຊ້ຄຳວ່າ "ທີ່ຮັກ" ເຊັ່ນ: ທ່ານທີ່ຮັກ, ພີ່ນ້ອງທີ່ຮັກ, ເພື່ອນທີ່ຮັກ, ຫລືວ່າສຸດທີ່ຮັກ. ພວກເຮົາບໍ່ມັກຈະບອກຊື່ຕົວເອງກ່ອນ ສ່ວນຫລາຍມັກຈະໃສ່ບາດສຸດທ້າຍ. ຢ່າງໃດກໍຕາມສມັຍຂອງໂປໂລລາວຂື້ນຕົ້ນຊື່ລາວເອງກ່ອນແລ້ວຈຶ່ງມາໃສ່ຊື່ຜູ້ທີ່ຈະຮັບຈົດໝາຍນັ້ນ ໃນຈົດໝາຍສະບັບນີ້ກໍເໝືອນກັນ.

ໂຣມ 1:1 ໂປໂລແນະນຳຕົວເອງວ່າຜູ້ຮັບໃຊ້ພຣະເຈົ້າຫລືອີກຄຳນຶ່ງອາດເວົ້າໄດ້ວ່າ "ຂ້າທາດຂອງພຣະເຈົ້າ" ຄຳເວົ້ານີ້ແມ່ນໝາຍຄວາມວ່າໂປໂລຍອມຖວາຍຕົວໃຫ້ກັບພຣະເຈົ້າຢ່າງສຸດກຳລັງ, ໃນຊີວິດຂອງລາວແມ່ນປົກຫຸ້ມດ້ວຍພຣະເຢຊູ. ລາວຍັງປະກາດວ່າລາວໄດ້ຖືກເອີ້ນໃຫ້ມາເປັນອັຄສາວົກ. (1:1) ລາວຖືກຄັດເລືອກໃຫ້ມາທຳງານພິເສດຕາມພຣະປະສົງຂອງພຣະເຈົ້າ ແລະເພື່ອເປົ້າໝາຍຂອງພຣະອົງຕໍ່ໂລກນີ້

ຂ່າວປະເສີດບໍ່ແມ່ນສິ່ງໃໝ່, ເປັນສິ່ງທີ່ມີມາແຕ່ນານແລ້ວ ການທຳນວາຍແລະຜູ້ປະກາດພຣະທັມເຄີຍໃຫ້ໄວ້ແຕ່ຄັ້ງປະຖົມມະການໃນພຣະຄັມພີເດີມ. ຖ້າພວກເຮົາຫາກຈະທວນກັບໄປຫາອັບຣາຮາມແລະກົດຣະບຽບຂອງພຣະເຈົ້າທີ່ພຣະເຈົ້າຊົງດຳຣັດໄວ້ໃນປະຖົມມະການແລະພຣະຄັມພີໂຣມ ບົດທີ 4.

ຕາມທີ່ຈິງແລ້ວພຣະປະສົງຂອງພຣະເຈົ້າແມ່ນມີມາຕັ້ງແຕ່ເລີ້ມສ້າງໂລກ. ແທ້ຈິງແລ້ວພຣະອົງຊົງແນໃສ່ອົງພຣະເຢຊູ. ພຣະເຢຊູສະເດັດເຂົ້າມາໃນໂລກນີ້ໃນສະພາບຂອງມະນຸດຕາມເຊື້ອສາຍຂອງດາວິດ. ແຕ່ພຣະເຢຊູຊົງສະພາບເປັນພຣະເຈົ້າ ພຣະອົງຊົງປາກົດໃນຮູບຂອງພຣະບຸດດ້ວຍການຄືນພຣະຊົນ. ບາງຄົນກໍເຂົ້າໃຈວ່າເປັນມະນຸດທັມດາຄົນນຶ່ງທີ່ເກີດມາໃນໂລກນີ້ ພໍໄດ້ 33 ປີແລ້ວກໍຖືກຂ້າຕາຍ. ແຕ່ພຣະເຢຊູຊົງເປັນພຣະເຈົ້າ 100 ເປີເຊັນ ແລະກໍເປັນມະນຸດ 100 ເປີເຊັນເຊັ່ນກັນ ແລະກໍເປັນພຣະເຈົ້ານັບແຕ່ວັນທີ່ໂລກນີ້ຖືກສ້າງຂື້ນມາແລະກໍຈົນເຖິງວັນສຸດທ້າຍຂອງໂລກອີກ.

ຄວາມສັມພັນຂອງໂປໂລແລະພຣະເຈົ້າ, ເຮັດໃຫ້ລາວມີຊີວິດໃໝ່ແລະມີຄວາມໝາຍໃໝ່ ເພາະວ່າລາວໄດ້ຮັບ ພຣະຄຸນຈາກພຣະເຈົ້າ ແລະໄດ້ຮັບການປ່າວປະກາດ. ເພື່ອຈະໄດ້ບັນລຸຕາມພຣະປະສົງຂອງພຣະເຈົ້າເຮົາຈຳເປັນຕ້ອງຮັບເອົາພຣະຄຸນຈາກພຣະເຈົ້າດ້ວຍຄວາມເຊື່ອ ແລະປະຕິບັດຕາມພຣະຄຳຂອງພຣະອົງ ແລ້ວກໍຈະມີຄວາມໝາຍອັນໃໝ່ໃນຊີວິດ.

## 2. <u>ຂ້າພະເຈົ້າຢາກມາຢາມແລະເຫັນພວກທ່ານທຸກໆຄົນ:</u>(1:8-15)

ໂປໂລໄດ້ຂອບພຣະຄຸນພຣະເຈົ້າ ສຳລັບຄຣິສຕຽນທີ່ກຸງໂຣມ. ເພາະຄວາມເຊື່ອຂອງພວກເຂົາ ໄດ້ໂດ່ງດັງໄປທົ່ວໂລກ. ໃນນີ້ກໍເປັນການໜູນໃຈໃຫ້ແກ່ຄຣິສຕຽນທີ່ຢູ່ທົ່ວໄປດ້ວຍ. ໂປໂລກໍກ່າວວ່າເວລາໃດທີ່ລາວອ້ອນວອນອະທິ

ຖາມນັ້ນ ລາວກໍໄດ້ອະທິຖານເພື່ອພວກເຂົາຕລອດເວລາ.

ສ່ວນຫລາຍແລ້ວ ໂປໂລຈະຂຽນຈົດຫມາຍໄປຫາໂບດທີ່ລາວໄດ້ໄປກໍ່ຕັ້ງໄວ້ແລ້ວ ແຕ່ຄຣິສຕະຈັກແຫ່ງນີ້ລາວບໍ່ໄດ້ໄປຕັ້ງໄວ້ ອາດຈະເປັນໃຜຜູ້ນຶ່ງຊຶ່ງຮັບເຊື່ອໃນວັນເພັນເຕຄອສແລ້ວກໍຍ້າຍໄປຢູ່ກຸງໂຣມ ແລະຈັດຕັ້ງຄຣິສຕະຈັກຂຶ້ນ. ຢ່າງໃດກໍຕາມ ຂ່າວປະເສີດຂອງພຣະເຈົ້າກໍໄດ້ມາເຖິງກຸງໂຣມແລ້ວ ແລະໂປໂລກໍມີຈຸດປະສົງຢາກຈະໄປຢ້ຽມຢາມຄຣິສຕຽນຊາວກຸງໂຣມເພື່ອຫນູນໃຈກັນ.

ເປົ້າຫມາຍທີ່ລາວຢາກຈະໄປນັ້ນກໍມີຢູ່ 3 ເຫດຜົນດ້ວຍກັນຄື: (1) ເພື່ອນຳຂອງປະທານຝ່າຍວິນຍານຈິດມາໃຫ້ແກ່ພວກເຂົາ 1:11 (2) ເພື່ອເກັບກ່ຽວຜົນໃນຫມູ່ພວກທ່ານດ້ວຍ ເຊັ່ນດຽວກັບຊົນຊາດອື່ນໆ 1:13 (3) ເພື່ອຂົນຂວາຍທີ່ຈະປະກາດຂ່າວປະເສີດແກ່ທ່ານທັງຫລາຍທີ່ຢູ່ໃນກຸງໂຣມດ້ວຍ.

ໂປໂລຮູ້ສຶກວ່າຍັງເປັນຫນີ້ຕໍ່ຄົນທຸກຊົນຊາດ ທັງພວກທີ່ສີວິໄລແລະພວກທີ່ບໍ່ສີວິໄລ ທັງພວກນັກປາດແລະພວກທີ່ຍັງໂງ່ຢູ່. ຄົນພວກນີ້ແມ່ນພວກທີ່ປາກພາສາກຣີກບໍ່ຂອດ. ພວກເຂົາເປັນພວກທີ່ມາຈາກພາກເຫນືອຄົນໂຣມັນບໍ່ມັກພວກນີ້ຫລາຍ. ຢ່າງໃດກໍຕາມ ໂປໂລກໍຢາກຈະປ່າວປະກາດໃຫ້ແກ່ພວກນີ້ດ້ວຍ ເພາະເປົ້າຫມາຍຂອງໂປໂລແມ່ນປະກາດໄປທົ່ວໂລກ ບໍ່ແມ່ນປະເທດໃດປະເທດນຶ່ງເທົ່ານັ້ນ.

**3. <u>ນີ້ຄືຈຸດເປົ້າຫມາຍທີ່ສຳຄັນ:</u>** (1:16-17)

ຂໍ້ຄວາມຕອນນີ້ຊີ້ໃຫ້ເຫັນຈຸດສຳຄັນຂອງຈົດຫມາຍທີ່ຂຽນໄປຫາຊາວກຸງໂຣມ. ຕາມທີ່ຈິງແລ້ວ ແມ່ນຈຸດທີ່ມີຄວາມຫມາຍຫລາຍໃນທຸກໆຊີວິດແລະ ກໍເປັນປະວັດສາດໃນຕົວຂອງມັນເອງ. ຈົດຫມາຍຂອງໂປໂລ ພວກເຮົາຈະໄດ້ພົບອັນພິເສດ ພິເສດເລື້ອຍໆ ເຊັ່ນໃນສບັບນີ້ພວກເຮົາຈະເຫັນວ່າ "ບໍ່ມີຄວາມລະອາຍໃນຂ່າວປະເສີດ" (1:16) ເປັນຫຍັງລາວຈຶ່ງຂຽນຢ່າງນັ້ນ ຫລືວ່າມີບາງຄົນຄິດວ່າລາວລະອາຍບໍ່. ເຫດຜົນກໍມີຢູ່ວ່າ ລາວປະກາດໃຫ້ກັບຊ່າງໄມ້ໄທນາຊາເຣັດຊຶ່ງເກີດທີ່ເມືອງນ້ອຍໆເມືອງນຶ່ງ. ອີກເຫດຜົນນຶ່ງກໍຄືວ່າ ເຢຊູໄທນາຊາເຣັດຖືກໂທດປະຫານຊີວິດໂດຍອຳນາດການປົກຄອງຂອງອານາຈັກໂຣມ. ຖ້າພຣະເຢຊູມີອຳນາດ ອຳນາດນັ້ນຢູ່ໃສ? ໄປເຊື່ອຜູ້ທີ່ຖືກຕຶງທີ່ກາງແຂນເບິ່ງຄືວ່າ ໂງ່ເອົາແທ້. ຖ້າຈະເບິ່ງແລະສົມທຽບກັບອຳນາດຂອງໂລກນີ້ອາດຈະແມ່ນແທ້ . ແຕ່ໂປໂລກໍປະກາດຢ່າງບໍ່ລະອາຍ.

ການປະກາດຂ່າວປະເສີດແມ່ນຄວາມຫມາຍຂອງຊີວິດທີ່ແທ້ຈິງ ເພາະເຮົາຈະໄດ້ຮັບພະລັງຈາກພຣະເຈົ້າສຳລັບຄວາມລອດພົ້ນຂອງທຸກໆຄົນ. ເພາະຄວາມຊອບທັມນັ້ນຕ້ອງໄດ້ອາສັຍຄວາມເຊື່ອເທົ່ານັ້ນ. ໂປໂລໄດ້ຍົກຂໍ້ພຣະຄັມພີເດີມ ຜູ້ທຳນວາຍຮາບາຄຸກ "ຜູ້ທີ່ຊົງຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫລະຈະໄດ້ຊີວິດ" (ໂຣມ 1:17; ຮາບາຄຸກ 2:4)

ຊາວໂຣມັນຄິດວ່າກຸງໂຣມເປັນສູນກາງຂອງໂລກ ແຕ່ສູນກາງຂອງໂລກທີ່ແທ້ຈິງແມ່ນຢູ່ທີ່ໄມ້ກາງແຂນຂອງພຣະເຢຊູ. ເປັນພະລັງແລະອຳນາດຂອງພຣະເຈົ້າເພື່ອຄວາມລອດພົ້ນເທົ່ານັ້ນ.

**<u>ຄຳແນະນຳ ແລະ ພາກປະຕິບັດ</u>**

- ທ່ານເບິ່ງຮອບໆຂ້າງຂອງທ່ານແລ້ວຖາມຕົວເອງວ່າ ເປັນຫຍັງທ່ານຈຶ່ງມາຢູ່ທີ່ນີ້? (ມາຢູ່ໃນໂລກນີ້)

- ພວກເຮົາມາຢູ່ທີ່ນີ້ກໍເພາະວ່າພຣະເຈົ້າຕ້ອງການສຳແດງຕົວຂອງພຣະອົງຜ່ານທາງພວກເຮົາ.
- ຈຸດປະສົງຂອງພວກເຮົາແມ່ນຫຍັງ? ຈົ່ງໃຫ້ໄມ້ກາງແຂນຂອງພຣະເຢຊູເປັນສູນກາງຂອງພວກເຮົາ

<u>ຄຳຖາມ</u>

1. ສິ່ງທີ່ມີອຳນາດໃນໂລກນີ້ ທີ່ມະນຸດເຊື່ອວ່າຈະເຮັດໃຫ້ຊີວິດມີຄວາມໝາຍຫລາຍແມ່ນຫຍັງແດ່?

2. ທ່ານເຄີຍເຂົ້າໃຈຍາກບໍ່ວ່າບາງຄັ້ງອຳນາດຈອງພຣະເຈົ້າເບິ່ງຄືບໍ່ມີ?

3. ທ່ານຄິດວ່າຢ່າງໃດເມື່ອໄດ້ຍິນວ່າ ພຣະກິດຕິຄຸນຈະເຮັດໃຫ້ເປັນປະວັດສາດ?

4. ຂ່າວປະເສີດ ຈັດຕຽມຄວາມໝາຍໃຫ້ແກ່ຊີວິດຢ່າງໃດ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 2
# ບໍ່ມີຂໍ້ແກ້ຕົວ, ບໍ່ມີການຍົກເວັ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 1: 18-32; 2:1-13

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຣມ 1:18--2:16

**ຈຸດສຳຄັນຂອງບົດຮຽນນີ້:** ທຸກໆຄົນ "ຈະຖືສາສນາຫລືບໍ່ຖື" ເປັນຄົນບາບທຸກຄົນບໍ່ມີການຍົກເວັ້ນໃດໆທັງນັ້ນ ໃນການປາກົດຕົວຕໍ່ພຣະພັກພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ເປັນຫຍັງຂ້ອຍຈຶ່ງຈະຕ້ອງປາກົດຕົວຕໍ່ໜ້າພຣະເຈົ້າ-ຂ້ອຍເປັນຄົນດີຮອບຄອບແລ້ວເດ-ຂ້ອຍຕ້ອງຖືກຍົກເວັ້ນ.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊີ້ແຈງໃຫ້ເຫັນວ່າ "ຄົນນັບຖືສາສນາ" ແລະ "ຄົນບາບ" ຈະຫລີກຈາກການປາກົດຕົວຕໍ່ພຣະເຈົ້າ ແມ່ນບໍ່ໄດ້ເດັດຂາດ

**ຄົ້ນຄວ້າພ້ອມກັບການປະຕິບັດ**

- ຢັ້ງຢືນວ່າພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

**ຄຳນຳ**

ຫົວໃຈຂອງຂ້າພະເຈົ້າເຕັ້ນແຮງ ເມື່ອໄດ້ຍິນຄຳຖາມທີ່ວ່າ : ທ່ານຕ້ອງການຟັງອັນໃດກ່ອນ ຂ່າວດີຫລືຂ່າວຮ້າຍ ? ຂ້າພະເຈົ້າຕົກໃຈເມື່ອໄດ້ຍິນຄຳວ່າຂ່າວຮ້າຍ. ແຕ່ຂ້າພະເຈົ້າກໍຢາກຟັງຂ່າວຮ້າຍກ່ອນ ເພາະວ່າເມື່ອໄດ້ຟັງຂ່າວດີແລ້ວມັນກໍຈະລືມຂ່າວຮ້າຍນັ້ນໄປແດ່.

ໂປໂລໄດ້ຂຽນຈົດໝາຍໄປເຖິງຊາວກຸງໂຣມ, ລາວມີທັງຂ່າວດີແລະຂ່າວຮ້າຍ. ລາວບໍ່ໄດ້ຖາມພວກເຂົາເລີຍວ່າຕ້ອງການຂ່າວດີຫລືຂ່າວຮ້າຍກ່ອນ. ລາວຖອກເທຂ່າວບໍ່ດີອອກມາກ່ອນ ແລະກໍບໍ່ຕ້ອງສົງສັຍຫຍັງດອກຂ່າວບໍ່ດີກໍແມ່ນຂ່າວຮ້າຍນັ້ນລະ. ຕາມທີ່ຈິງແລ້ວມັນກໍບໍ່ເປັນໜ້າຢາກຟັງເລີຍ.

**1. ຂ່າວຮ້າຍນັ້ນກໍແມ່ນຮ້າຍເຫລືອເຫດ:** (1:18-32)

ຂ່າວຮ້າຍນັ້ນກໍແມ່ນຮ້າຍຫລາຍເຫລືອເຫດ. ໂປໂລໄດ້ຂຽນໄວ້ວ່າ "ພຣະເຈົ້າໄດ້ສຳແດງພຣະພິໂຣດ...." ບໍ່ມີຂ່າວໃດດອກທີ່ຈະຮ້າຍແຮງໄປກວ່ານີ້ອີກ !!! ຂ້າພະເຈົ້າຍອມຮັບວ່າ "ພຣະພິໂຣດຂອງພຣະເຈົ້າ" ເປັນຄຳເວົ້າທີ່ບໍ່ເປັນຕາຢ້ານປານໃດ, ແຕ່ຖ້າທ່ານໄດ້ຟັງພວກທີ່ໄປເທສນາປ່າວປະກາດຕາມຖນົນຫົນທາງ, ຕາມທີ່ຊຸມຊົນທ້ອງທ່ຽວແລ້ວຈະໄດ້ຍິນຄຳເວົ້າທີ່ສຽບແທງ, ຮ້າຍແຮງ, ແລະເປັນຄຳເວົ້າທີ່ໜັກໜ່ວງຫລາຍແທ້ໆ . ຖ້າເວົ້າເຣື່ອງໝົ້ນະຣົກກໍຮ້ອນເຮົ້າຊື່ງເຜົາດ້ວຍມາດ, ຖ່ານໄຟກໍແດງຮ້ອນຫລາຍຮ້ອຍເທົ່າຊື່ງເຮັດໃຫ້ເປັນໜ້າຢ້ານກົວຫລາຍ. ພວກເຂົາຈະຍົກຮູບພາບມາໃຫ້ທ່ານເຫັນເຖິງພຣະພິໂຣດຂອງພຣະເຈົ້າ. ພວກເຂົາບໍ່ຢ້ານໃຜເສັຽໃຈ ເພາະພວກເຂົາບໍ່ມີໂບດແດ່

ພວກເຂົາກໍເວົ້າຄວາມຈິງຕາມພຣະຄັມພີ.

ຮູບພາບອີກອັນນຶ່ງໄດ້ປາກົດຂຶ້ນໃນແນວຄິດຂອງຂ້າພະເຈົ້າ ກໍຄືວ່າ "ພາຍຸກາຕຣີນາ" ທີ່ເກີດຂຶ້ນທີ່ ລຸຍຊີອານາ, ບາງນັກເທດກໍເວົ້າວ່າ ......ນັ້ນຄືການສຳແດງພຣະພິໂຣດຂອງພຣະເຈົ້າຕໍ່ເມືອງທີ່ກະທຳບາບ. ຂ້າພະເຈົ້າກໍຮູ້ສຶກບໍ່ດີໃຈປານໃດໃນຄຳເວົ້ານັ້ນ ຊຶ່ງວ່າພາຍຸກໍແມ່ນພຣະເຈົ້າຊົງສຳແດງພຣະພິໂຣດ, ແຜ່ນດິນໄຫວກໍແມ່ນພຣະເຈົ້າຊົງສຳແດງພຣະພິໂຣດ, ຊູນາມິ ກໍແມ່ນພຣະເຈົ້າຊົງສຳແດງພຣະພິໂຣດ ແລະຕໍ່ໆໄປ......ແຕ່ວ່າ ເມື່ອອ່ານຈົດໝາຍຂອງໂປໂລແລ້ວກໍຄິດ..ຄິດ..ຄິດວ່າຄົງຈະເປັນຢ່າງນັ້ນແທ້.

ແທ້ທີ່ຈິງແລ້ວ ພຣະພິໂຣດຂອງພຣະເຈົ້າ ບໍ່ແມ່ນສິ່ງຍາກທີ່ຈະເຂົ້າໃຈໄດ້ ເມື່ອເຮົາຫາກສັງເກດເບິ່ງຊີວິດຂອງມະນຸດໂລກ. ຄົນ ໆນຶ່ງບໍ່ຈຳເປັນຕ້ອງຮູ້ຈັກພຣະຄັມພີກໍໄດ້ເພື່ອຈະຮູ້ວ່າຕົວເອງເປັນຄົນບາບ.

ໂປໂລໄດ້ຂຽນບົດລົງໂທດໃນຈົດໝາຍຂອງລາວໂດຍກ່າວໂທດຄົນຕ່າງຊາດ ຜູ້ທີ່ບໍ່ໃຫ້ຄວາມສຳຄັນແລະບໍ່ມີຄວາມຢຳເກງຕໍ່ພຣະເຈົ້າ. ນີ້ແມ່ນແນໃສ່ຄົນທົ່ວ ໆໄປ ທີ່ບໍ່ເຊື່ອໃນພຣະເຈົ້າ ແລະບໍ່ຮູ້ກົດບັນຍັດຂອງພຣະເຈົ້າ. ພວກເຂົາຍອມຮັບວ່າພວກເຂົາບໍ່ໄດ້ເຊື່ອໃນພຣະເຈົ້າ ແລະກໍຍັງຍອມຮັບເຖິງຄວາມອ່ອນແອຂອງພວກເຂົາ ໂດຍເຈຕນາຣົມ. (ຣມ 1:18) ເຖິງເຂົາຈະເວົ້າວ່າຢ່າງໃດກໍຕາມ ເຂົາກໍຮູ້ຢູ່ໃນໃຈຂອງພວກເຂົາແລ້ວ, ພວກເຂົາຮູ້ວ່າມີພຣະເຈົ້າ.

ພວກເຂົາຮູ້ໄດ້ຢ່າງໃດ? ນີ້ເປັນຄຳຖາມ. ທັມຊາດໄດ້ສຳແດງໃຫ້ແກ່ເຂົາ. ບາງຄົນອາດຈະບໍ່ເຄີຍອ່ານພຣະຄັມພີຫລືບໍ່ເຄີຍອ່ານພຣະບັນຍັດ 10 ປະການຈັກເທື່ອ ແຕ່ພວກເຂົາກໍຮູ້ວ່າການຂ້າກັນ, ການຂົ່ມຂືນ ແລະການຂີ້ລັກ ແມ່ນຄວາມຜິດ ຫລືວ່າແມ່ນຄວາມບໍ່ດີ. ດັ່ງນັ້ນແມ່ນວ່າເຂົາຈະຮູ້ຫລືບໍ່ຮູ້ພວກເຂົາກໍບໍ່ມີຂໍ້ແກ້ຕົວໄດ້. ເພາະສະພາບແລະຣິດທານຸພາບຂອງພຣະເຈົ້າຊົງປົກຄຸມແລະປາກົດແຈ້ງໃນທຸກສິ່ງ. (1:21) ພວກເຂົາຍັງອ້າງຕົວວ່າເປັນຄົນສລາດໄປຊອກຫາເອົາວັດຖຸສິ່ງຂອງທີ່ພຣະເຈົ້າສ້າງມາປ່ຽນເປັນຮູບຄົນ, ຮູບສັດ, ຮູບສັດເລືອຄານ, ຮູບນົກ ແລ້ວກໍມາສະຖາປະນາວ່າເປັນພຣະເຈົ້າ ແລ້ວພາກັນມາຂາບໄຫວ້. ພວກເຂົາເປັນຄົນໂງ່ (1:22-23)

ຂໍ້ 24 ພຣະເຈົ້າປ່ອຍໃຫ້ພວກເຂົາເຮັດການຊົ່ວຊ້າ, ຕາມຣາຄະຕັນຫາໃນໃຈຂອງເຂົາ.....

ຂໍ້ 26 ພຣະເຈົ້າຊົງປ່ອຍໃຫ້ເຂົາມີຣາຄະຕັນຫາອັນໜ້າອັບອາຍ ພວກຜູ້ຍິງກໍປ່ຽນການສັມພັນຕາມທັມຊາດໃຫ້ຜິດທັມຊາດໄປ.

ຂໍ້ 28 ເຂົາບໍ່ເຫັນດີທີ່ຈະຮັບຮູ້ພຣະເຈົ້າພຣະອົງຈຶ່ງຊົງປ່ອຍໃຫ້ເຂົາມີໃຈຊົ່ວ ແລະເຮັດສິ່ງທີ່ບໍ່ສົມຄວນ. ຮູບພາບໃນທີ່ນີ້ເຫັນໄດ້ວ່າພຣະເຈົ້າຊົງປ່ອຍໃຫ້ພວກເຂົາເດີນຕາມທາງທີ່ຈະໄປສູ່ຄວາມຫາຍະນະ ຄືສູ່ບຶງໄຟນະຣົກ.

ຂໍ້ 25 ພວກເຂົາປ່ຽນຄວາມຈິງຂອງພຣະເຈົ້າມາເປັນຄວາມບໍ່ຈິງ. ພວກເຂົານະມັສການແລະບົວຣະບັດສິ່ງທີ່ພຣະອົງຊົງສ້າງໄວ້ນັ້ນ. ໂ ປໂລຈຶ່ງໄດ້ບັລຍາຍໄວ້ໃນຂໍ້ທີ 29-31 ວ່າ ພວກເຂົາເຕັມໄປດ້ວຍການອະທັມທຸກຢ່າງ, ການຊົ່ວຮ້າຍ, ຄວາມໂລບ, ຄວາມປອງຮ້າຍ, ເຕັມໄປດ້ວຍຄວາມເຫິງສາ, ການຂ້າຟັນ, ການວິວາດ, ການລໍ້ລວງ, ການຜູກພະຍາບາດ, ການສັບສໍ່, ການເວົ້ານິນທາ, ການກຽດຊັງພຣະເຈົ້າ, ຂີ້ອົ່ງ ໝິ່ນປມາດ, ຈອງຫອງ, ອວດຕົວ,ປະດິດຄິດແຕ່ງການຊົ່ວຂື້ນ.................. ແຕ່ໃນຂໍ້ 32 ລາວກ່າວວ່າຄົນເຮັດຢ່າງນີ້ສົມຄວນທີ່ຈະຕາຍ.

## 2. <u>ຂ່າວຮ້າຍນັ້ນຊໍ້າພັດໜັກໜ່ວງໄປກ່ວາເກົ່າ:</u> ( 2:1-11 )

ບັດນີ້ໂປໂລໄດ້ຫັນມາຫາຄົນຢິວພວກທີ່ມັກຕິຕຽນຜູ້ອື່ນ. ເປັນຫຍັງຈຶ່ງວ່າຂ່າວຮ້າຍທີ່ໜັກໄປກ່ວາເກົ່າ? ກໍເພາະວ່າພວກເຂົາເປັນຊົນຊາດພິເສດທີ່ພຣະເຈົ້າຊົງເລືອກສັນໄວ້ແລ້ວ, ພວກເຂົາມີກົດບັນຍັດຂອງພຣະເຈົ້າ, ພວກເຂົາມີ

ທັມມະທຽມທີ່ນັບຖືພຣະເຈົ້າມາແລ້ວ ແລະພວກເຂົາກໍມີພຣະເຈົ້າຊຶ່ງເປັນພຣະເຈົ້າທີ່ທ່ຽງແທ້ຢູ່ແລ້ວ. ເມື່ອມີດັ່ງນີ້ແລ້ວກໍມັກຈະເບິ່ງຄົນອື່ນວ່າພຣະເຈົ້າຕ້ອງລົງໂທດເຂົາ. ໂປໂລຈຶ່ງກ່າວວ່າ ເມື່ອຄົນຢິວໄປຕັດສິນຄົນອື່ນ ຕັດສິນຄົນຕ່າງຊາດກໍເໝືອນພວກເຂົາກໍາລັງທໍາຮ້າຍຕົວເອງ ເພາະວ່າພວກເຂົາກໍເຮັດຢ່າງດຽວກັນກັບຄົນອື່ນ.

ຂໍ້ 6-10 ການກະທໍາຂອງແຕ່ລະຄົນ ພຣະອົງຈະຊົງຕອບສນອງໃຫ້ສະສົມແຕ່ໃນຂໍ້ທີ 9 ບໍ່ວ່າສິ່ງໃດຈະເກີດກໍຕາມມັນຈະຕ້ອງເກີດແກ່ຊາວຍິວກ່ອນ ແລະຕາມມາຈຶ່ງຈະແມ່ນຄົນຕ່າງຊາດ.

ໂປໂລຍັງເຕືອນອີກວ່າ ຖ້າພວກເຮົາຫາກຖືວ່າຕົນເອງເປັນຄົນຖືສາສນາ ເປັນຄົນເຫັນແກ່ຕົວ ແລະບໍ່ເບິ່ງສິ່ງຕ່າງໆທີ່ຢູ່ອ້ອມຂ້າງຂອງພວກເຮົາ, ພວກເຮົາກໍເປັນຄົນບາບທີ່ໜັກກວ່າໃຜທັງນັ້ນ. ຖືກຕ້ອງ, ພວກເຮົາບໍ່ໄດ້ເປັນຄົນຂ້າຄົນ, ພວກເຮົາບໍ່ໄດ້ປຸ້ນທະນາຄານ ຊຶ່ງເປັນບາບທີ່ໃຫຍ່ໂຕ ແຕ່ພວກເຮົາກໍໄດ້ຖືກສອນມາວ່າຢ່າລັກຊັບ ຢ່າຫລິ້ນຊູ້ ຢ່ານັບຖືພຣະທຽມ ຢ່າອວດອ້າງ ຢ່ານິນທາ ພວກເຮົາຈະຖືກປາກົດຕໍ່ບັນລັງຂອງພຣະອົງແລ້ວຈະຖືກຕັດສິນ. ແມ່ນວ່າຈະນັ່ງຢູ່ໃນໂບດພວກເຮົາກໍຈໍາເປັນຕ້ອງຍອມຮັບ.

ເປັນທີ່ເຂົ້າໃຈກັນດີແລ້ວວ່າ ຄົນບາບທຸກຄົນຈະຕ້ອງໄດ້ຮັບຜົນຕອບແທນຢ່າງສະສົມ. ແຕ່ຕ້ອງເຂົ້າໃຈອີກວ່າຄົນຜູ້ທີ່ຖືຕົວເອງວ່າເປັນຄົນຖືສາສນາຢ່າງເຄັ່ງຄັດນັ້ນ ກໍາລັງຢູ່ໃນພຣະພິໂຣດຂອງພຣະເຈົ້າ. ຖ້າພວກເຮົາຫາກຮູ້ວ່າ ພຣະເຈົ້າມີພຣະປະສົງໃດກັບເຮົາ ແຕ່ເຮົາບໍ່ເຊື່ອຟັງ. ນັ້ນລະຄືບາບໃຫຍ່ທີ່ໜັກໜ່ວງທີ່ສຸດ.

## 3. <u>ຂ່າວຮ້າຍນັ້ນມີຢູ່ທົ່ວໆໄປ:</u> (2:12-13)

ມະນຸດທຸກຄົນເປັນຄົນບາບ ໝົດຄວາມຫວັງແລະຕົກຢູ່ໃນພຣະພິໂຣດຂອງພຣະເຈົ້າ. ບາງຄົນກໍຍອມຮັບວ່າເຂົາບໍ່ຮູ້ພຣະຄັມພີແລະບໍ່ຮູ້ພຣະບັນຍັດ, ຮູ້ພຽງແຕ່ວ່າທັມຊາດແລະກໍມີຜິດມີຖືກ ແລະກໍຈະຕ້ອງມີການຕັດສິນພິພາກສາດ້ວຍ. ບາງຄົນຊໍ້າພັດຍອມຮັບວ່າພວກເຮົາຮູ້ນໍ້າພຣະທັຍຂອງພຣະເຈົ້າວ່າພຣະອົງຕ້ອງການຫຍັງຈາກພວກເຮົາ. ພວກເຮົາໄດ້ອ່ານພຣະຄັມພີ ພວກເຮົາຮູ້ພຣະບັນຍັດ 10 ປະການ ແລະພຣະວິນຍານບໍຣິສຸດນໍາພາພວກເຮົາໄປໃນທາງທີ່ຖືກຕ້ອງ. ແຕ່ພວກເຮົາກໍຍັງເຮັດຕາມໃຈຂອງຕົວເອງແຕ່ຫວັງວ່າພຣະເຈົ້າຈະອະພັຍໃຫ້ເພາະພວກເຮົາເປັນລູກຂອງພຣະອົງ. ໃນກໍຣະນີນີ້ ຢ່າລືມວ່າທັງຄົນທີ່ຮູ້ພຣະຄັມພີແລະຄົນບໍ່ຮູ້ ແນ່ນອນຕ້ອງຖືກພຣະພິໂຣດຂອງພຣະເຈົ້າຢ່າງບໍ່ມີການຫລີກເວັ້ນ.

ຄວາມບາບໄດ້ແກ່ດຶງ, ຊັກຊວນ, ຫລອກລວງໃຫ້ມະນຸດທຸກຄົນກະທໍາຕາມມັນ. ພວກເຮົາບໍ່ມີຄວາມຫວັງຫຍັງໝົດຖ້າພວກເຮົາຫາກຈໍານົນຕົວຕໍ່ຄວາມບາບ ພວກເຮົາຈໍາເປັນຕ້ອງຕົກຢູ່ໃນພຣະພິໂຣດຂອງພຣະເຈົ້ານີ້ຄື ກັບຄໍາວ່າຂ່າວຮ້າຍທີ່ຮ້າຍແຮງແລະມີຢູ່ທົ່ວໆໄປ.

## 4. <u>ຂ່າວດີທີ່ດີກວ່າທຸກຢ່າງ (ຂ່າວປະເສີດ)</u>

ເມື່ອເວົ້າເຖິງຂ່າວຮ້າຍມາຫລາຍແລ້ວ ໃນທີ່ສຸດ, ພວກເຮົາກໍມາເຖິງຂ່າວດີ. ແນ່ນອນຂ່າວດີຈະຕ້ອງດີກວ່າຂ່າວຮ້າຍສເມີ. ແຕ່ໃນໂລກຂອງເຮົານີ້ ຂ່າວດີອາດຈະບໍ່ລົບເລືອນຂ່າວຮ້າຍຕລອດໄປເຊັ່ນ: ທະນາຍຄວາມຄົນນຶ່ງບອກລູກຄ້າຂອງເຂົາວ່າ "ຂ່າວຮ້າຍກໍຄືວ່າ ເລືອດຂອງເຈົ້າມັນຖືກຕ້ອງກັບເລືອດທີ່ຢູ່ໃນເຫດການທັງໝົດ, ແຕ່ຂ່າວດີນັ້ນກໍຄືວ່າ ໄຂມັນໃນເສັ້ນເລືອດຂອງເຈົ້າຫລຸດລົງແລ້ວ"

ຂ່າວຮ້າຍແລະຂ່າວດີບໍ່ສອດຄ່ອງກັນເລີຍແມ່ນບໍ່? ຂ່າວຂອງພຣະເຈົ້າຄືຂ່າວປະເສີດ ຊຶ່ງເປັນຂ່າວທີ່ເໜືອຂ່າວໃດໆທັງໝົດໃນໂລກນີ້. ຄືພຣະເຈົ້າໄດ້ສໍາແດງຄວາມຊອບທັມຂອງພຣະອົງຕໍ່ທຸກໆຄົນ ທັງຄົນຢິວແລະຄົນຕ່າງຊາດ

ດ້ວຍ. ໂຣມ 1: 16-18

**<u>ຄຳແນະນຳແລະພາກປະຕິບັດ:</u>**

- ຢ່າໄດ້ເຫັນຕົວເອງວ່າເປັນຄົນທີ່ໝົດຄວາມຫວັງ
- ຈົ່ງເຫັນຂ່າວດີຫລືຂ່າວປະເສີດຂອງພຣະເຈົ້າວ່າເປັນຄວາມຈິງ ແລະຈົ່ງຂອບພຣະຄຸນພຣະເຈົ້າ

**<u>ຄຳຖາມ</u>**

1. ຈະອະທິບາຍພຣະພິໂຣດຂອງພຣະເຈົ້າຢ່າງໃດ?

2. ຈະຮູ້ໄດ້ຢ່າງໃດ ວ່າອັນໃດເປັນພຣະພິໂຣດຂອງພຣະເຈົ້າ ແລະອັນໃດເປັນທັມມະຊາດ?

3. ທ່ານຄິດຢ່າງໃດກ່ຽວກັບທີ່ວ່າພຣະເຈົ້າຊົງປ່ອຍໃຫ້ເຂົາທຳລາຍຕົວເອງ? ໂຣມ 1:24,26 ແລະ 28

4. ທ່ານເຄີຍຕັດສິນຜູ້ອື່ນບໍ່? ບໍ່ວ່າເຂົາຈະເປັນຜູ້ທີ່ຖືສາສນາຫລືບໍ່ຖືກໍຕາມ.

5. ແມ່ນຫຍັງຄືສິ່ງທີ່ຮ້າຍທີ່ສຸດໃນສາຍພຣະເນດຂອງພຣະເຈົ້າ? (ລາມົກຕາມຣາຄະຕັນຫາ, ອິດສາ, ນິນທາ)

6. ທ່ານຄິດຢ່າງໃດກ່ຽວກັບສາສນາສາດທີ່ກ່າວວ່າ "ເຂົາເອົາສງ່າຣາສີຂອງພຣະເຈົ້າ ມາແລກກັບມະນຸດທີ່ຕ້ອງຕາຍ, ຫລືຮູບນົກຮູບສັດ"

*ສຈ. ດຣ. ບຸນໂຣມ ພົມມະຈັນ*

## ບົດຮຽນທີ 3
## ບໍ່ແມ່ນວ່າດີ ແລ້ວກໍພໍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 2:17-29

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຣມ 2:17-3:20

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມສັມພັນກັບພຣະເຈົ້າທີ່ຖືກຕ້ອງ ຈຳເປັນຕ້ອງມີຄວາມສັມພັນທາງໃຈທີ່ເຫນືອກວ່າການກະທຳພິທີທາງສາສນາທາງເປືອກນອກ.

**ຄຳຖາມເພື່ອສຳຣວດ:** ທ່ານພໍຈະໃຈ້ແຍກໄດ້ບໍ່ວ່າສາສນາກິດ, ສາສນາຮູບນອກ, ສາສນາພິທີ ຫລືປະຕິບັດດ້ວຍຄວາມສັມພັນກັບພຣະເຈົ້າຢ່າງແທ້ຈິງ.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄຈ້ແຍກໃຫ້ເຫັນວ່າ ແມ່ນວ່າຈະຊອກສແວງຫາພຣະເຈົ້າດ້ວຍວິທີໃດກໍແລ້ວແຕ່ທ່ານຈະບໍ່ພົບເດັດຂາດ ຫາກທ່ານບໍ່ມີຄວາມສັມພັນກັບພຣະເຈົ້າຢ່າງຖືກຕ້ອງເສັຽກ່ອນ

**ເນັ້ນຫນັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ແບ່ງປັນຂ່າວປະເສີດແກ່ທຸກຄົນ
- ເຊື່ອຟັງແລະຮັບໃຊ້ອົງພຣະເຢຊູ ບໍ່ວ່າຈະເປັນທາງຮ່າງກາຍ, ທາງຈິດວິນຍານ ແລະທາງຄວາມຮູ້ສຶກ
- ເສີມສ້າງທຸກຄົນໃຫ້ກາຍເປັນຜູ້ນຳທີ່ໃຊ້ການໄດ້
- ທຸກຄົນເປັນພຣະລັກສະນະຂອງພຣະເຈົ້າ ມີຄຸນຄ່າເທົ່າທຽມກັນຫມົດທຸກຄົນ

### ຄຳນຳ

ນີ້ຄືຄຳຖາມທີ່ພວກເຮົາບໍ່ມັກໄດ້ຍິນເລື້ອຍປານໃດ : ທ່ານເປັນຄົນນັບຖືສາສນາຢ່າງໃດ? ການສຳຣວດຢັ່ງສຽງຄົນອະເມຣິກາທັງຫມົດແລ້ວເຫັນວ່າ ຄົນອະເມຣິກາເປັນຄົນທີ່ນັບຖືສາສນາ. ເກົ້າໃນສິບຈະເຊື່ອວ່າມີພຣະເຈົ້າບໍ່ວ່າຈະຢູ່ໃນຮູບໃດກໍຕາມ. ຫົກສິບເປີເຊັນແມ່ນພວກທີ່ອະທິຖານທຸກໆວັນ. ຫ້າສິບເປີເຊັນແມ່ນເວົ້າວ່າສາສນາມີຄວາມສຳຄັນໃນຊີວິດຂອງພວກເຂົາ. ນີ້ກໍບໍ່ໄດ້ຫມາຍຄວາມວ່າພວກເຂົາຈະເຂົ້າໃຈພຣະເຈົ້າແລະເຊື່ອໃນການກະທຳຂອງຄຣິສຕຽນ. ແຕ່ມັນກໍໄດ້ບົ່ງຊີ້ໃຫ້ເຫັນວ່າຄົນອະເມຣິກາເປັນຄົນນັບຖືສາສນາ.

ຕົວທ່ານເອງກໍເຫມືອນກັນ ເມື່ອຖືກຖາມ ທ່ານກໍຈະຕອບວ່າ ທ່ານເປັນຄົນທີ່ນັບຖືສາສນາເຫມືອນກັນ. ທ່ານອ່ານພຣະຄັມພີ, ທ່ານໄປໂຮງຮຽນວັນອາທິດ ແລະເຮັດທຸກຢ່າງທີ່ຄົນນັບຖືສາສນາເຂົາເຮັດກັນ. ສຳລັບຂ້າພະເຈົ້າແລ້ວຂ້າພະເຈົ້າໄປໂບດຕັ້ງແຕ່ແມ່ຂອງຂ້າພະເຈົ້າຍັງຖືພາຢູ່. ພໍ່ຂອງຂ້າພະເຈົ້າເປັນນັກເທດ, ຂ້າພະເຈົ້າເຕີບໃຫຍ່ຂຶ້ນໃນໂບດ, ຜ່ານໂຮງຮຽນພຣະຄຣິສຕະທັມຄັມພີ, ຖວາຍຫລາຍກວ່ານຶ່ງສ່ວນສິບປະກອບສ່ວນໃນພິທີທາງສາສນາຕ່າງໆ.

ບາງຄັ້ງທ່ານອາດຈະໄດ້ໃຫ້ຄຳພະຍານເຖິງການນັບຖືສາສນາຂອງທ່ານ. ທ່ານໄດ້ຜ່ານການຮັບສິນບັບຕິສມາ, ທ່ານມີຫ້ອງຮຽນທີ່ຈະສອນແລະນະມັສການພຣະເຈົ້າຢ່າງເຄັ່ງຄັດ ແລະທຳງານໃຫ້ກັບພຣະເຈົ້າ. ຖ້າມີຄົນຖາມທ່ານ ໆ ກໍຈະບອກວ່າທ່ານເປັນຄົນທີ່ນັບຖືສາສນາ.

ແຕ່ກໍຫນ້າເສັຽໃຈ ສິ່ງທັງຫມົດເຫລົ່ານີ້ຍັງບໍ່ທັນພຽງພໍ............

## 1. ບັນຫາທີ່ເຂົ້າໃຈວ່າຕົວເອງຈະໄດ້: (2:17-24)

ໂປໂລໄດ້ກ່າວແກ່ພວກຍິວທີ່ນັບຖືສາສນາວ່າ ພວກທີ່ມີບັນຫາແມ່ນພວກທ່ານເອງ. ພວກເຈົ້າອວດວ່າຕົວເອງມີພຣະເຈົ້າ ແລະຮູ້ຈັກນ້ຳພຣະທັຍຂອງພຣະເຈົ້າດີ. ພວກເຈົ້າໄດ້ຮຽນຮູ້ແລະຮູ້ຈັກພຣະບັນຍັດ ແລະຖືວ່າຕົວເອງເປັນຄົນນຳທາງເພື່ອໃຫ້ຄົນທັງຫລາຍຮູ້ຈັກພຣະບັນຍັດຂອງພຣະເຈົ້າ.

ພິເສດສຸດ ກໍຄືທ່ານຈະນຳຄົນຕາບອດທ່ານຈະຕ້ອງເປັນແສງສະວ່າງໃຫ້ແກ່ພວກເຂົາ. ທ່ານຢາກຈະເປັນຄຣູສອນທ່ານຈຳເປັນຕ້ອງສອນຕົວເອງເສັຍກ່ອນ. ໃນນີ້ ໂປໂລອາດຈະເນັ້ນວ່າການກະທຳຈຳເປັນຕ້ອງເຮັດໃຫ້ພວກເຂົາເຫັນ. **ການສອນດີ ແຕ່ຖ້າການປະຕິບັດບໍ່ດີຈະໃຊ້ການໄດ້ຢ່າງໃດ.** ຂໍ້ທີ 21-22 ໂປໂລກ່າວຢ່າງແຂງຂັນວ່າ ຢ່າລັກຊັບ, ຢ່າຫລິ້ນຊູ້, ຢ່າປຸ້ນພຣະວິຫານ ເປັນຫຍັງໂປໂລຈຶ່ງກ່າວສິ່ງນີ້ອອກມາ ບາງເທື່ອລາວອາດຈະໄດ້ຍິນບາງຢ່າງກ່ຽວກັບພວກນີ້ແຕ່ພວກເຮົາບໍ່ຮູ້. (2:21-22) ຄຳເວົ້ານີ້ມັນຈະໄປຕຳພວກທີ່ສອນປອມ ພວກຫນ້າໄຫວ້ຫລັງຫລອກ ພວກທີ່ມັກສອນແຕ່ຕົວເອງບໍ່ປະຕິບັດ.

ບັນຫາກໍຄືວ່າ ຄິດວ່າຕົວເອງຈະໄດ້ແຕ່ພວກເຂົາບໍ່ເຊື່ອຟັງ. ພວກເຮົາຕ້ອງຣະມັດຣະວັງໃຫ້ດີ ໂປໂລບໍ່ເຄີຍມີບັນຫາກັບພວກຍິວເພາະຕົວລາວເອງກໍເປັນຄົນຍິວເຫມືອນກັນ. ເພາະການຫນ້າໄຫວ້ຫລັງຫລອກນັ້ນມັນຈະມີຜົນສະທ້ອນໄປເຖິງຄົນຕ່າງຊາດດ້ວຍ ແລະກໍຈະເຮັດໃຫ້ເສື່ອມເສັຽກຽດແລະສັກສີຂອງພຣະເຈົ້າ, ຄືເຂົາຈະຫມິ່ນປມາດພຣະເຈົ້າ.

## 2. ເມື່ອໃດການນັບຖືສາສນາຫາກຜິດພາດ (2:25-27)

ເມື່ອໂປໂລກ່າວເຖິງການນັບຖືສາສນາຂອງພວກຍິວ ແມ່ນເປັນເຣື່ອງຍືດຍາວແລະເຣື່ອງເກົ່າແກ່ ຊຶ່ງກ່າວເຖິງກົດຣະບຽບທີ່ມາຈາກສມັຍອັບຣາຮາມ. ພິທີຕັດຫມາຍເຖິງຄົນນັ້ນຈະໄດ້ເຂົ້າຮ່ວມໃນພັນທະສັນຍາຂອງອິສຣາເອນ. ຄົນຍິວຈະຮັບປະກັນວ່າຖ້າຜູ້ໃດໄດ້ເຂົ້າຮ່ວມໃນພິທີຕັດແລ້ວເຂົາຈະໄດ້ຮັບພຣະພອນຢ່າງແນ່ນອນ. ພວກເຂົາເຂົ້າໃຈວ່າຖ້າເຂົ້າພິທີຕັດແລ້ວຄົນນັ້ນຈະບໍ່ຫລົງຫາຍ ແຕ່ຄົນທີ່ບໍ່ແມ່ນຍິວຈະບໍ່ມີໂອກາດຈັກເທື່ອ. ໂປໂລຈຶ່ງມາປີ້ນຄຳເວົ້າວ່າຄວາມເຊື່ອແຕ່ປາກແລະບໍ່ເຊື່ອຟັງເປັນອັນຕະລາຍຫລາຍຕໍ່ຄວາມລອດພົ້ນ ແຕ່ຖ້າຜູ້ໃດເຊື່ອຟັງພຣະເຈົ້າພຣະອົງຈະນຳຄວາມລອດພົ້ນມາສູ່ຜູ້ນັ້ນ. ພິທີຕັດບໍ່ໄດ້ຮັບປະກັນຄວາມລອດພົ້ນ ແລະບໍ່ໄດ້ພົ້ນຈາກພຣະພິໂຣດຂອງພຣະເຈົ້າເລີຍ.

ດັ່ງນັ້ນຈຶ່ງເວົ້າໄດ້ວ່າ ພວກເຂົາປະຕິບັດສາສນາກິດແບບຜິດພາດ. ແນ່ນອນການເປັນຄຣິສຕຽນຕ້ອງມີຫລາຍສິ່ງຫລາຍຢ່າງທີ່ຈະຕ້ອງໄດ້ເຮັດ ເຊື່ອຟັງພຣະເຈົ້າ, ຮັບສິນບັບຕິສະມາ, ຮັບສິນມະຫາສນິດ ດັ່ງນີ້ເປັນຕົ້ນ. ການຮັບສິນອາບນ້ຳ ມຸດນ້ຳຄ້າຍຄືປາແຕ່ຈະເຮັດໃຫ້ເຮົາເປັນປາບໍ່ໄດ້, ເຮົາອາດຈະມີຊື່ຢູ່ໃນໂບດ ການມີຊື່ໃນໂບດແມ່ນດີແທ້ແຕ່ເຮົາຈະເປັນຄຣິສຕຽນບໍ່ໄດ້ ສິ່ງເຫລົ່ານັ້ນຈະເຮັດໃຫ້ເຮົາລອດພົ້ນບໍ່ໄດ້. ພຣະເຈົ້າບໍ່ໄດ້ຮຽກຮ້ອງໃຫ້ເຮົາມາທຳພິທີ ແຕ່ພຣະອົງຊົງຮຽກເອີ້ນພວກເຮົາມາເພື່ອຄວາມຊອບທັມ.

**3. ເຈາະເຖິງຫມາກຫົວໃຈ:** (2:28-29)

ພຣະເຈົ້າຊົງຮຽກເອີ້ນໃຫ້ມາເປັນຄົນຊອບທັມ ແມ່ນໃຫ້ເປັນຄົນທີ່ເຊື່ອຟັງຮ້ອຍເປີເຊັນ. ຢ່າງໃດກໍຕາມພວກທີ່ນັບຖືສາສນາທີ່ຂ້າພະເຈົ້າຮູ້ຈັກຜ່ານມາບໍ່ມີຜູ້ໃດສາມາດປະຕິບັດໄດ້ຮ້ອຍເປີເຊັນ. ອາດຈະປະຕິບັດໄດ້ໃນພິທີສາສນາ ແຕ່ຄວາມຊອບທັມແມ່ນປະຕິບັດບໍ່ໄດ້. ເພາະພວກເຮົາກໍຮູ້ແລ້ວວ່າບໍ່ມີຜູ້ໃດຄົບຖ້ວນ ແລະບໍຣິບູນເລີຍ.

ບົດເພງຂອງຄົນຕຣີຣ໊ອກ ຊຶ່ງເປັນບົດເພງໃຫມ່ໆ ຊື່ວ່າ: "ບໍ່ມີຜູ້ໃດຄົບຖ້ວນຫມົດດອກ" ຖືກແລ້ວ ພວກເຂົາເວົ້າຖືກແລ້ວບໍ່ມີຜູ້ໃດທີ່ຄົບຖ້ວນ ແລະຕາມທັມຊາດແລ້ວພວກເຮົາທຸກຄົນກໍບໍ່ຄົບຖ້ວນຈັກຄົນ.

ຂ້າພະເຈົ້າຂໍສາຣະພາບວ່າ ເວລາຟັງອາຈານເທສນາຂ້າພະເຈົ້າກໍຖ່ອມຕົວຟັງຢ່າງຣະມັດຣະວັງ ຈະປະຕິບັດຕາມຄໍາສັ່ງສອນຂອງພຣະອົງທຸກຢ່າງ ແຕ່ເມື່ອສິບນາທີຜ່ານໄປຂ້າພະເຈົ້າກໍຢາກໄດ້ເຮືອລໍາໃຫຍ່, ແລະກໍຄິດຢາກແກ້ແຄ້ນຄົນທີ່ເຂົາເຄີຍກະທໍາແກ່ຂ້າພະເຈົ້າ. ຄວາມຊອບທັມຫາຍໄປແລ້ວອອກປະຕູໄປແລ້ວ.

ໂປໂລເວົ້າເຣື່ອງສາສນາເປືອກນອກວ່າມັນບໍ່ໄດ້ຊ່ວຍຫຍັງໃຫ້ດີຂຶ້ນເລີຍ ຈົນກ່ວາພຣະວິນຍານບໍຣິສຸດຈະເຈາະເຂົ້າມາຢູ່ໃນຫົວໃຈຂອງເຮົາຢ່າງທ່ອງແທ້. ນັ້ນຄືຄວາມສັມພັນທາງຈິດໃຈ.

**4. ພຣະເຈົ້າຍັງຊົງສັດຊື່ແລະທ່ຽງທັມ:** (3:1-20)

ຜົນປໂຍດສໍາລັບຄົນທີ່ໃຫ້ຄວາມສໍາຄັນແກ່ພຣະເຈົ້າ ແລະບໍ່ແມ່ນທົ່ວໄປຕາມທັມຊາດ. ຕົວຢ່າງຄົນອິສຣາເອນ, ພວກເຂົາຮູ້ເຣື່ອງຂອງພຣະເຈົ້າ ພວກເຂົາໄດ້ຮັບພຣະບັນຍັດຈາກພຣະເຈົ້າແລະຮູ້ວ່າພຣະເຈົ້າຊົງນໍາພວກເຂົາໃຫ້ມາເປັນຜູ້ນໍາທາງສາສນາ.

ບັນຫາກໍຄືວ່າ ພວກອິສຣາເອນບໍ່ເຊື່ອໃນກົດບັນຍັດຂອງພຣະເຈົ້າ. ພຣະເຈົ້າຍັງສັດຊື່ແຕ່ອິສຣາເອນບໍ່ສັດຊື່ ພຣະຄຸນກໍຍັງມີຢູ່ເຖິງແມ່ນວ່າພວກເຮົາຈະບໍ່ຊອບທັມກໍຕາມ. ຈົ່ງເຂົ້າໃຈເຖີດວ່າ ບໍ່ວ່າເຮົາຈະກະທໍາສິ່ງໃດກໍແລ້ວແຕ່ພຣະເຈົ້າຍັງສືບຕໍ່ຢາກມີຄວາມສັມພັນກັບພວກເຮົາຕລອດເວລາ.

ເສັຍໃຈ, ພວກເຮົາທຸກຄົນເປັນຄົນບາບ. ບໍ່ວ່າຈະເປັນຍິວຫລືຕ່າງຊາດ, ຜູ້ຍິງຫລືຜູ້ຊາຍ, ຮັ່ງມີຫລືທຸກຈົນທຸກຄົນຫ່າງຈາກຣັສມີຂອງພຣະເຈົ້າ. ບໍ່ມີຜູ້ໃດຄົບຖ້ວນ. ພຣະເຈົ້າເທົ່ານັ້ນຈະເຮັດໃຫ້ພວກເຮົາຄົບຖ້ວນໄດ້. ບໍ່ແມ່ນທາງພິທີໃດພິທີນຶ່ງ ແຕ່ໂດຍທາງສັມພັນກັບພຣະເຈົ້າດ້ວຍຈິດໃຈ.

**ຄໍາແນະນໍາແລະພາກປະຕິບັດ:**

- ✓ ພວກເຮົາເປັນຄົນນັບຖືສາສນາ. ຂອບພຣະຄຸນສາສນາຍັງໄດ້ສືບທອດຈາກລຸ້ນເກົ່າມາເຖິງພວກເຮົາສມັຍນີ້ ແລະພວກເຮົາກໍຈະໄດ້ຖ່າຍທອດລົງໄປຫາລຸ້ນລູກຫລານເຫລັນຕໍ່ໆໄປ.
- ✓ ແຕ່ຖ້າຈະເບິ່ງເຖິງຫົວໃຈແລ້ວ ການປະຕິບັດຕ່າງໆ ຍັງບໍ່ທັນພຽງພໍ. ສໍາຄັນກໍແມ່ນຄວາມສັມພັນກັບພຣະເຈົ້າ ແລະການປ່ຽນແປງຂອງຫົວໃຈ.

- ✓ ຈະມີຄວາມສັມພັນກັບພຣະເຈົ້າກໍຕໍ່ເມື່ອເຮົາເຊື່ອໃນພຣະເຢຊູຄຣິດ  ພຣະອົງເທົ່ານັ້ນຈຶ່ງຈະສາມາດ ປ່ຽນທາງໃນຂອງພວກເຮົາໄດ້.

<u>ຄໍາຖາມ:</u>

1. ການປະຕິບັດສາສນາກິດຂອງພວກເຮົາມີຫຍັງແດ່? ການປະຕິບັດສິ່ງເຫລົ່ານີ້ເຮັດໃຫ້ພວກເຮົາມີຄວາມສັມພັນທີ່ຖືກຕ້ອງກັບພຣະເຈົ້າຫລືບໍ່?

2. ໂປໂລໝາຍຄວາມວ່າຢ່າງໃດ? ເມື່ອລາວເວົ້າວ່າການຮັບພິທີຕັດແທ້ນັ້ນຄືການຮັບທາງຈິດໃຈຊຶ່ງເປັນໄປຕາມພຣະວິນຍານ

3. ຖ້າຢ່າງນັ້ນການເປັນສະມາຊິກໂບດເດສໍາຄັນບໍ່? ຫລືວ່າຈະຮັບເຊື່ອແບບບໍ່ມີໂບດກໍໄດ້

4. ແມ່ນຫຍັງຄືການປະຕິບັດສາສນາກິດທີ່ຖືກຕ້ອງໃນຄວາມສັມພັນກັບພຣະເຈົ້າ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 4
# ນີ້ຄືສິ່ງທີ່ພວກເຮົາຈະແກ້ໄຂໄດ້

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຣມ 3:21=31

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ໂຣມ 3:21-31

**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຈົ້າໄດ້ຊົງຈັດຕຽມເສັ້ນທາງລອດພົ້ນໃຫ້ແກ່ພວກເຮົາທຸກໆຄົນຄືທາງຂອງພຣະເຢຊູຄຣິດໂດຍທາງຄວາມເຊື່ອ

**ຄໍາຖາມເພື່ອສໍາຣວດ:** ຄົນທັງຫລາຍຈະອອກຈາກສິ່ງບໍ່ດີທີ່ພວກເຂົາ, ພວກເຮົາ,ໄດ້ກະທໍາມາຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ຄົນທັງຫລາຍໄດ້ພິຈາຣະນາວ່າ ຄວາມລອດພົ້ນເປັນມາຢ່າງໃດ ຫລືຢືນຢັນແລ້ວຢືນຢັນອີກວ່າພຣະເຢຊູຄຣິດໄດ້ທໍາງານໃນຕົວເຮົາຢ່າງໃດ?

**ເນັ້ນໜັກເຖິງການສຶກສາແລະການກະທໍາ**

- ຢັ້ງຢືນວ່າພຣະທັມຄັມພີມີອໍານາດໃນການນໍາພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໃຫຍ່ ເຄື່ອນໄຫວໃນຄວາມເຊື່ອ
- ໜູນໃຈຄອບຄົວຄຣິສຕຽນໃຫ້ມີສຸຂພາບດີ
- ທຸກຄົນທີ່ຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າມີຄຸນຄ່າເທົ່າທຽມກັນ

## ຄໍານໍາ

ທຸກຄົນຕ້ອງຕົກຕະລຶງໂລດ ເມື່ອມາເຖິງຄໍາທີ່ວ່າຄວາມຊອບທັມຕໍ່ພຣະພັກຂອງພຣະເຈົ້າ. ໂປໂລໄດ້ເວົ້າຢ່າງຈະແຈ້ງໃນໂຣມ 1:18-3:20. ໂປໂລບໍ່ມີຄໍາທີ່ຈະອ້ອມຄ້ອມໃດໆອີກແລ້ວ, ລາວກ່າວແບບກົງໄປກົງມາໂລດວ່າບໍ່ວ່າຈະເປັນຄົນຢິວຫລືຄົນຕ່າງຊາດ ພວກເຮົາຕົກຢູ່ໃນພຣະພິໂຣດຂອງພຣະເຈົ້າ. ພວກເຮົາຍັງມີຄວາມຫວັງຢູ່ບໍ? ຖ້າວ່າຍັງມີຄວາມຫວັງຢູ່, ພວກເຮົາຈະພົບຢູ່ທີ່ໃດ ເພື່ອຈະຫລີກເວັ້ນຈາກຄວາມຫາຍະນະນັ້ນ?

ພວກເຮົາຄວນຈະໄປຊອກສແວງຫາພິທີສາສນາຕ່າງໆບໍ? ທໍຣະມານຮ່າງກາຍຕ່າງໆບໍ? ການກະທໍາສິ່ງເຫລົ່ານັ້ນແມ່ນພຣະເຈົ້າຊົງພໍພຣະທັຍແລ້ວບໍ? ເປັນຄວາມຊອບທັມທີ່ຈະປາກົດຕໍ່ພຣະພັກພຣະເຈົ້າແລ້ວບໍ? ຫລືວ່າຕ້ອງປະຕິບັດຕົວເອງເພື່ອໃຫ້ເປັນຄົນຊອບດ້ວຍຕົວເອງບໍ? ຖ້າປະຕິບັດຕົວເອງ ຈະປະຕິບັດຫລາຍສໍ່າໃດຈິ່ງຈະໄດ້ມາຕຖານຄວາມຊອບທັມທີ່ພຣະເຈົ້າຊົງພໍພຣະທັຍ? ຂອບພຣະຄຸນພຣະເຈົ້າ ພຣະອົງໄດ້ຊົງຈັດຕຽມເສັ້ນທາງເພື່ອພວກເຮົາໄວ້ແລ້ວ ພວກເຮົາຈະໄດ້ສຶກສານໍາກັນໃນວັນນີ້.

## 1. ການຊ່ວຍກູ້ໄດ້ປາກົດມາແລ້ວ: (3:21-22)

ໃນໂຣມ 3:20, ໂປໂລ ກ່າວຢ່າງແຈ້ງຂາວແລ້ວວ່າ "ໃນສາຍພຣະເນດຂອງພຣະເຈົ້າບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຄົນຊອບທັມດ້ວຍການເຮັດຕາມພຣະບັນຍັດ." ໝາຍຄວາມວ່າການປະຕິບັດພຣະບັນຍັດຫລືການກະທໍາກໍພົ້ນບໍ່ໄດ້.

ແມ່ນວ່າທ່ານຈະເກີດໃນຄອບຄົວທີ່ດີປານໃດກໍແລ້ວແຕ່, ປະຕິບັດສາສນາກິດມາແຕ່ນ້ອຍກໍຕາມ ຫລືວ່າເກີດໃນປະເທດທີ່ມີຈະຣິຍະທັມສູງກໍຕາມ ທ່ານກໍຍັງບໍ່ໄດ້ຖືວ່າເປັນຄົນຊອບທັມໄດ້ໃນສາຍພຣະເນດຂອງພຣະເຈົ້າ.

ທີ່ນີ້ກໍມາເຖິງຄໍາຖາມທີ່ວ່າ "**ພວກເຮົາຈະລອດພົ້ນໄດ້ຢ່າງໃດ?**" ຂໍ້ທີ 22 ຈະຕອບຄໍາຖາມຂອງພວກເຮົາຄື "...ຄວາມຊອບທັມທີ່ມາຈາກພຣະເຈົ້າ ຊຶ່ງຊົງປະທານແກ່ຜູ້ທີ່ເຊື່ອທຸກຄົນ ດ້ວຍອາສັຍຄວາມເຊື່ອໃນພຣະເຢຊູຄຣິດ ເພາະວ່າຄົນທັງຫລາຍສເມີກັນທຸກຄົນ."

ໃນຄໍາຂຶ້ນຕົ້ນຂອງຂໍ້ທີ 21 ຈະບອກວ່າ "ແຕ່ບັດນີ້ " ຫມາຍຄວາມແຕ່ກ່ອນພວກເຮົາບໍ່ມີຄວາມຫວັງທີ່ຈະລອດໄດ້ ແຕ່ບັດນີ້ຄວາມຊອບທັມທີ່ມາຈາກພຣະເຈົ້າໄດ້ມາເຖິງພວກເຮົາແລ້ວ. ຫລາຍຄົນກໍຮູ້ແຕ່ຫລາຍ ຄົນກໍມັກຈະເຮັດອັນ ໃດອັນນຶ່ງເພື່ອແລກເອົາຄວາມຊອບທັມຂອງພຣະເຈົ້າ.

ໃນພຣະຄັມພີເດີມ (ພຣະບັນຍັດ ແລະ ຜູ້ທໍານວາຍ) ໄດ້ປິດບັງແນວຄິດນີ້ໄວ້, ປັດຈຸບັນນີ້ພຣະທັມຂ່າວປະເສີດທັງ 4 ເຫລັ້ມໄດ້ບັນທຶກໄວ້ທັງຫມົດ ແລະຈຸດສໍາຄັນແມ່ນປາກົດຢູ່ໃນພຣະທັມໂຣມ, ຄວາມເຊື່ອເທົ່ານັ້ນຊຶ່ງເປັນພື້ນຖານຂອງຄວາມລອດພົ້ນ.

ຄວາມເຊື່ອແມ່ນການມອບກາຍແລະໃຈໃຫ້ແກ່ອີກຜູ້ນຶ່ງ. ຕົວຢ່າງ: ຜົວແລະເມັຽ ຜູ້ເປັນເມັຽກໍຕ້ອງໄວ້ວາງໃຈຜົວບໍ່ວ່າຈະນໍາໄປຢ່າງໃດ ບໍ່ວ່າຈະທຸກຫລືຈະຍາກ ຈະລໍາບາກຫລືຂັດສົນ. ສໍາລັບຜູ້ເປັນຜົວກໍຕ້ອງເຊື່ອຫມັ້ນວ່າເມັຽຈະເປັນ ຄູ່ຄອງທີ່ມີຄວາມຮັກ ບໍ່ວ່າເມັຽຈະທໍາອາຫານຢ່າງໃດກໍເຊື່ອວ່າຕ້ອງແຊບຊ້ອຍ ຄົງຈະບໍ່ມີຢາພິດເຈືອປົນເລີຍ.

ເຊື່ອໃນພຣະເຢຊູ ແມ່ນເຫນືອຄວາມຮັບຮູ້ຂອງເຮົາ. ເຮົາໄດ້ມອບຊີວິດໃຫ້ກັບພຣະອົງ, ຢູ່ໃນພຣະຫັດອັນຊົງຣິດຂອງພຣະອົງ ບໍ່ວ່າພຣະອົງຈະຊົງນໍາເຮົາໄປທີ່ໃດ. ເຫມືອນອັບຣາຮາມທີ່ມີຄວາມເຊື່ອ, ຄວາມຊອບທັມຂອງພຣະເຈົ້າຈະມາເຖິງທຸກຄົນທີ່ເຊື່ອໃນພຣະເຢຊູຄຣິດ. (ຂໍ້ 21-22)

## 2. <u>ທຸກຄົນຈະໄດ້ຮັບຄວາມພົ້ນຢ່າງດຽວກັນ:</u> (3:23-25)

ໂຣມ 3:23 ເປັນທີ່ຮູ້ຈັກກັນດີ " ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ" ເມື່ອໄດ້ຟັງພຣະທັມຕອນນີ້ແລ້ວກໍເຫັນວ່າທຸກຄົນແມ່ນຢູ່ໃນເຮືອລໍາດຽວກັນ ທຸກຄົນຈໍາເປັນຈະຕ້ອງໄດ້ຮັບພຣະຄຸນຈາກພຣະເຈົ້າດ້ວຍຄວາມເຊື່ອ. ຂໍ້ 24-25 ເຫດຜົນກໍມີຢູ່ວ່າພຣະເຈົ້າຊົງຖືວ່າເຂົາເປັນຄົນຊອບທັມມີຄວາມເມດຕາກະຣຸນາອັນເຕັມລົ້ນ ພຣະອົງບໍ່ໄດ້ຄິດຄ່າຣາຄາອັນໃດໃນການຊົງໄຖ່ໂດຍພຣະໂລຫິດຂອງພຣະອົງ.

(1) **<u>ຊອບທັມ:</u>** ຄໍາເວົ້ານີ້ເປັນຄໍາເວົ້າທີ່ຖືກຕ້ອງຕາມກົດຫມາຍ. ຫລາຍຄົນມັກຜິດພ້ຽນ ແຕ່ດີແອນເອ **(DNA)** ກໍໄດ້ມີຂຶ້ນ ເພື່ອບໍ່ໃຫ້ຄົນຫລີກລ້ຽງການກະທໍາຜິດ ຫລືບໍ່ກໍໂຍນຄວາມຜິດໄປໃຫ້ຄົນອື່ນ. ອີກແງ່ນຶ່ງກໍຄືວ່າຖ້າເຮົາມີຄວາມສັມພັນໃນພຣະເຈົ້າແລ້ວ ຄວາມຊອບທັມຂອງພຣະເຈົ້າຈະເຮັດໃຫ້ຄວາມຊອບທັມຂອງເຮົາຢຽດຊື່ອອກໄປຕາມທາງຂອງພຣະອົງ.

(2) **<u>ຊົງໄຖ່:</u>** ຄໍາວ່າໄຖ່ແປວ່າແລກປ່ຽນ ຫລືວ່າຊື້ອອກມາເພື່ອໃຫ້ມີເສຣີພາບ. ເມື່ອຄົນຢິວໄດ້ອ່ານຈົດຫມາຍສະບັບນີ້ແລ້ວກໍຄິດເຖິງການໄຖ່ຖອນອອກມາຈາກປະເທດອີຢີບ, ຫລືບໍ່ກໍຄິດເຖິງໂຮເຊຍາທີ່ໄດ້ຊື້ເມັຽຂອງຕົນອອກຈາກການເປັນຂ້າທາດ. ເມື່ອຄົນຕ່າງຊາດອ່ານພວກເຂົາກໍຈະຄິດເຖິງວ່າພວກເຂົາໄດ້ຖືກຊື້ອອກຈາກເຈົ້າຂອງເກົ່າ ແລ້ວເຈົ້າຂອງໃຫມ່ກໍປ່ອຍໃຫ້ພວກເຂົາໄປເປັນເອກຣາດ.

ພຣະເຢຊູຄຣິດເປັນຜູ້ທີ່ສະຖິດໃນສະຖານທີ່ອັນສັກສິດ ໃນພຣະຄຸນອັນພຣບພ້ອມ ພຽງພໍສໍາລັບຄົນບາບທຸກຄົນທີ່ຈະເພິ່ງ ພຣະອົງໄດ້. ໃນພຣະຄັມພີເດີມທີ່ສະຖິດອັນສັກສິດຂອງພຣະເຈົ້າແມ່ນຢູ່ໃນຫ້ອງຊັ້ນໃນ. ແຕ່ປັດຈຸບັນນີ້ແມ່ນຖືກເປີດເຜີຍອອກໃນພຣະເຢຊູຄຣິດ.

ຄົນທີ່ຈະລອດພົ້ນນັ້ນຕ້ອງແມ່ນຄົນທີ່ເຊື່ອໃນພຣະເຢຊູຄຣິດເທົ່ານັ້ນ.

## 3. ຄວາມອົດກັ້ນຂອງພຣະເຈົ້າຕໍ່ຜູ້ທີ່ກະທໍາບາບທັງຫລາຍ: (3: 25-26)

ບາງຄົນເມື່ອອ່ານຈົດຫມາຍຂອງໂປໂລທີ່ຂຽນໄປຫາຊາວກຸງໂຣມແລ້ວ ມັກຢາກວາງຄໍາຖາມວ່າພຣະພິໂຣດຂອງພຣະເຈົ້າຈະມີອີກດົນປານໃດ? ຈະໃຫ້ພວກເຮົາລໍຖ້ານານປານໃດຈຶ່ງຈະເຫັນການລົງໂທດຂອງພຣະອົງ? ເປັນຫຍັງພຣະອົງຈຶ່ງບໍ່ລົງໂທດທັນທີຕໍ່ຜູ້ທີ່ຫມິ່ນປມາດພຣະອົງ ແລະຄົນບາບທັງຫລາຍ?

ການທີ່ພຣະອົງຊົງຊັກຊ້າບໍ່ໄດ້ຫມາຍຄວາມວ່າບາບຍັງບໍ່ທັນຫນັກເທື່ອ, ຫລືວ່າພຣະອົງຍອມຮັບຄວາມບາບ, ບໍ່ແມ່ນດອກ. ຍ້ອນພຣະຄຸນຂອງພຣະອົງງ ຍັງລໍຖ້າຄົນບາບທັງຫລາຍໃຫ້ກັບໃຈ, ພຣະອົງບໍ່ມີພຣະປະສົງຈະໃຫ້ຜູ້ໃດພິນາດ.

ໃນຂ່າວປະເສີດຂອງພຣະເຢຊູ, ພຣະເຈົ້າໄດ້ສໍາແດງພຣະຄຸນ ແລະຄວາມເມດຕາກະຣຸນາ. ພຣະຄຸນແມ່ນຂອງພຣະຣາຊທານຈາກພຣະເຈົ້າ ພວກເຮົາບໍ່ສົມຄວນຈະໄດ້ຮັບແຕ່ພຣະອົງມອບໃຫ້. ຄວາມເມດຕາກະຣຸນາແມ່ນອີກຢ່າງນຶ່ງຄືເວລາເຮົາມີຄວາມບາບພວກເຮົາສົມຄວນຈະຖືກປະຫານຊີວິດ ພວກເຮົາຕ້ອງຕາຍ ແຕ່ຍ້ອນຄວາມເມດຕາກະຣຸນາພຣະອົງໄດ້ລົງມາໄຖ່ພວກເຮົາຄືຕາຍແທນເຮົາ ແລ້ວພຣະພິໂຣດຂອງພຣະເຈົ້າກໍບໍ່ໄດ້ຕົກໃສ່ພວກເຮົາ.

## 4. ພວກເຮົາບໍ່ມີຫຍັງຈະອວດໄດ້: (3:27-31)

ໃນໂຣມບົດ 2:17 ໂປໂລເວົ້າວ່າພວກຢິວໄດ້ພາກັນອວດຕົວວ່າພວກເຂົາເປັນພວກພິເສດທີ່ມີຄວາມສັມພັນກັບພຣະເຈົ້າເພາະວ່າພວກເຂົາຮູ້ຈັກພຣະບັນຍັດດີ ແລະພວກເຂົາກໍອວດວ່າພວກເຂົາເປັນຄົນຊອບທັມ. ແລະພວກເຂົາກໍບໍ່ສົມຄວນທີ່ຈະໂອ້ອວດໃສ່ຄົນຕ່າງຊາດໄດ້.

ຂ່າວປະເສີດຂອງພຣະເຢຊູຄຣິດໄດ້ລົບລ້າງເຫດຜົນຕ່າງໆ ທີ່ກ່ຽວກັບການອວດຕົວ ແລະອວດຄວາມຊອບທັມຂອງຕົວເອງຕໍ່ພຣະພັກພຣະເຈົ້າ. ຄວາມຈິງແລ້ວພວກເຮົາບໍ່ໄດ້ເຮັດອັນໃດ ເພື່ອທີ່ຈະຮັບຂອງປະທານຄືຄວາມຊອບທັມຂອງພຣະເຈົ້າ. ແລະບໍ່ໄດ້ເຮັດອັນໃດເພື່ອຈະອົດກັ້ນພຣະພິໂຣດຂອງພຣະເຈົ້າໄດ້ພຣະອົງຊົງກະທໍາໂດຍພຣະອົງເອງ.

ການອວດອົ່ງເປັນຄວາມບາບທີ່ຄົນທົ່ວໄປມີ. ໂປໂລໃຊ້ຊີວິດຢູ່ໃນຖ້ານກາງປະເພນີຂອງພວກນີ້. ແຕ່ວ່າການອວດອົ່ງ ແມ່ນຜົນສະທ້ອນໄປເຖິງການເຢີ້ຍົ່ງຈອງຫອງ ດູຖູກດູແຄນຜູ້ອື່ນ ເຫັນຜູ້ອື່ນຕໍ່າ ນີ້ກໍແມ່ນການນໍາໄປສູ່ຄວາມບາບ.

ພວກເຮົາຈະພາກັນກາຍເປັນຄົນຍິວທີ່ອວດຕົວຫມົດແລ້ວບໍ? ປັດຈຸບັນນີ້ ຄົນຂາວກໍອວດວ່າຕົວເປັນຄົນທີ່ເຫນືອກ່ວາຫມູ່, ຜູ້ຊາຍກໍອວດຕົວວ່າຕົນເອງເກັ່ງກ່ວາຜູ້ຍິງ, ບາງຄົນກໍຍັງອວດການສຶກສາ ທັງໆທີ່ຕົວເອງບໍ່ຮູ້ຈັກຫຍັງຫລອກລວງຜູ້ອື່ນແລ້ວຍັງບໍ່ພໍແລະຍັງມາຫລອກລວງຕົວເອງດ້ວຍ. ນັກການເມືອງກໍເຊັ່ນດຽວກັນ ຄຸຍໂມ້ໂອ້ອວດວ່າພັກຂອງຕົວເອງດີຊອບທັມ ຖ້າຈະປ່ອນບັດແລ້ວກໍຕ້ອງແມ່ນພັກນີ້.

ຄວາມຊອບທັມທີ່ເຮົາຈະສາມາດທ້າທາຍໄດ້ນັ້ນຕ້ອງແມ່ນຄວາມຊອບທັມທີ່ມາຈາກພຣະເຈົ້າເທົ່ານັ້ນ.

**ຄຳແນະນຳແລະພາກປະຕິບັດຕົວຈິງ:**

- ພວກເຮົາທັງຫລາຍ ຮູ້ວ່າທຸກຄົນເປັນຄົນບາບ ແລະພວກເຮົາກໍຕົກຢູ່ໃນພຣະພິໂຣດຂອງພຣະເຈົ້າ.
- ພຣະເຈົ້າຊົງອົດກັ້ນໄວ້ນານ ແຕ່ບໍ່ໄດ້ໝາຍຄວາມວ່າພຣະອົງຈະບໍ່ສະເດັດມາເລີຍ
- ໂປດກະຣຸນາຮັບເອົາພຣະຄຸນແລະຄວາມເມດຕາກະຣຸນາຈາກພຣະເຈົ້າເພື່ອຄວາມລອດພົ້ນ
- ຈົ່ງຮູ້ບຸນຄຸນຂອງພຣະເຈົ້າ, ຈົ່ງເອົາການອວດອົ່ງທະນົງຕົວອອກ ແລະຈົ່ງໃຫ້ຄວາມຊອບທັມຂອງພຣະເຈົ້າເຂົ້າມາແທນທີ່.

**ຄຳຖາມ**

1. ທ່ານຈະບອກຄົນອື່ນຢ່າງໃດ ຖ້າຄົນນັ້ນຫາກເຂົ້າໃຈວ່າການຮັບບັບຕິສະມາເປັນການລ້າງບາບໃຫ້ເຂົາ?
2. ການຊົດຊ່ວຍໃຫ້ພົ້ນບາບໃນພຣະທັມທີ່ພວກເຮົາສຶກສາມາມີ: ການໄຖ່ຖອນ, ຄວາມຊອບທັມຂອງພຣະເຈົ້າ, ພຣະຄຸນ ແລະຄວາມເມດຕາກະຣຸນາ (3:24-25). ມີສິ່ງໃດອີກແດ່ທີ່ທ່ານຄິດວ່າ ມີທາງລອດພົ້ນຈາກບາບໄດ້.
3. ຖ້າຮູ້ແລ້ວວ່າພວກເຮົາເປັນຄົນບາບ ພຣະຄັມພີກ່າວຢ່າງໃດກັບຄົນທຸກຊາດທຸກພາສາ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 5
# ຄວາມເຊື່ອເປັນທາງຖືກຕ້ອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 4:1-17, 23-25

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ໂຣມ 4

**ຈຸດສຳຄັນຂອງບົດຮຽນນີ້:** ການທີ່ພຣະເຈົ້າໄດ້ກະທຳຕໍ່ອັບຣາຮາມໄດ້ບອກເຮົາທຸກຄົນວ່າ ການມີຄວາມສຳພັນກັບພຣະເຈົ້ານັ້ນຕ້ອງຂຶ້ນກັບຄວາມເຊື່ອ.

**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງເປັນຄວາມເຊື່ອ-ບໍ່ແມ່ນທຳນຽມທາງດ້ານສາສນາ ແລະຂໍ້ຜູກມັດເປັນສິ່ງສຳຄັນ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະສລູບຄວາມຄິດຂອງອາຈານໂປໂລເຖິງຄວາມເຊື່ອຂອງອັບຣາຮາມ ແລະເອົາມາປະກອບໃນຊີວິດຂອງຕົນເອງ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ເນັ້ນໜັກວ່າພຣະຄັມພີມີອຳນາດນຳພາໃນການດຳລົງຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດແກ່ຄົນທົ່ວໄປ
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.

## ບົດນຳ

ອາຈານໂປໂລໄດ້ຍົກເອົາຕົວຢ່າງຂອງອັບຣາຮາມຂຶ້ນມາ ເພື່ອບອກໃຫ້ຄົນເຂົ້າໃຈເຖິງການເປັນຄົນສິນທັມໂດຍຄວາມເຊື່ອ ບໍ່ແມ່ນທຳນຽມຫລືຂໍ້ຜູກມັດໃນສາສນາ. ການທີ່ເປັນຄົນສິນທັມຕໍ່ພຣະພັກຂອງພຣະເຈົ້າໄດ້ນັ້ນແມ່ນພຣະຄຸນຂອງພຣະເຈົ້າໂດຍຄວາມເຊື່ອຂອງເຮົາ.

ຖາມຄົນອື່ນວ່າພວກເຂົາເຈົ້າມີຄວາມເຂົ້າໃຈແນວໃດວ່າເວລາຈາກໂລກນີ້ໄປແລ້ວ ເຂົາເຈົ້າຈະໄປສວັນ,ຊອມເບິ່ງວ່າຈະມີຈັກຄົນຕອບຢ່າງນີ້: <u>ຂ້ອຍຫວັງວ່າຈະໄປສວັນ ເພາະຂ້ອຍເປັນຄົນດີ. ຂ້ອຍໄດ້ເຮັດຄຸນງາມຄວາມດີມາຫລາຍໃນຊີວິດ, ຂ້ອຍໄດ້ເປັນຄົນມີຄວາມເມດຕາຕໍ່ຄົນອື່ນໆ ແລະຂ້ອຍໄດ້ຊ່ອຍເຫລືອຄົນທຸກຄົນຍາກ.</u>

ການທີ່ເປັນຄົນເມດຕາຄົນອື່ນ ແລະຊ່ອຍເຫລືອຄົນທຸກຍາກເປັນສິ່ງທີ່ດີ, ພວກເຮົາໄດ້ສຶກສາຈາກອາທິດແລ້ວນີ້ວ່າ ການທີ່ເຮັດສິ່ງດີນັ້ນບໍ່ເປັນການພຽງພໍ. ພວກເຮົາຢູ່ໃນສະພາບນັ້ນເພາະຍ້ອນຄວາມບາບ. ພວກເຮົາມີຄວາມຫວັງດຽວ "ຜູ້ໃດປາຖນາຢາກກາຍເປັນຄົນສິນທັມຈາກພຣະເຈົ້າຕ້ອງເຊື່ອໃນພຣະເຢຊູເທົ່ານັ້ນ." (ໂຣມ 3:23ກ.)

ໃນໂຣມ 4 ອາຈານໂປໂລໄດ້ໃຫ້ຕົວຢ່າງເຖິງສິ່ງທີ່ເພິ່ນໄດ້ສິດສອນ. ເພິ່ນໄດ້ກັບໄປເອົາຕົວຢ່າງໃນພຣະຄັມພີເດີມຂຶ້ນມາປະກອບກັບຄຳສອນ. ອັບຣາຮາມໄດ້ຖືກຂນານນາມວ່າເປັນພໍ່ແຫ່ງຄວາມເຊື່ອ. ຖ້າຈະຍົກເອົາຄຸນງາມຄວາມດີຂຶ້ນມາເວົ້າ ອັບຣາຮາມກໍເປັນຄົນນຶ່ງດີກ່ອນໝູ່, ແຕ່ ອາຈານໂປໂລບອກວ່າ ເຖິງແມ່ນອັບຣາຮາມກໍໄດ້ຮັບຄວາມພົ້ນກໍຍ້ອນຄວາມເຊື່ອ, ບໍ່ແມ່ນການປະຕິດບັດຫລືເຮັດເອົາເອງ.

## 1. <u>ພຣະເຈົ້າບໍ່ໄດ້ເປັນໜີ້ພວກເຮົາ:</u> (4:1-8)

ຕາມທຳນຽມແລ້ວ ອັບຣາຮາມເປັນຕົວຢ່າງດີເຖິງການເປັນຄົນສິນທັມ ຫລືຊອບທັມດ້ວຍການປະຕິບັດ. ຄວາມເຂົ້າໃຈຢ່າງນີ້ກໍເພາະສົມດີເພາະເພິ່ນເປັນຄົນດີ. ເພິ່ນໄດ້ມີພຣະຄຸນທີ່ຍອມໃຫ້ຫລານຊາຍ ທ່ານໂລດໄດ້ເລືອກເອົາດິນເຕັມໄປດ້ວຍຊັບພະຍາກອນຕ່າງໆ (ປຖກ 13). ເພິ່ນໄດ້ຖວາຍຊັບສິນຕໍ່ຜູ້ປະກາດພຣະທັມ ເມັລຄີເຊເດັກ (ປຖກ 14). ສິ່ງທີ່ເຫັນໄດ້ດີກໍແມ່ນເພິ່ນຍິນດີທີ່ຈະຖວາຍລູກຊາຍ ອີຊາກ (ປຖມ 22). ສິ່ງເຫລົ່ານີ້ຖືວ່າເປັນການກະທຳທີ່ພຣະເຈົ້າຊອບພຣະທັຍ. ດັ່ງນັ້ນ, ອັບຣາຮາມເປັນຄົນດີຊື່ສຽງຂອງເພິ່ນຊ່າລືອອກໄປ. ແຕ່ຢ່າງໃດກໍຕາມ ອັບຣາຮາມບໍ່ໄດ້ຖືວ່າຕົນເປັນຄົນຊອບທັມດ້ວຍການປະຕິດບັດ.

ອາຈານໂປໂລໄດ້ອ້າງເຖິງປະຖົມມະການ 15:16 ກ່າວວ່າ ອັບຣາຮາມໄດ້ຮັບຄວາມພົ້ນດ້ວຍຄວາມເຊື່ອ ບໍ່ແມ່ນການປະຕິດບັດ. "ອັບຣາຮາມເຊື່ອພຣະເຈົ້າ, ແລະພຣະອັບຣາຮາມກໍຮັບເອົາຄວາມຊອບທັມຂອງພຣະເຈົ້າໂດຍຄວາມເຊື່ອ!

ອາຈານໂປໂລໄດ້ຍົກເອົາຕົວຢ່າງມາປະກອບຈາກທາງເສດຖະກິດ. ເພິ່ນກ່າວວ່າໃນເມື່ອທ່ານເຮັດວຽກໃຫ້ນາຍຈ້າງ, ພວກນາຍຈ້າງຈຶ່ງເປັນໜີ້ຈຳເປັນຕ້ອງຈ່າຍຄ່າຈ້າງໃຫ້ທ່ານ. ແຕ່ພວກເຮົາບໍ່ສາມາດໃຫ້ພຣະເຈົ້າເປັນໜີ້ພວກເຮົາ. ຖ້າພວກເຮົາສາມາດກາຍເປັນຄົນຊອບທັມຈາກພຣະເຈົ້າໄດ້ເພາະເຮົາຮັບໃຊ້ພຣະອົງ ນັ້ນໝາຍຄວາມວ່າເຮົາສາມາດບັງຄັບພຣະອົງໄດ້ ແລະອ້າງຕົນເອງວ່າພຣະເຈົ້າເປັນໜີ້ພວກເຮົາ. ນິສັຍຢ່າງນີ້ເຮັດໃຫ້ຄົນເຊື່ອວ່າພວກເຂົາສາມາດໄປສວັນໄດ້ຍ້ອນສິ່ງທີ່ເຂົາກະທຳ. ໃນຄວາມຄຶດຂອງພວກເຂົາແລ້ວ ພຣະເຈົ້າເປັນໜີ້ພວກເຂົາທາງຄວາມພົ້ນເພາະເຂົາໄດ້ເຮັດສິ່ງດີ.

ການເປັນຄົນສິນທັມນັ້ນມີມາໂດຍທາງພຣະຄຸນຂອງພຣະເຈົ້າ, ຮັບເອົາໄດ້ໂດຍຄວາມເຊື່ອ. ການຊອບທັມແມ່ນຂອງພຣະຣາຊທານຈາກພຣະເຈົ້າ, ບໍ່ແມ່ນສິ່ງທີ່ເຮົາຫາໄດ້ດ້ວຍການເປັນຄົນດີ. ດັ່ງນັ້ນ, ອັບຣາຮາມບໍ່ໄດ້ພົ້ນໂດຍການປະຕິບັດ ແຕ່ໂດຍພຣະຄຸນທາງຄວາມເຊື່ອ.

ຂໍ້ 7-8 ອາຈານໂປໂລໄດ້ອ້າງເຖິງພຣະຄັມພີເດີມ. ເພິ່ນໄດ້ອ້າງເອົາເພງສັຣເສີນ 32:1-2, ຄວາມສຸກເປັນຂອງຜູ້ທີ່ໄດ້ຮັບການໃຫ້ອະພັຍ ແລະຜູ້ທີ່ໄດ້ຮັບການຍົກໂທດ. ຄວາມສຸກເປັນຂອງຜູ້ທີ່ພຣະເຈົ້າບໍ່ໄດ້ຕໍ່ວ່າການກະທຳຜິດຂອງເຂົາ ແລະຜູ້ບໍ່ມີກົນອຸບາຍຫລອກລວງຄົນອື່ນ.

## 2. <u>ພິທີບໍ່ໄດ້ເປັນຜົນໃນຄວາມຊອບທັມ</u>: (4:9-12)

ຕໍ່ມາອາຈານໂປໂລໄດ້ຍົກເອົາເຣື່ອງພິທີຕັດຂຶ້ນມາເວົ້າ. ເພິ່ນໄດ້ຕັ້ງຄຳຖາມວ່າ ຄວາມຊອບທັມນັ້ນໄດ້ຮັກສາໄວ້ສະເພາະພວກຢິວເທົ່ານັ້ນຫລື. ໃນສມັຍຂອງອາຈານໂປໂລ ພວກຄົນຢິວເຂົ້າໃຈວ່າການທີ່ເປັນຄົນຢິວຮັບພິທີຕັດນັ້ນເປັນການພຽງພໍທີ່ຈະມີຄວາມສັມພັນດີກັບພຣະເຈົ້າ. ຕັ້ງແຕ່ສມັຍຂອງອັບຣາຮາມມາ ພິທີຕັດນັ້ນເປັນສັນຍາລັກພິເສດກັບພຣະເຈົ້າ. ພວກທີ່ເປັນເຊື້ອສາຍຂອງອັບຣາຮາມກໍໄດ້ພາກັນປະຕິບັດກັນມາຕລອດ. ດັ່ງນັ້ນ, ພິທີຕັດນັ້ນຈຶ່ງກາຍເປັນສັນຍານຂອງການເປັນເຊື້ອສາຍຂອງອັບຣາຮາມ, ຜູ້ເປັນພໍ່ແຫ່ງຄວາມເຊື່ອ. ຜູ້ເປັນສາຍເລືອດຂອງອັບຣາຮາມກໍເພິ່ງພຣະສັນຍາທີ່ພຣະເຈົ້າໄດ້ກະທຳຕໍ່ອັບຣາຮາມ ແລະພວກເຂົາຖືວ່າພິທີຕັດນີ້ເປັນເຄື່ອງໝາຍຂອງການເປັນພາກສ່ວນໃນພຣະສັນຍານັ້ນ.

ອາຈານໂປໂລໄດ້ສອນໃຫ້ຮູ້ວ່າ ອັບຣາຮາມໄດ້ຮັບຄວາມຊອບທັມກ່ອນເພິ່ນໄດ້ຮັບພິທີຕັດ! ໃນເມື່ອເຮົາອ່ານໃນປຶ້ມປະຖົມມະການ ພວກເຮົາໄດ້ເຫັນວ່າອັບຣາຮາມຊຶ່ງຖືວ່າຊອບທັມໃນບົດ 15 (ປຖມ 15:6) ແຕ່ເພິ່ນຍັງບໍ່ໄດ້ຮັບພິທີຕັດຈົນມາເຖິງບົດ 17. ຖ້າຈະເວົ້າແລ້ວເພິ່ນກາຍເປັນຄົນຊອບທັມຕໍ່ໜ້າພຣະເຈົ້າເວລາຍັງເປັນຄົນນອກຊາດ. ເພິ່ນຮັບພິທີຕັດໃນບົດ 17 ນັ້ນເປັນເຄື່ອງໝາຍງ່າຍໆວ່າ ເພິ່ນເປັນທີ່ພໍພຣະທັຍຂອງພຣະເຈົ້າ.

ຄ້າຍໆກັບສິນບັບຕິສະມາ ກໍເປັນເຄື່ອງໝາຍຄ້າຍຄຽງກັນ. ຄະນະບັບຕິສເຊື່ອໃນການຮັບບັບຕິສະມາຂອງຜູ້ທີ່ເຊື່ອ. ບັບຕິສະມາບໍ່ໄດ້ເປັນຜົນຂອງຄວາມຊອບທັມ, ແຕ່ເປັນເຄື່ອງໝາຍວ່າພວກເຮົາໄດ້ຮັບຄວາມຊອບທັມຈາກພຣະເຈົ້າດ້ວຍຄວາມເຊື່ອ.

ອັບຣາຮາມບໍ່ໄດ້ເປັນພຽງບິດາຂອງຄວາມພວກຢິວ, ແຕ່ເປັນພໍ່ຂອງທຸກໆຄົນຜູ້ທີ່ໄດ້ຮັບຄວາມຊອບທັມໂດຍຄວາມເຊື່ອ ຈະແມ່ນຢິວຫລືບໍ່. (ໂຣມ 4:11-12)! ພວກຢິວຄິດວ່າການທີ່ພວກຕ່າງຊາດຈະມີຄວາມສຳພັນດີກັບພຣະເຈົ້າໄດ້ຕ້ອງຮັບພິທີຕັດ ແລະເປັນຄົນຢິວ. ກົງກັນຂ້າມ, ອາຈານໂປໂລໄດ້ປະກາດວ່າການທີ່ຈະມີຄວາມສຳພັນດີກັບພຣະເຈົ້ານັ້ນ ພວກຢິວຕ້ອງຮັບຄວາມພົ້ນໂດຍຄວາມເຊື່ອ ເໝືອນຕົວຢ່າງຂອງອັບຣາຮາມ.

## 3. <u>ການຖືກົດເກນກໍບໍ່ໄດ້ຊ່ວຍ</u>: (4:13-15)

ມີບາງຄົນໄດ້ໂຕ້ຖຽງກັບອາຈານໂປໂລວ່າ ການເຊື່ອຟັງກົດຂອງໂມເຊໄດ້ເຮັດໃຫ້ຄົນເຮົາກາຍເປັນຄົນຊອບທັມໄດ້. ແຕ່ອາຈານໂປໂລໄດ້ເຕືອນຜູ້ອ່ານວ່າກົດຂອງໂມເຊບໍ່ໄດ້ມີພາກສ່ວນອັນໃດເລີຍ ທີ່ເຮັດໃຫ້ອັບຣາຮາມເປັນຄົນຊອບທັມ.

ອັບຣາຮາມໄດ້ຮັບພຣະສັນຍາກາຍເປັນຄົນຊອບທັມຈາກພຣະເຈົ້າກ່ອນເພິ່ນເກີດ. ຄວາມຈິງແລ້ວກົດເກນບໍ່ໄດ້ມີເທື່ອຈົນມາເຖິງ 400 ປີຫລັງຈາກອັບຣາຮາມ! ດັ່ງນັ້ນ, ພຣະເຈົ້າບໍ່ໄດ້ຖືວ່າອັບຣາຮາມກາຍເປັນຄົນຊອບທັມດ້ວຍການປະຕິບັດຕາມບັນຍັດຫລືກົດເກນ.

ພຣະເຈົ້າສັນຍາຕໍ່ອັບຣາຮາມບໍ່ໄດ້ຂື້ນກັບກົດບັດຍັດ ແຕ່ອາສັຍຄວາມເຊື່ອ. ດັ່ງນັ້ນແຫລະ ພວກທີ່ເຊື່ອຈະເປັນຄົນຢິວຫລືຄົນຕ່າງຊາດ ພວກເຂົາຕ້ອງເຂົ້າມາຫາພຣະເຈົ້າດ້ວຍຄວາມເຊື່ອ.

**ໝາຍເຫດ:** ນີ້ໝາຍຄວາມວ່າ ການເປັນເຊື້ອສາຍຂອງອັບຣາຮາມບໍ່ໄດ້ພຽງແຕ່ເກີດຈາກສາຍເລືອດ. ການເປັນເຊື້ອຍສາຍຂອງອັບຣາຮາມແມ່ນການເປັນລູກດ້ານວິນຍານຈິດ, ຄືຜູ້ທີ່ເຂົ້າໄປໃນຄອບຄົວຂອງພຣະເຈົ້າຢ່າງດຽວກັບອັບຣາຮາມໄດ້ເຮັດ ໂດຍຄວາມເຊື່ອ (4:16)

ພວກເຮົາອາດຄິດວ່າ ຖ້າພວກເຮົາປະຕິບັດຕາມກົດບັນຍັດຢ່າງເຄັ່ງຄັດ ພວກເຮົາຈະໄດ້ຮັບຄວາມຊອບທັມ. ພວກເຮົາອາດຄິດວ່າ ພວກເຮົາບໍ່ໄດ້ເຮັດຜິດຕໍ່ພຣະບັນຍັດ 10 ປະການ ພວກເຮົາກໍມີຄວາມສຳພັນດີກັບພຣະເຈົ້າໄດ້. ແຕ່ວ່າການທີ່ເຮັດຕາມພຣະບັນຍັດ 10 ປະການບໍ່ແມ່ນການທີ່ອັບຣາຮາມກາຍເປັນຄົນຊອບທັມ ແຕ່ເພິ່ນກາຍເປັນຄົນຊອບທັມນັ້ນໂດຍອາສັຍຄວາມເຊື່ອຕ່າງຫາກ. ເພິ່ນໄດ້ໄວ້ວາງໃຈ ແລະເຊື່ອຟັງພຣະເຈົ້າ. ແມ່ນຄວາມເຊື່ອເທົ່ານັ້ນທີ່ເພິ່ນໄດ້ຮັບພຣະສັນຍາຂອງພຣະເຈົ້າ.

## 4. <u>ຄວາມເຊື່ອ ແລະຄວາມເຊື່ອເທົ່ານັ້ນ</u>: (4:16-17)

ອາຈານໂປໂລໄດ້ເວົ້າຊໍ້າອີກວ່າ ບໍ່ແມ່ນການກະທຳດີ, ບໍ່ແມ່ນສິນພິທີຕັດ ຫລືຮັກສາພຣະບັນຍັດເຮັດໃຫ້ອັບຣາຮາມເປັນຄົນຊອບທັມ ແຕ່ແມ່ນຄວາມເຊື່ອ. ໂດຍຄວາມເຊື່ອຄົນເຮົາສາມາດໄດ້ຮັບພຣະຄຸນຂອງພຣະເຈົ້າ. ນີ້ກໍແມ່ນເຣື່ອງຂອງອັບຣາຮາມ ແລະເປັນເຣື່ອງຂອງທຸກໆຄົນ, ຈະເປັນຄົນຢິວຫລືຄົນຕ່າງຊາດ.

ບາງຄັ້ງມີຄົນຖາມວ່າ ຄົນໃນສມັຍພຣະຄັມພີເດີມໄດ້ຮັບຄວາມພົ້ນດ້ວຍວິທີໃດ ເພາະພວກເຂົາເຈົ້າຍັງບໍ່ໄດ້ຮູ້ຈັກກັບອົງພຣະເຢຊູເລີຍ. ເພາະພຣະເຢຊູຍັງບໍ່ໄດ້ຄຶງໃຫ້ຕາຍແລະຄືນມາຈາກຄວາມຕາຍ. ແຕ່ອາຈານໂປໂລໄດ້ອະທິບາຍຢ່າງແຈ່ມແຈ້ງວ່າ ຄົນໃນສມັຍພຣະຄັມພີເດີມໄດ້ຮັບຄວາມພົ້ນເໝືອນກັບພວກເຮົາໃນເວລານີ້ ຄືຮັບຄວາມພົ້ນດ້ວຍຄວາມເຊື່ອ! ພຣະຄຸນຂອງພຣະເຈົ້າມີມາໂດຍຄວາມເຊື່ອໃນພຣະຄັມພີເດີມເໝືອນກັບທຸກວັນນີ້. ພວກເຮົາໄດ້ປຽບເພາະພວກເຮົາສາມາດເບິ່ງຄືນຫລັງໄດ້ແລະເຫັນສິ່ງພຣະເຈົ້າກະທຳເພື່ອພວກເຮົາທາງພຣະຄຸນຂອງພຣະອົງຜ່ານທາງພຣະເຢຊູຄຣິດ. ຄົນໃນສມັຍກ່ອນເບິ່ງໄປຂ້າງໜ້າ ແລະຮູ້ວ່າພວກເຂົາສາມາດໄວ້ວາງໃຈໃນພຣະເຈົ້າວ່າ

ພຣະອົງເຈົ້າຈະຊ່ວຍພວກເຂົາໃນອະນາຄົດ. ເຫັນວ່າພວກເຂົາໄດ້ພົ້ນໂດຍການໄວ້ວາງໃຈໃນພຣະເຈົ້າ ເໝືອນທີ່ພວກເຮົາໃນທຸກວັນນີ້.

ອັບຣາບຣາມເປັນຕົວຢ່າງທີ່ດີ ຜູ້ມີຊີວິດຢູ່ໂດຍຄວາມເຊື່ອໃນພຣະເຈົ້າ. ຄວາມເຊື່ອນັ້ນນຳພາເພິ່ນໃຫ້ໄວ້ວາງໃຈໃນພຣະເຈົ້າແລະມີຊີວິດດີແລະຍອມຮັບພິທີຕັດ, ແຕ່ວ່າຄວາມເຊື່ອໄດ້ເກີດຂື້ນກ່ອນ. ຍ້ອນຄວາມເຊື່ອນີ້ພຣະເຈົ້າຈິ່ງຖືວ່າເພິ່ນເປັນຄົນຊອບທັມ.

**5. <u>ຄວາມເຊື່ອເຫັນວ່າຕໍ່ສູ້ກັບຄວາມຫວັງທຸກຢ່າງ</u>:** (4:18-22)

ອາຈານໂປໂລໄດ້ຍົກເອົາເຫດການໃນຊີວິດຂອງອັບຣາຮາມຂື້ນມາເພື່ອຈະປະກອບກັບຄຳສອນ. ພຣະເຈົ້າໄດ້ສັນຍາກັບອັບຣາຮາມຈະມີລູກຫລານຫລາຍຈົນກາຍເປັນຊາດໃຫຍ່ ເວລາເພິ່ນມີອາຍຸ 75 ປີ (ປຖມ 15:5) ມັນຄ້າຍກັບບໍ່ເປັນພຣະສັນຍາເລີຍ ແຕ່ແນວໃດກໍຕາມອັບຣາຮາມເຊື່ອພຣະເຈົ້າ.

ຫລາຍປີໄດ້ຜ່ານໄປ ແຕ່ເພິ່ນຍັງບໍ່ທັນມີລູກ. ເປັນໜ້າຢາກຫົວ, ເວລາອັບຣາຮາມໄດ້ 100 ປີ ແລະຊາຣາກໍແກ່ເກີນຈະມີລູກໄດ້ ໃນທີ່ສຸດລູກຊາຍອີຊາກກໍໄດ້ເກີດມາ (ປຖມ 18:11)! ຊື່ອີຊາກ ແປວ່າຜູ້ຫົວຂວັນ, ເປັນຄວາມຍິນດີອັນໃຫຍ່ຫລວງທີ່ໄດ້ເຫັນພຣະສັນຍາແບບຕລົກຂອງພຣະເຈົ້າກາຍເປັນຄວາມຈິງແທ້.

ໂຣມ 4:21 ໄດ້ບອກພວກເຮົາເຖິງຄວາມເຊື່ອຂອງອັບຣາຮາມ ທີ່ກ່າວວ່າ, "ເພິ່ນໄດ້ເຊື່ອວ່າພຣະເຈົ້າມີພະລັງອຳນາດຕາມທີ່ພຣະອົງໄດ້ຊົງສັນຍາໄວ້." ເພິ່ນບໍ່ໄດ້ລັ່ງເລໃຈເລີຍເຖິງພຣະສັນຍາຂອງພຣະເຈົ້າ. ຄວາມເຊື່ອທີ່ແນ່ນອນ "ຖືວ່າອັບຣາຮາມເປັນຄົນຊອບທັມ" (ໂຣມ 3:22)

**6. <u>ຂ່າວດີຕໍ່ພວກເຮົາທຸກໆຄົນ</u>:** (4:23-25)

ການເປັນຄົນຊອບທັມໂດຍພຣະຄຸນທາງຄວາມເຊື່ອເປັນຂ່າວດີສຳລັບ ອັບຣາຮາມ ແລະເປັນຂ່າວດີຕໍ່ພວກເຮົາທຸກໆຄົນຄືກັນ. ພຣະເຈົ້າໃຫ້ກາຍເປັນຄົນຊອບທັມໄດ້ໃນເມື່ອພວກເຮົາມີຄວາມເຊື່ອເໝືອນອັບຣາຮາມ. ພວກເຮົາຍັງໄດ້ປຽບກ່ອນອັບຣາຮາມ ເພາະພວກເຮົາສາມາດເບິ່ງຄືນຫລັງທີ່ເຫັນວ່າພຣະເຈົ້າໄດ້ກະທຳທຸກສິ່ງໃນອົງພຣະຄຣິດ. ພວກເຮົາມີຜູ້ເພິ່ງທີ່ຈັບບາຍໄດ້-ຄືອົງພຣະເຢຊູ. ພວກເຮົາບໍ່ຕ້ອງຈ້ອງມອງໄປໃນອະນາຄົດທີ່ບໍ່ຮູ້ຈັກ. ໃນເມື່ອພວກເຮົາເບິ່ງອົງພຣະເຢຊູເຈົ້າ, ພວກເຮົາໄດ້ເຫັນພຣະສັນຍາຂອງພຣະເຈົ້າໃນເມື່ອພຣະອົງໄດ້ເຮັດໃຫ້ພຣະເຢຊູຄືນມາຈາກຕາຍ. ພວກເຮົາສາມາດເຫັນອົງພຣະເຢຊູຕາຍເພື່ອຄວາມບາບຂອງພວກເຮົາ ແລະໄດ້ຖືກຟື້ນຄືນຂື້ນມາໂດຍອຳນາດຂອງພຣະເຈົ້າ ເພື່ອພວກເຮົາຈະມີຄວາມສັມພັນດີກັບພຣະອົງເຈົ້າ.

ເຖິງແມ່ນທ່ານຈະເປັນຄົນດີ ແລະຕິດຕາມກົດບັນຍັດຢ່າງເຄັ່ງຄັດ, ພຣະເຈົ້າບໍ່ໄດ້ເປັນໜີ້ທ່ານຫຍັງເລີຍ. ພວກເຮົາບໍ່ສາມາດທວງໜີ້ຈາກພຣະອົງ. ແຕ່ຢ່າງໃດກໍຕາມ ພຣະອົງສັນຍາຈະປະທານລາງວັນທີ່ພວກເຮົາບໍ່ສົມຄວນຈະໄດ້ຮັບ. ພຣະອົງສັນຍາວ່າຈະປະທານຄວາມຊອບທັມແກ່ທຸກໆຄົນຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດ, ມີຄວາມເຊື່ອໂດຍຄວາມເຊື່ອເທົ່ານັ້ນ ພວກເຮົາຈິ່ງໄດ້ຮັບພຣະສັນຍາໃນພຣະຄຸນ.

**<u>ຄຳຖາມ:</u>**

1. ເປັນດ້ວຍເຫດໃດຄົນເຮົາຈິ່ງຖືວ່າເປັນຄົນດີເທົ່ານັ້ນຈິ່ງຈະໄດ້ຮັບຄວາມຊອບທັມ ທັງໆພຣະຄັມພີໄດ້ເວົ້າຢ່າງແຈ່ມແຈ້ງວ່າເປັນໄປບໍ່ໄດ້ໂດຍການເປັນຄົນດີ?

2. ທ່ານຈະອະທິບາຍຄວາມເຊື່ອຢ່າງໃດ? ທ່ານສາມາດຍົກເອົາຕົວຢ່າງຈາກຄົນທີ່ທ່ານຮູ້ຈັກ ຫລືໃນພຣະຄັມພີວ່າ

ພວກເຮົາມີຄວາມເຊື່ອ?

3. ອ່ານ ເຮັບເຣີ 11:1. ວິທີໃດທີ່ພຣະຄັມພີບີດນີ້ອະທິບາຍເຖິງຄວາມເຊື່ອ ຖ້າຈະເອົາມາທຽບກັບຄວາມເຊື່ອຂອງ ອັບຣາຮາມໃນ ໂຣມ 4:22?

4. ແມ່ນໃຜເປັນເຊື້ອສາຍຂອງ ອັບຣາຮາມ?

*ສຈ. ດຣ. ບຸນ ວົງສຸຣິດທ໌*

# ບົດຮຽນບົດທີ 6
# ເປັນຊີວິດທີ່ດີເລີດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຣມ 5:1-11

**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ໂຣມ 5

**ຈຸດສໍາຄັນຂອງບົດຮຽນນີ້:** ເພາະດ້ວຍການທີ່ອົງພຣະຜູ້ເປັນເຈົ້າໄດ້ກະທໍາຕໍ່ພວກເຮົາໃນພຣະ ຄຣິດ ພຣະອົງຈຶ່ງປະທານໃຫ້ເປັນຄົນຊອບທັມດ້ວຍຄວາມເຊື່ອ, ແລະພວກເຮົາສາມາດມີຊີວິດທີ່ດີເລີດໄດ້.

**ຄໍາຖາມເພື່ອການສໍາຣວດ:** ຄວາມເຊື່ອໃນພຣະຄຣິດເຈົ້າຈະນໍາພາໃຫ້ມີຊີວິດຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ຈັກຜົນກໍາໄລໃນການໄວ້ວາງໃຈໃນພຣະຄຣິດແລະເຂົ້າໃຈເຖິງປະສົບການທີ່ໄດ້ຮັບພຣະພອນ.

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ບອກເຖິງອໍານາດຂອງພຣະຄັມພີທີ່ໃຊ້ແນະນໍາໃນຊີວິດ ແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດແກ່ຄົນທົ່ວໄປ
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.

## ບົດນໍາ

ພຣະເຈົ້າຜ່ານທາງພຣະຄຣິດໄດ້ເຮັດໃຫ້ຜູ້ທີ່ເຊື່ອໄດ້ຮັບຊີວິດດີເລີດທີ່ເຕັມໄປດ້ວຍສັນຕິສຸກ, ບໍ່ຢ້ານຕໍ່ບັນຫາ, ຈະຮູ້ຈັກແນ່ນອນເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າ.

ພວກເຮົາໄດ້ເຂົ້າໃຈໃນບົດຮຽນນີ້ເຖິງຊີວິດອັນປະເສີດຂອງຄຣິສຕຽນເຮົາ. ໃນຄວາມພົ້ນນັ້ນພຣະເຈົ້າໄດ້ສັນຍາວ່າພວກເຮົາມີບ່ອນຢູ່ໃນເມືອງຟ້າສວັນ. ພຣະອົງຍັງສັນຍາວ່າພວກເຮົາຈະມີຊີວິດອັນສູງສົ່ງຕລອດໄປເປັນນິດ. ຊີວິດທັງສອງຢ່າງນີ້ຂຶ້ນກັບການຮັບເອົາຂອງພຣະເຈົ້າວ່າພວກເຮົາເປັນຄົນຊອບທັມ ໂດຍອາສັຍຄວາມເຊື່ອໃນການສິ້ນພຣະຊົນພຣະອົງແລະການຄືນມີຊີວິດຂອງພຣະຄຣິດ. ພຣະຄັມພີເປັນສິ່ງດີເລີດທີ່ພວກເຮົາຈະເອົາມາໃຊ້ໃນການດໍາລົງຊີວິດປະຈໍາວັນ! ໃຫ້ພວກເຮົາພິຈະຣະນາເບິ່ງສິ່ງທີ່ເຮົາໄດ້ຮັບ ເພາະພຣະອົງໄດ້ກະທໍາເພື່ອພວກເຮົາໃນອົງພຣະຄຣິດແລ້ວ.

## 1. ສັນຕິສຸກກັບພຣະເຈົ້າ: (5:1-2)

ອາໂປໄດ້ແປຄໍາເວົ້າ "ເຫດສັນນັ້ນ" ເພື່ອບອກເຖິງສິ່ງທີ່ເພິ່ນຈະເວົ້າຂຶ້ນມາກັບສິ່ງທີ່ໄດ້ເວົ້າໄປແລ້ວນັ້ນ. ໃນຕອນອັກຄະສາວົກໂປໂລ ໄດ້ເວົ້າເຖິງສັນຕິສຸກຂອງຄຣິສຕຽນທີ່ພຣະເຈົ້າໄດ້ເຮັດໄວ້ແລ້ວໃນອົງພຣະຄຣິດ. ໃນບົດທີ 1 ເຖິງ 4 ອາຈານໂປໂລໄດ້ບອກວ່າທຸກໆຄົນຈະເປັນຢິວຫລືຄົນຕ່າງຊາດໄດ້ຖືກລົງໂທດເພາະຄວາມບາບ ແລະໄດ້ຖືກແຍກອອກຈາກພຣະເຈົ້າ. ການແຍກອອກຈາກພຣະເຈົ້ານີ້ບໍ່ມີມະນຸດຄົນໃດສາມາດຊ່ອຍໄດ້.

ຄົນທີ່ບໍ່ໄດ້ຮູ້ຈັກກັບພຣະເຈົ້າໄດ້ມີຊີວິດຢູ່ໃນສະພາບຫ່າງໄກຈາກພຣະອົງ. ພວກເຂົາອາດຄິດວ່າພຣະເຈົ້າເປັນສັດຕູກໍໄດ້. ພວກເຂົາບໍ່ມີສັນຕິສຸກ ມີແຕ່ຄວາມກະວົນກະວາຍ ເປັນຫ່ວງໃນອານາຄົດ. ພວກເຂົາເຈົ້າຄວນຢ້ານໃນເມື່ອຄິດເຖິງກົດຂອງພຣະເຈົ້າທີ່ພວກເຮົາໄດ້ຝ່າຝືນ. ພວກເຂົາຄວນຢ້ານການຕັດສິນຈາກພຣະເຈົ້າ ທີ່ມີຄວາມທຸກທໍຣະມານຕລອດການໃນບຶງໄຟນະຣົກ.

ພຣະເຈົ້າມີຄວາມປາຖນາໃຫ້ມະນຸດຊາດຜູ້ບໍ່ຮູ້ຈັກພຣະອົງຄືນດີກັບພຣະອົງ ເພື່ອພຣະອົງຈະປະທານສັນຕິສຸກແກ່ທຸກໆຄົນ. ເພື່ອຈະກາຍເປັນ "ຄົນສົນທັມ" ໂດຍພຣະຄຸນ, ສຳລັບຄົນທີ່ຮູ້ຈັກພຣະອົງແລ້ວສາມາດຮູ້ໄດ້ວ່າພຣະເຈົ້າໄດ້ປະກາດຕໍ່ເຂົາວ່າ ເຂົາໄດ້ມີຄວາມສຳພັນດີກັບພຣະອົງເຈົ້າ. ສຳລັບຜູ້ໄວ້ວາງໃຈໃນພຣະຄຣິດບໍ່ມີຄວາມຜິດ, ໄດ້ຖືກອະພັຍໃຫ້ແລ້ວ, ແລະເປັນຄົນຖືກຊຳຣະໃຫ້ສະອາດແລ້ວ.

ຜົນທີ່ໄດ້ຮັບຈາກຄວາມພົ້ນນັ້ນໄດ້ເຮັດໃຫ້ຜູ້ທີ່ເຊື່ອມີສັນຕິສຸກໃນໃຈ, ສັນຕິສຸກທີ່ໂລກບໍ່ອາດມອບໃຫ້ ຫລືຍາດເອົາໄປ (ຟລປ 4:7. 1 ປຕ 1:8. ຢຮ 14:27. 16:22) ສັນຕິສຸກນີ້ເປັນສິ່ງທຳອິດໄດ້ເກີດຂຶ້ນໃນຊີວິດຂອງຜູ້ທີ່ໄດ້ຮັບຄວາມລອດພົ້ນ. ຄວາມກະວົນກະວາຍໃນຊີວິດຂອງຜູ້ທີ່ເຊື່ອໄດ້ຫາຍໄປ ແລະສັນຕິສຸກໄດ້ເຂົ້າມາແທນ. ຜູ້ທີ່ບໍ່ເຊື່ອທີ່ເຄີຍຄິດວ່າພຣະເຈົ້າເປັນສັດຕູນັ້ນ ເມື່ອມາເຊື່ອກໍຈະໄດ້ສັນຕິສຸກກັບພຣະເຈົ້າແລະກັບຄົນທັງໂລກ.

ສະພາບຂອງສັນຕິສຸກໄດ້ເຂົ້າມາ "ໂດຍທາງພຣະເຢຊູເຈົ້າ" (ໂຣມ 5:1). ພຣະເຈົ້າປະທານສັນຕິສຸກນີ້ໃນທາງອົງພຣະເຢຊູແກ່ຜູ້ທີ່ເຊື່ອ. ບໍ່ມີທາງໃດທີ່ຈະຫາໄດ້! ອາຈານໂປໂລໄດ້ເວົ້າຕໍ່ໄປວ່າເຖິງເລື່ອງສັນຕິສຸກທີ່ພວກເຮົາໄດ້ຮັບໃນພຣະຄຣິດ, ໝາຍຄວາມວ່າຜູ້ທີ່ເຊື່ອມີ "ທາງ" ບ່ອນເຂົ້າໄປ ຫລືເຂົ້າໄປສູ່ "ຣັສມີ" ຂອງພຣະເຈົ້າໂດຍຄວາມເຊື່ອໃນພຣະຄຣິດ. ເວລານີ້ຜູ້ທີ່ເຊື່ອໄດ້ "ຢືນຢູ່" ໃນຖານະຂອງພຣະຄຸນດ້ວຍຄວາມໝັ້ນໃຈ ແລະມີຄວາມ ຍິນດີຫວັງວ່າຈະໄດ້ເຂົ້າຮ່ວມກັບສະງ່າຣາສີຂອງພຣະເຈົ້າ (5:2). ຄຳວ່າ "ຄວາມຫວັງ" ຄວນເຂົ້າໃຈວ່າ <u>ຄວາມແນ່ໃຈ</u>. "ສະງ່າຣາສີ" ໝາຍເຖິງການ<u>ເຂົ້າຮ່ວມກັບຄວາມຍິ່ງໃຫຍ່ ແລະປະເສີດຂອງພຣະເຈົ້າ</u>.

## ໒. <u>ຄວາມປອດພັຍໃນຊີວິດ</u>: (5:3-5)

ອາຈານໂປໂລບໍ່ໄດ້ຢ້ຳແຕ່ສັນຕິສຸກໃນເມື່ອຄົນເຮົາໄດ້ຮັບຄວາມລອດພົ້ນ ແຕ່ໄດ້ເວົ້າເຖິງຊີວິດອັນປະເສີດທີ່ພຣະເຈົ້າໄດ້ປະທານໃຫ້. ຄົນທີ່ເຊື່ອມີຄວາມຮູ້ສຶກວ່າຕົນເອງມີສັນຕິສຸກຢ່າງເລິກຊຶ້ງແລະພວກເຂົາໄດ້ຮັບ "ຄວາມຊື່ນຊົມຍິນດີ" ມີຄວາມຍິນດີເຖິງແມ່ນວ່າຈະມີຄວາມລຳບາກຕາມເຂົ້າມາລົບກວນໃນຊີວິດ.

ຄຣິສຕຽນເຮົາມີຄວາມຍິນດີໃນເວລາສະບາຍ ມີສຸຂພາບເຂັ້ມແຂງ. ອາຈານໂປໂລຍັງໄດ້ບອກເຖິງຊີວິດດີເລີດແມ່ນຜົນດີອອກຈາກປະສົບການກັບຄວາມທຸກຍາກລຳບາກ. ຄຳເວົ້າວ່າ "ທຸກທໍຣະມານ" ໝາຍເຖິງການລຳບາກທຸກໆຊະນິດ ທີ່ຄຣິສຕຽນເຮົາຖືກສອນໃຫ້ສູ້ອົດທົນຕໍ່. ຄຣິສຕຽນແນ່ໃຈວ່າດ້ວຍຄວາມທຸກລຳບາກນັ້ນ ພຣະເຈົ້າຈະໄດ້ກະທຳການອັສຈັນເພື່ອໃຫ້ເຮົາອົດທົນໄດ້.

ຖ້າບໍ່ມີພຣະຄຣິດແລ້ວ ຄຣິສຕຽນເຮົາມີຈິດໃຈອຶດອັດແລະເປັນທຸກໃຈໃນເມື່ອມີຄວາມລຳບາກ. ປາສະຈາກພຣະຄຣິດແລ້ວພວກເຮົາມັກຈົ່ມ ກາຍເປັນຄົນຫົວແຂງແລະມັກຕໍ່ສູ້ກະບົດເພາະພວກເຮົາບໍ່ມີທີ່ເພິ່ງຫລືໃຫ້ຄວາມປຶກສາ. ປາສະຈາກພຣະຄຣິດແລ້ວພວກເຮົາຍອມໃຫ້ບັນຫາໄລ່ເຮົາອອກຈາກການຕິດຕາມພຣະເຈົ້າ.

ແຕ່ຖ້າມີພຣະຄຣິດແລ້ວ ພວກເຮົາຮູ້ສເມີວ່າພຣະເຈົ້າພຣະບິດາໄດ້ຮັກສາເຮົາໄວ້ໃນເວລາໄດ້ຮັບຄວາມທຸກຍາກລຳບາກ. ພວກເຮົາໄດ້ໄວ້ວາງໃຈໃນພຣະສະຕິປັນຍາແລະຄວາມດີຂອງພຣະອົງ. ໂດຍພຣະຄຣິດພວກເຮົາຮູ້ວ່າພຣະເຈົ້າໄດ້ກະທຳການອັສຈັນ ໃຫ້ຄວາມລຳບາກຕ່າງໆນັ້ນກາຍເປັນສິ່ງດີແກ່ຜູ້ທີ່ເຊື່ອ.

ອາຈານໂປໄດ້ກ່າວວ່າ ການອົດທົນດົນນານໄດ້ຜລິດ "ລັກສະນະບຸກຄະລິກ." ນັ້ນໝາຍເຖິງໄດ້ຖືກສອບສວນໃຫ້ລະອຽດເພື່ອຈະໄດ້ຮູ້ຄຸນສົມບັດໃນສິ່ງພຣະເຈົ້າເຫັນພ້ອມ. ພຣະຄັມພີກ່າວວ່າ, "ຄວາມທຸກລຳບາກເຮັດໃຫ້ເກີດມີຄວາມອົດທົນ." ແລະຄວາມອົດທົນເຮັດໃຫ້ພຣະເຈົ້າເຫັນພ້ອມວ່າຖືກຕ້ອງ.

ອາຈານໂປໂລໄດ້ອະທິບາຍເຖິງບາດກ້າວ ຫລືຂັ້ນຕອນຂອງຜົນປໂຍດທີ່ໄດ້ຜ່ານຜ່າຄວາມລຳບາກທີ່ພຣະເຈົ້າໃຫ້ໂອກາດແກ່ຄົນທີ່ເຊື່ອໄດ້ປະເຊີນ. ຄວາມເຊື່ອໃນພຣະເຈົ້າໄດ້ເຮັດໃຫ້ມີຊີວິດດີເລີດໃນເວລາມີຄວາມສຸກ ແລະເວລາມີຄວາມທຸກລຳບາກໄດ້ໃນເວລາດຽວກັນ.

## 3. <u>ຄວາມຮູ້ເຖິງຄວາມຮັກຂອງພຣະເຈົ້າ</u>: (5:6-11)

ພຣະພອນອັນລ້ຳຄ່າຂອງພຣະເຈົ້າໃນຊີວິດຂອງຜູ້ເຊື່ອໄດ້ມີຕໍ່ເນື່ອງໄປເລື້ອຍໆ ກັບການຮູ້ຈັກຄວາມຮັກ ແລະການຈັດຫາທີ່ພຣະເຈົ້າປະທານໃຫ້. ໃນເມື່ອມະນຸດເຮົາມີຄວາມອ່ອນແອ ຫລືໝົດກຳລັງທີ່ຈະເອົາຊັຍຊະນະຕໍ່ຄວາມບາບແລະມານຮ້າຍ -ພຣະເຈົ້າໄດ້ປະທານອົງພຣະເຢຊູໃຫ້ຕາຍແທນຜູ້ເປັນຄົນຜິດບາບເພື່ອເອົາຊະນະໄດ້. ພຣະເຈົ້າປະທານຂອງຂວັນແກ່ພວກເຮົາໃນຍາມມີຄວາມຕ້ອງການຫລືຂັດສົນແທ້ໆ.

ອາຈານໂປໂລໄດ້ປຽບທຽບເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະຄຣິດນັ້ນ ມີຫລາຍກວ່າຄວາມຕ້ອງການຂອງມະນຸດຊາດ. ອັກຄະສາວົກໄດ້ປະກາດວ່າມີບາງຄົນອາດຍອມຕາຍແທນຄົນດີໄດ້. ແຕ່ຄວາມຮັກຂອງພຣະເຈົ້າທີ່ພວກເຮົາບໍ່ສົມຄວນໄດ້ຮັບນັ້ນ ພຣະເຈົ້າໄດ້ແນ່ໃສ່ມອບໃຫ້ມະນຸດຜູ້ຍັງເປັນຄົນຜິດບາບ. (ໂຣມ 5:8). ພຣະຄຣິດໄດ້ຕາຍແທນພວກເຮົາເວລາເຮົາຍັງເປັນຄົນບາບແລະກະບົດຕໍ່ພຣະອົງ.

ການຮູ້ຈັກຄວາມຮັກອັນເລິກເຊິ່ງຂອງພຣະເຈົ້ານັ້ນ ເປັນສິ່ງແປກໃຈຕໍ່ຜູ້ຄົນໄດ້ຮັບຫລືປະສົບການ. ຜູ້ທີ່ເຊື່ອໄດ້ມີຄວາມສັມພັນດີກັບພະເຈົ້າເພາະພຣະເຢຊູໄດ້ເຮັດເທິງໄມ້ກາງແຂນ. ໃນເວລາເຮົາເປັນສັດຕູກັບພຣະເຈົ້າ ພຣະອົງໄດ້ປະທານການຄືນດີໃຫ້ພວກເຮົາ, ເອີ້ນໃຫ້ພວກເຮົາກັບຫາພຣະອົງໂດຍທາງອົງພຣະເຢຊູ. ຊີວິດ, ການ ຕາຍ, ແລະການຄືນຈາກຕາຍຂອງພຣະເຢຊູເຮັດໃຫ້ຜູ້ທີ່ເຊື່ອມີຊີວິດດີເລີດສົມກັບມີຊື່ວ່າຄຣິສຕຽນ.

<u>ນຳເອົາຄວາມຈິງເຂົ້າມາປະກອບໃນຊີວິດ</u>

ບໍ່ມີຫລາຍຂໍ້ທີ່ເຮັດໃຫ້ມີຊີວິດທີ່ປ່ຽນແປງ, ເຮັດໃຫ້ຮູ້ສຶກເຖິງສະພາບແຫ່ງຄວາມບາບ ຫລືຄວາມໝົດຫວັງ. ພວກເຮົາໄດ້ຮັບຄຳສັນຍາຈາກອົງພຣະບິດາວ່າພຣະອົງຈະປະທານຊີວິດອັນຕລອດໄປເປັນນິດໃຫ້, ຄືສັນຕິສຸກ, ບໍ່ຢ້ານກົວຕໍ່ຄວາມລຳບາກ, ແລະຮູ້ເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າ. ພວກເຮົາສົມຄວນຮັບເອົາຄວາມຊອບທັມທີ່ພຣະເຈົ້າປະທານໃຫ້ດ້ວຍຄວາມຍິນດີແລະຂອບພຣະຄຸນ.

ຊີວິດດີເລີດທີ່ພຣະເຈົ້າປະທານໃຫ້ນີ້ສາມາດຊ່ວຍພວກເຮົາເອົາຊະນະຕໍ່ຄວາມລຳບາກ. ພວກເຮົາຄວນຂອບໃຈທີ່ມີຄວາມທຸກເກີດຂຶ້ນເພາະພວກເຮົາຮູ້ວ່າການປະສົບກັບສິ່ງນັ້ນ ພຣະເຈົ້າຈະປະທານໃຫ້ພວກເຮົາມີຄວາມອົດທົນ, ໃຫ້ມີຄວາມເຊື່ອໝັ້ນອັນແທ້ຈິງ, ແລະຈະໄດ້ເຫັນຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າມີເທົ່າໃດ.

ຂໍໃຫ້ພວກເຮົາໄວ້ວາງໃຈໃນພຣະຄຸນຂອງພຣະເຈົ້າ, ເພື່ອມີຊີວິດຢູ່ໄດ້ໃນຖ້າມກາງຄວາມທຸກລຳບາກ, ໃຫ້ມີຄວາມຊົມຊື່ນຍິນດີເຕັມທີ່ຮູ້ຈັກຄວາມຮັກອັນຍິ່ງໃຫຍ່ ທີ່ພຣະເຈົ້າໄດ້ປະທານພຣະບຸດຂອງພຣະອົງເພື່ອພວກເຮົາ. ພວກເຮົາຜູ້ມີຄວາມເຊື່ອຜູ້ໄດ້ຮັບຄວາມພົ້ນແລ້ວ, ໃຫ້ພວກເຮົາພາກັນອອກໄປບອກຂ່າວປະເສີດນີ້ກັບຄົນອື່ນ.

<u>ຄຳຖາມ:</u>

1. ການທີ່ພຣະເຈົ້າປະທານຄວາມລອດພົ້ນໃຫ້ ໄດ້ມີການປ່ຽນແປງຄວາມຮູ້ສຶກຜິດໃນຊີວິດຂອງທ່ານຢ່າງໃດ?

2. ທ່ານເຄີຍຄິດບໍ່ວ່າ ເວລາທ່ານມີຄວາມທຸກລຳບາກ ທ່ານຄິດວ່າພຣະເຈົ້າໄດ້ລົງໂທດທ່ານບໍ່?

3. ການປະສົບກັບຄວາມລຳບາກຮ່ວມກັບພຣະເຈົ້າໄດ້ສະແດງເຖິງຄວາມເຊື່ອອັນແທ້ຈິງຢ່າງໃດ?

4. ໃນວິທີທາງຢ່າງໃດທ່ານໄດ້ປະສົບກັບສັນຕິສຸກກັບພຣະເຈົ້າ?

5. ບາງຄັ້ງທ່ານບໍ່ຢາກແບ່ງປັນປະສົບການກັບຊີວິດໃໝ່ຂອງທ່ານໃນພຣະຄຣິດກັບຄົນອື່ນບໍ່? ເປັນຫຍັງ?

*ສຈ. ດຣ. ບຸນ ວົງສຸຣິດທ໌*

## ບົດຮຽນທີ 7
## ມັນແມ່ນຊີວິດໃນທາງໃໝ່?

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຣມ 6:1-19

**ຂໍ້ພຣະຄັມພີທັງໝົດສໍາລັບບົດຮຽນນີ້:** ໂຣມ 5:12-6:23

**ຈຸດສໍາຄັນຂອງບົດຮຽນນີ້:** ໃນເມື່ອພວກເຮົາໄດ້ເຂົ້າຮ່ວມຄວາມສັມພັນກັບພຣະເຈົ້າທາງພຣະຄຣິດ, ພວກເຮົາໄດ້ຍ່າງໄປໃນທາງຊີວິດໃໝ່ໃນການປົກ ຄອງຂອງພຣະຄຣິດເຈົ້າ.

**ຄໍາຖາມເພື່ອການສໍາຣວດ:** ຄຣິສຕຽນມີການປ່ຽນແປງອັນໃດເກີດຂຶ້ນໃນການດໍາເນີນຊີວິດ?

**ຈຸດປະສົງຂອງບົດຮຽນນີ້:** ໄດ້ບອກເຖິງເປັນໜຍັງການໄດ້ເຂົ້າສ່ວນບັບຕິສະມາກັບພຣະຄຣິດ ແລະຢູ່ໃນການປົກຄອງຂອງພຣະອົງນັ້ນຄວນໄດ້ຮັບການປ່ຽນແປງເກີດຂຶ້ນໃນຊີວິດຂອງຂ້າພະເຈົ້າ.

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ໄດ້ບອກວ່າພຣະຄັມພີເປັນພະລັງໃນການນໍາພາໃນຊີວິດ ແລະການຮັບໃຊ້.
- ເພື່ອຈະແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ເສີມຂຍາຍຕົວໃຫ້ໃຫຍ່ຂຶ້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

### ບົດນໍາ

ໃນພຣະຄຣິດ, ພຣະເຈົ້າໄດ້ປະກາດວ່າພວກເຮົາໄດ້ຖືກປອງດອງກັບພຣະອົງແລ້ວ ເພາະພຣະອົງໄດ້ອະພັຍຄວາມບາບຂອງພວກເຮົາແລ້ວ. ດັ່ງນັ້ນ, ພວກເຮົາຄວນຍອມໃຫ້ອົງພຣະວິນຍານບໍຣິສຸດນໍາພາຊີວິດຂອງພວກເຮົາ.

ບົດຮຽນສອນໃຫ້ເຮົາຮູ້ຈັກການທີ່ເປັນຄຣິສຕຽນນັ້ນ ພວກເຮົາຄວນຮູ້ວ່າອັນໃດດີ ແລະອັນໃດທີ່ບໍ່ຄວນທໍາໃນຊີວິດ. ພຣະຄັມພີໄດ້ອະທິບາຍວ່າພວກເຮົາທີ່ເປັນຄຣິສຕຽນຄວນປະພຶດຕົວຢ່າງດີທີ່ສຸດເພື່ອຈະໃຫ້ພຣະເຈົ້າຊອບພຣະທັຍ ແລະມະນຸດເຫັນຄວາມແຕກຕ່າງໃນຊີວິດ. ຄຣິສຕຽນຫລືຜູ້ທີ່ເຊື່ອໄດ້ເຂົ້າຮ່ວມຄວາມສັມພັນທະໄມຕຣີກັບພຣະຄຣິດ ໃນເມື່ອເຮົາໄດ້ຮັບເອົາພຣະອົງມາເປັນພຣະຜູ້ຊ່ວຍໃຫ້ລອດ. ພວກເຮົາຄວນເລີ້ມຕົ້ນປະຕິບັດຕົນໃນໜົນທາງໃໝ່ຂອງຊີວິດ. ຖ້າເປັນຄຣິສຕຽນແຕ່ບໍ່ມີການປ່ຽນແປງອັນໃດເກີດຂຶ້ນ ກໍນັບວ່າຄົນນັ້ນຍັງບໍ່ໄດ້ເຊື່ອຟັງຕໍ່ພຣະຄຣິດຢ່າງແທ້ຈິງ.

### 1. ໃນທີ່ສຸດເຮົາກໍມີເສຣີພາບ: (6:1-4)

ໃນເມືອງ ຈາກາຕາ ປະເທດອິນໂດນີເຊັຽເປັນເມືອງງົດງາມ ພວກເຂົາໄດ້ຮັບເອກກະຣາດຈາກປະເທດ ໂຮແລນ. ພວກເຂົາໄດ້ແຕ້ມຮູບຜູ້ຊາຍຄົນນຶ່ງຖືກລ່າມໂສ້ໃນມືສອງເບື້ອງ ແຕ່ໂສ້ນັ້ນໄດ້ຖືກຕັດຂາດຈາກກັນ ແລະມີຄໍາຂຽນເປັນພາສາຕົນເອງວ່າ "ເມີກີກາ" ຊຶ່ງແປວ່າ <u>ເສຣີພາບ, ເອກກະຣາດ ຫລື ໄດ້ຮັບການປົດປ່ອຍ</u>.

ໃນປະເທດສະຫະຣັດອະເມຣິກາກໍໄດ້ຮັບເອກກະຣາດຈາກປະເທດອັງກິດໃນວັນທີ 4 ເດືອນ ກໍຣະກະດາ ປີ 1776. ດັ່ງນັ້ນ, ເມື່ອເຖິງວັນນີ້ທົ່ວທຸກບ່ອນມີການສລອງກັນຂຶ້ນຢ່າງໃຫຍ່ໂດຍການຈູດບັ້ງໄຟດອກ ເພາະພວກເຂົາໄດ້ມີສິດທິເປັນຂອງຕົນເອງ.

ເສຣີພາບເປັນສິ່ງສຳຄັນຕໍ່ທຸກໆຄົນແລະທຸກໆປະເທດ. ໃນຊີວິດຄຣິສຕຽນຄຳວ່າ ເສຣີພາບແທ້ໆມີຄວາມໝາຍແລະສຳຄັນຫລາຍ. ຄວາມລອດພົ້ນທີ່ພຣະເຈົ້າໄດ້ປະທານຜ່ານອົງພຣະເຢຊູຕໍ່ຜູ້ທີ່ເຊື່ອນັ້ນເຮັດໃຫ້ເຂົາຫລຸດພົ້ນຈາກອຳນາດຂອງບາບກັມ. ຜູ້ທີ່ເຊື່ອອາດເວົ້າໄດ້ຄວາມເຊື່ອ ແລະການຂອບພຣະຄຸນວ່າ, ຂ້າໄດ້ເສຣີພາບແລ້ວ, ໃນທີ່ສຸດກໍໄດ້ຖືກປົດປ່ອຍແລ້ວຈາກການປົກຄອງຂອງຄວາມບາບ ແລະມານຮ້າຍ.

ໂຣມບົດ 6:1 ຄວາມຈິງແລ້ວຄວນຢູ່ກ່ອນ ໂຣມ 5:18-21. ພວກອັກຄະສາວົກໄດ້ສອນວ່າຄວາມບາບ, ຄວາມຕາຍ, ການເປັນທາດໄດ້ເຂົ້າມາໃນມະນຸດຊາດດ້ວຍຄົນຜູ້ດຽວ, ຄືອາດາມ. ແຕ່ຊີວິດແລະເສຣີພາບຈາກຄວາມບາບໄດ້ເຂົ້າມາໂດຍພຣະຄຣິດ ແລະເຮັດໃຫ້ເຮົາຜູ້ທີ່ເຊື່ອພົ້ນຈາກອຳນາດຂອງຄວາມບາບ, ຄວາມຊົ່ວຮ້າຍ. ຜູ້ທີ່ເຊື່ອໄດ້ກາຍເປັນຄົນທີ່ "ຖືກຕ້ອງ" ຫລືເວົ້າໄດ້ວ່າ ພຣະເຈົ້າໄດ້ປະກາດວ່າຜູ້ທີ່ເຊື່ອໄດ້ມີເສຣີພາບຈາກອຳນາດຂອງຄວາມຜິດ ຄວາມບາບທັງສິ້ນ. ອົງພຣະວິນຍານບໍຣິສຸດໄດ້ນຳເອົາສິ່ງນັ້ນເຂົ້າມາໃນຊີວິດຂອງຄຣິສຕຽນ ທີ່ພຣະຄັມພີໄດ້ເອີ້ນວ່າໄດ້ຖືກແຍກອອກໄວ້ເພື່ອຮັບໃຊ້, ນັ້ນເປັນສະພາບຂອງການປ່ຽນແປງເກີດຂຶ້ນທີ່ພຣະເຈົ້າໄດ້ຊົງກະທຳໃນຊີວິດທີ່ຄົນທັມມະດາຄິດວ່າມັນເປັນໄປບໍ່ໄດ້, ແຕ່ເປັນໄປໄດ້ສຳລັບພຣະເຈົ້າ.

ໂຣມ 6:2 ອາຈານໂປໂລໄດ້ຕອບຄຳຖາມຈາກຂໍ້ທີ 1. ອາດມີບາງຄົນໄດ້ຖາມ ຫລືເພິ່ນໄດ້ໃຊ້ເປັນຄຳຖາມກໍໄດ້ເພື່ອໃຫ້ເຂົ້າໃຈ. ຖ້າຢ່າງນັ້ນແລ້ວ ພວກເຮົາຈະວ່າຢ່າງໃດ ຄວນທີ່ເຮົາທັງຫລາຍຈະຢູ່ໃນຄວາມຜິດບາບຕໍ່ໄປເພື່ອຈະໃຫ້ພຣະຄຸນມີຫລາຍຂຶ້ນຫລື?

ອາຈານໂປໂລໄດ້ຕອບຢ່າງແຂງແຮງອີງຕາມພາສາກຣີກວ່າ, ຢ່າເຮັດເລີຍ! ວິທີໃດເພິ່ນໄດ້ຖາມຂຶ້ນ, ພວກເຮົາຜູ້ຕາຍໃນຄວາມຜິດບາບແລ້ວຈະດຳເນີນຊີວິດໃນຄວາມຜິດບາບຕໍ່ໄປໄດ້ຢ່າງໃດ? ການທີ່ຕາຍກັບສິ່ງໃດສິ່ງນຶ່ງແມ່ນຄວາມເວົ້າອະທິບາຍເຖິງສະພາບໝົດໂອກາດກັບສິ່ງເຫລົ່ານັ້ນຢ່າງສິ້ນສຸດ. ຜູ້ທີ່ຕາຍໄປແລ້ວນັ້ນບໍ່ສາມາດປ່ຽນແປງອັນໃດໄດ້ໃນຊີວິດ. ຄຣິສຕຽນຜູ້ຕາຍໃນຄວາມບາບນັ້ນຄວາມບາບກໍໝົດອຳນາດແລະໂອກາດທີ່ຈະເອົາຊັຍຊະນະເຮົາໄດ້ ແລະພວກເຮົາກໍບໍ່ຢູ່ໃຕ້ອຳນາດຂອງຄວາມບາບອີກຕໍ່ໄປ. (ເບິ່ງ ຄລຕ 2:19, ຄລຊ 3:3, 1 ປຕ 2:24).

ຄຣິສຕຽນໄດ້ຕາຍໄປແລ້ວໃນຄວາມບາບ ແລະພວກເຮົາຍັງບໍ່ໄດ້ຕາຍຕໍ່ຄວາມບາບໃນຊີວິດນີ້. ເວົ້າໄດ້ອີກວ່າຜູ້ທີ່ເຊື່ອໄດ້ຕາຍໃນຄວາມບາບ, ແຕ່ພວກເຮົາຍັງບໍ່ໄດ້ແຍກອອກຈາກກົນອຸບາຍຂອງຄວາມຊົ່ວ. ພວກເຮົາໄດ້ກາຍເຂົ້າສູ່ສະພາບທີ່ມີຄວາມປາຖນາຢາກຢູ່ເພື່ອພຣະເຈົ້າ ຫລາຍກວ່າຄວາມຜິດບາບ, ແຕ່ພວກເຮົາຍັງບໍ່ທັນໄດ້ພົ້ນຈາກການທົດລອງໃຫ້ເຮັດຜິດ. ພວກອັກຄະສາວົກໄດ້ຕັ້ງຄຳຖາມຂຶ້ນມາວ່າ, ວິທີໃດທີ່ພວກເຮົາອາດສັງເກດຮູ້ຈັກຄວາມຊົ່ວຮ້າຍ ແລະສັນຍາວ່າຈະບໍ່ເອົາມາປະຕິບັດ? ຄວາມບາບເປັນສິ່ງທີ່ຄຣິສຕຽນກຽດຊັງ.

ໂຣມ 6:3-4 ເວົ້າເຖິງບັບຕິສະມາ, ແຕ່ຄວາມໝາຍນັ້ນບໍ່ໄດ້ຈຳກັດໃນການຮັບດ້ວຍນ້ຳເທົ່ານັ້ນ. ແຕ່ຢ່າງໃດກໍຕາມພວກເຮົາບໍ່ຄວນມອງຂ້າມການຮັບສິນບັບຕິສະມາດ້ວຍການລົງນ້ຳໝົດທັງຕົວ. ການທີ່ລົງນ້ຳແມ່ນພາບບອກເຖິງເຮົາໄດ້ທັນຫາພຣະຄຣິດ. ຄວາມໝາຍກໍແມ່ນເຂົ້າຮ່ວມໃນການສິ້ນພຣະຊົນແລະຄືນພຣະຊົນຂອງອົງພຣະເຢຊູ (ເບິ່ງ 1 ກຣທ 12:13). ຄວາມໝາຍອັນເຕັມນັ້ນແມ່ນຄຣິສຕຽນໄດ້ເຂົ້າຮ່ວມຊີວິດໃນພຣະຄຣິດ ແລະສົມຄວນ "ມີຊີວິດໃໝ່" (ໂຣມ 6:4). "ມີຊີວິດໃໝ່ກໍມີຫົວໃຈໃໝ່."

## 2. ຢູ່ໃນອົງພຣະຄຣິດ: (6:5-10)

ອາຈານໂປໂລໄດ້ບອກວ່າໃນຂໍ້ 5 ຜູ້ທີ່ເຊື່ອໄດ້ "ເຂົ້າຮ່ວມ" ກັບການສິ້ນພຣະຊົນຂອງອົງພຣະເຢຊູ. ເພິ່ນໄດ້ປະກາດວ່າຄຣິສຕຽນໄດ້ເຂົ້າຮ່ວມກັບພຣະຄຣິດ ເປັນເໝືອນສະພາບແທ້ໆການຄືນພຣະຊົນ. ຄຳເວົ້າທີ່ໃຊ້ແປວ່າ "ເຂົ້າຮ່ວມ" ເປັນເໝືອນສະພາບໄດ້ຖືກປູກຂຶ້ນ. ການທີ່ຖືກປູກຂຶ້ນນັ້ນຕ້ອງໄດ້ຖືກລ້ຽງ ຈາກຂີ້ດິນດູດເອົານ້ຳແລະສິ່ງຈຳເປັນຈະເຮັດໃຫ້ຈະເຣີນຂຶ້ນ.

ຈຸດຕໍ່ມາກໍແມ່ນການຮູ້ຈັກສອງຢ່າງໃຫຍ່ໆທີ່ຜູ້ທີ່ເຊື່ອໃນພຣະຄຣິດ "ຮູ້ຈັກ" (6:6-9). ນຶ່ງຜູ້ທີ່ເຊື່ອ ຮູ້ຈັກວ່າ ພວກເຂົາໄດ້ມີເສຣີພາບຈາກຄວາມບາບ, ເພາະສະພາບເກົ່າໄດ້ຖືກຄຶງໄວ້ກັບພຣະເຢຊູ (6:6). ຄຳເວົ້າຖືກຄຶງໄວ້ນັ້ນ ເປັນການຕາຍຢ່າງທຸກທໍຣະມານແສນສາຫັດ ທີ່ຮ່າງກາຍຂອງມະນຸດໄດ້ຖືກທຳລາຍ. **ໝາຍເຫດ:** ສິ່ງນີ້ຈະບໍ່ຖືກຄຣິສຕຽນ ເພາະຈະບໍ່ມີຜູ້ໃດສາມາດຄຶງຕົນເອງໄດ້, ອົງພຣະວິນຍານຕ້ອງເຮັດໃນຊີວິດຂອງຄົນນັ້ນ. ຄຣິສຕຽນເຮົາໄດ້ພົ້ນຈາກອຳນາດຂອງຄວາມບາບ ແລະມີອຳນາດຢູ່ຮ່ວມກັບພຣະຄຣິດ. <u>ສອງ</u>, ອາຈານໂປໂລເວົ້າວ່າ ພວກເຮົາ "ຮູ້ຈັກ" ວ່າພຣະຄຣິດຊົງເປັນຢູ່ຕລອດໄປ (6:9). ພຣະຄຣິດສິ້ນພຣະຊົນ ແຕ່ທຸກວັນນີ້ພຣະອົງຍັງຊົງພຣະຊົນຢູ່ເພາະວ່າການຕາຍແລະການຄືນມາຈາກຕາຍຂອງພຣະອົງ ພຣະອົງສາມາດຊ່ອຍທຸກໆຄົນໄດ້ ຖ້າຄົນນັ້ນຫັນເຂົ້າມາຫາພຣະອົງ.

## 3. <u>ເປັນເຄື່ອງມືຂອງພຣະເຈົ້າ</u>: (6:11-14)

ຄຣິສຕຽນໄດ້ຖືວ່າຕົນເອງໄດ້ "ຕາຍແລ້ວໃນຄວາມຜິດບາບ ແລະມີຊີວິດຢູ່ກັບພຣະເຈົ້າ" (6:11). ດັ່ງນັ້ນ, ຄວາມບາບບໍ່ຄວນປົກຄອງຊີວິດຂອງຜູ້ທີ່ເຊື່ອ (6:11-12). ໃນເມື່ອຄຣິສຕຽນໄດ້ຕາຍໃນຄວາມບາບ ແລະມີຊີວິດໃນພຣະຄຣິດ, ພວກເຮົາຄວນ "ຍອມ" ໃນຕົນເອງກາຍເປັນເຄື່ອງມືຂອງພຣະເຈົ້າໃນການຮັບໃຊ້ກັບພາຣະກິດຂອງພຣະອົງ (6:13). ໃຊ້ທຸກໆພາກສ່ວນຂອງຮ່າງກາຍ (6:13) ໃຊ້ຄວາມສາມາດ, ໃຊ້ໂອກາດ, ແລະສິ່ງໃດໃນຊີວິດທີ່ເຮົາມີໃນຊີວິດເພື່ອພຣະອົງ, ແຕ່ຢ່າຍອມໃຫ້ເປັນເຄື່ອງມືຂອງຄວາມຜິດບາບຢ່າງເດັດຂາດ.

ພະຍາມານໄດ້ໃຊ້ຄຣິສຕຽນເວົ້າສິ່ງບໍ່ສຸພາບ, ນຳຄົນອື່ນເຮັດຜິດ, ບໍ່ຍອມໃຫ້ພຣະເຈົ້າຊ່ວຍ, ໃຊ້ສິ່ງທີ່ພຣະເຈົ້າຊົງສ້າງໃນທາງທີ່ຜິດ ຫລືເຮັດສິ່ງທີ່ພຣະເຈົ້າບໍ່ຊອບພຣະທັຍ. ພາກສ່ວນຂອງຮ່າງກາຍຂອງທ່ານໄດ້ຖືກສ້າງຂື້ນມາເປັນຢ່າງດີເລີດ ແລະບໍ່ສົມຄວນຈະໃຫ້ພະຍາມານໃຊ້ໃນຄວາມຜິດບາບ.

ຄຣິສຕຽນເຮົາຄວນຈະຖວາຍທຸກພາກສ່ວນຂອງຮ່າງກາຍເພື່ອວຽກງານຂອງພຣະເຈົ້າ. ລີ້ນຂອງເຮົາຄວນແຍກໄວ້ສຳລັບສັຣເສີນພຣະອົງ, ໃຊ້ປະກາດພຣະຄຳແຫ່ງຄວາມຈິງ ແລະອະທິບາຍ ຄວາມສຸພາບຂອງພຣະອົງ. ມືຂອງພວກຄຣິສຕຽນຄວນໃຊ້ປະກອບສ່ວນໃນພາຣະກິດຂອງພຣະເຈົ້າ ແລະພາກອື່ນໆກໍເໝືອນກັນ.

ທຸກໆພາກສ່ວນຂອງຮ່າງກາຍເຮົາຄວນຈະຖວາຍໃຫ້ເປັນເຄື່ອງຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າ. ເຄື່ອງມືເປັນສິ່ງສຳຄັນໃນການຮັບໃຊ້. ຜົນໄດ້ຮັບນັ້ນມາຈາກຜູ້ໃຊ້ເຄື່ອງມືບໍ່ແມ່ນເຄື່ອງມືໃນຕົວມັນເອງ. <u>**ຕົວຢ່າງ:**</u> ລູກຊາຍຂ້າພະເຈົ້າເປັນຊ່າງໄມ້, ລາວໃຊ້ເຄື່ອງມືອັນດຽວກັນກັບຂ້າພະເຈົ້າໃຊ້. ແຕ່ເມື່ອລາວເຮັດຕູ້ໃສ່ເຄື່ອງເຫັນວ່າຂອງລາວງົດງາມ ແລະຖືກຕ້ອງ. ສ່ວນຂອງຂ້າພະເຈົ້າຄືດ, ງ່ຽງ, ທາງນອກແລະທາງໃນກໍເຫັນວ່າບໍ່ກ້ຽງບໍ່ງາມເລີຍ.

ຫລາຍໆເທື່ອພວກເຮົາຄິດວ່າພວກເຮົາບໍ່ມີຄວາມສາມາດ ແລະໂອກາດເຮັດສິ່ງໃດຕໍ່ພຣະເຈົ້າ. ຄວາມຈິງແລ້ວພວກເຮົາບໍ່ຕ້ອງການຄວາມສາມາດອັນໃດ ແຕ່ຕ້ອງຍອມໃຫ້ພຣະອົງຊົງໃຊ້ສິ່ງທີ່ເຮົາມີແລະທຸກໆສິ່ງຈະກາຍເປັນສິ່ງງົດງາມເກີນຄວາມສາມາດແລະຄວາມເຂົ້າໃຈຂອງເຮົາ. ພຣະເຈົ້າຕ້ອງການໃຊ້ພວກເຮົາເປັນເຄື່ອງໄມ້ເຄື່ອງມືຂອງພຣະອົງ.

## 4. <u>ມີເສຣີພາບຈາກການເປັນທາດຂອງຄວາມບາບ</u>: (6:15-19)

ພວກອັກຄະສາວົກໄປປະກາດວ່າຜູ້ທີ່ເຊື່ອໄດ້ມີຊີວິດຢູ່ກັບອົງພຣະຄຣິດ ເພາະພວກເຮົາບໍ່ຢູ່ໃຕ້ອຳນາດຂອງຄວາມຜິດບາບອີກຕໍ່ໄປ. ໃນຊີວິດເກົ່າ ຜູ້ທີ່ບໍ່ເຊື່ອໄດ້ຕົກເປັນທາດຂອງຄວາມຜິດບາບ, ແຕ່ມາດຽວນີ້ພຣະເຈົ້າໄດ້ປະກາດ ວ່າພວກເຮົາໄດ້ຄືນດີກັບພຣະອົງ ແລະພຣະອົງໄດ້ເຮັດໃຫ້ເຂົາກາຍເປັນຜູ້ດີ ຕາມພຣະອົງ. ຜູ້ທີ່ບໍ່ເຊື່ອແຕ່ກ່ອນໃນເມື່ອມາເຊື່ອກໍໄດ້ພົ້ນຈາກອຳນາດຂອງຄວາມຜິດບາບ ແລະສາມາດຮັບໃຊ້ພຣະເຈົ້າໃນທາງຊອບທັມໄດ້.

<u>**ສລູບ:**</u>

ຊີວິດໃໝ່ໃນພຣະຄຣິດ ຜູ້ທີ່ເຊື່ອໄດ້ພົ້ນຈາກອຳນາດຂອງຄວາມບາບ ແລະມີຊີວິດຢູ່ໄດ້ກັບອົງພຣະຄຣິດ ເພາະ

ຜູ້ທີ່ເຊື່ອໄດ້ຖືກ "ເຂົ້າຮ່ວມ" ຫລືຖືກປູກເຂົ້າໃນອົງພຣະຄຣິດ ( 6:5), ຜູ້ທີ່ເຊື່ອໄດ້ຮັບພະລັງ ແລະອຳນາດທີ່ຈະ ມີຊີວິດຕາມທີ່ພຣະເຈົ້າຊົງນຳ.

**ຄຳຖາມ:**

1. ທ່ານເຊື່ອໝັ້ນບໍ່ວ່າທ່ານໄດ້ພົ້ນຈາກອຳນາດຂອງຄວາມບາບຜ່ານທາງຊີວິດໃໝ່? ພຣະຄຣິດໄດ້ປະທານຫຍັງໃຫ້ທ່ານ? ທ່ານມີຄວາມສົງສັຍບໍ່ວ່າທ່ານມີຄວາມສາມາດເອົາຊະນະຕໍ່ຄວາມບາບໄດ້? ພຣະຄັມພີຕອນນີ້ໄດ້ສອນຫຍັງທ່ານແດ່?
2. ທ່ານຈະຕອບຄົນອື່ນຢ່າງໃດໃນເມື່ອເຂົາເວົ້າວ່າ, ຂ້າພະເຈົ້າຢູ່ໃຕ້ພຣະຄຸນບໍ່ແມ່ນກົດບັດຍັດ, ດັ່ງນັ້ນ, ຂ້າພະເຈົ້າສາມາດມີຊີວິດຕາມທີ່ຕ້ອງການຂອງຕົນເອງ?
3. ໃນຕອນໃດທີ່ທ່ານຈຳໄດ້ໃນເມື່ອທ່ານໄດ້ຍອມເປັນເຄື່ອງມືຂອງມານ ແລະເຮັດໃຫ້ຜູ້ອື່ນໄດ້ຮັບແຕ່ສິ່ງບໍ່ດີ?
4. ວິທີໃດທີ່ພຣະເຈົ້າຕ້ອງການໃຊ້ທ່ານເປັນເຄື່ອງມືຂອງພຣະອົງເພື່ອຈະຮັບໃຊ້ນຳເອົາຄົນທັງໂລກມາຮູ້ຈັກພຣະອົງ?

*ສຈ. ດຣ. ບຸນ ວົງສຸຣິດທ໌*

# ບົດຮຽນທີ 8
# ຊີວິດພຣະເຈົ້າໃນທ່ານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 8:1-11

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຣມ 7:1--8:11

**ຈຸດສຳຄັນຂອງບົດຮຽນນີ້:** ທາງຊີວິດທີ່ແທ້ບໍ່ແມ່ນການປະຖິ້ມຄວາມບາບ ຫລືການຮັກສາກົດ ແຕ່ແມ່ນການຍອມໃຫ້ພຣະວິນຍານບໍຣິສຸດຂອງພຣະເຈົ້າສະຖິດຢູ່ໃນພວກເຮົາ ດ້ວຍຄວາມເຊື່ອໃນພຣະຄຣິດ.

**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງຄືເສັ້ນທາງສູ່ຊີວິດທີ່ແທ້ຈິງ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວ່າເປັນຫຍັງຊີວິດຂອງພຣະວິນຍານທີ່ຢູ່ໃນພວກເຮົາຈຶ່ງແມ່ນຊີວິດແທ້ ແລະເພື່ອຈະຮູ້ວ່າສິ່ງເຫລົ່ານີ້ມີຄວາມສຳຄັນຢ່າງໃນກັບຊີວິດເຮົາ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ພວກເຮົາບໍ່ສາມາດຈະໄດ້ຊີວິດທີ່ແທ້ຈິງ ຫລືມີສັນຕິສຸກແລະຄວາມໝັ້ນໃຈ ໂດຍການດຳເນີນຊີວິດໃນຄວາມຜິດບາບ ຫລືການຮັກສາກົດໃນພຣະຄັມພີຢ່າງເຄັ່ງຄັດ. ສັນຕິສຸກໃນຊີວິດຈະມີຂຶ້ນເວລາພວກເຮົາຍອມຕິດຕາມການນຳພາຂອງພຣະວິນຍານໄປສູ່ຄວາມລອດພົ້ນທີ່ພຣະເຈົ້າຊົງປະທານ.

ຫລາຍໆຄົນໃນປະວັດສາດສແວງຫາຄວາມໝາຍໃນຊີວິດໂດຍການໃຊ້ຊີວິດທີ່ຈົມຢູ່ໃນຄວາມຜິດບາບ ແຕ່ກໍບໍ່ໄດ້ພົບຊີວິດທີ່ແທ້ຈິງ ຫລືຊີວິດທີ່ມີຄວາມໝາຍນັ້ນ. ບາງຄົນດຳເນີນຊີວິດຕາມກົດຂອງພຣະຄັມພີ ຫລືກົດຂອງຄຣິສຕະຈັກຢ່າງຖືກຕ້ອງ ແຕ່ກໍພົບວ່າຊີວິດນີ້ບໍ່ມີຄວາມໝາຍຫຍັງເລີຍ. ໃນພຣະທັມທີ່ຈະສຶກສາໃນມື້ນີ້, ໂປໂລບັນທຶກໄວ້ວ່າ ຊີວິດທີ່ຈະມີສັນຕິສຸກໄດ້ຈະຕ້ອງແມ່ນຊີວິດທີ່ຍອມໃຫ້ພຣະວິນຍານບໍຣິສຸດດຳເນີນຊີວິດຢູ່ໃນ; ຊັຍຊະນະຕໍ່ຄວາມບາບ ແລະສັນຕິສຸກກັບພຣະເຈົ້າເກີດຂຶ້ນຈາກການມີຄວາມສັມພັນສ່ວນຕົວກັບພຣະຄຣິດ.

### 1. ບໍ່ມີການລົງໂທດຈາກພຣະເຈົ້າ: (8:1-4)

ພຣະທັມໃນຕອນນີ້ເປັນການສລຸບສິ່ງທີ່ໄດ້ພິຈາຣະນາກັນແລ້ວໃນໂຣມບົດທີ 7. ທ່ານອາດຈື່ຈຳໄດ້ວ່າ ໂປໂລບໍ່ໄດ້ເວົ້າເຣື່ອງຄວາມພົ້ນໃນບົດທີ 7, ແຕ່ໄດ້ເວົ້າເຣື່ອງວ່າຜູ້ເຊື່ອຈະເຮັດການດີໄດ້ຢ່າງໃດຖ້າເຂົາຍັງມີຄວາມຜິດບາບອາສັຍຢູ່ໃນຕົວ. ພຣະເຈົ້າອົງບໍຣິສຸດຈະຮັບພວກເຮົາໄດ້ຢ່າງໃດ ເພາະໃນພວກເຮົາ "ບໍ່ມີການດີຈັກຢ່າງຢູ່ນຳ?" ເບິ່ງຄືວ່າພຣະເຈົ້າຈະຊົງພິພາກສາຄວາມຄິດແລະການກະທຳຂອງພວກເຮົາທັງໝົດ. ແຕ່ "ການລົງໂທດຈະບໍ່ມີ" ໃນພວກຜູ້ເຊື່ອທັງຫລາຍເພາະພຣະວິນຍານບໍຣິສຸດຜູ້ຊົງສະຖິດໃນເຮົາໄດ້ເຮັດໃຫ້ຄວາມຊອບທັມສຳເຣັດຕາມພຣະບັນຍັດ.

ພຣະບັນຍັດບໍ່ສາມາດພິພາກສາພວກເຮົາເພາະພວກເຮົາໄດ້ຕາຍໄປກັບພຣະບັນຍັດແລ້ວ; ພຣະເຈົ້າບໍ່ສາມາດຈະພິພາກສາພວກເຮົາເພາະພຣະວິນຍານຊົງຊ່ວຍພວກເຮົາໃຫ້ "ດຳເນີນຊີວິດຕາມຝ່າຍພຣະວິນຍານ" ແລະໄດ້ເຮັດທຸກຢ່າງທີ່ບົ່ງໄວ້ໃນຄວາມບໍຣິສຸດຂອງພຣະເຈົ້າ.

ສັຣເສີນພຣະເຈົ້າເພາະຄຣິສຕຽນຊຶ່ງເປັນລູກຂອງພຣະເຈົ້າບໍ່ໄດ້ຢູ່ໃຕ້ພຣະບັນຍັດ, ແລະພຣະເຈົ້າກໍບໍ່ຊົງໃຫ້ພວກເຂົາເຮັດການດີໂດຍອາສັຍກຳລັງຂອງສະພາບມະນຸດເກົ່າ. ພຣະວິນຍານຜູ້ຊົງສະຖິດຢູ່ໃນຈະເຮັດທຸກຢ່າງທີ່ພຣະເຈົ້າຊົງພໍພຣະທັຍ ແລະພຣະອົງຈະຊົງຊ່ວຍຄຣິສຕຽນໃຫ້ເຮັດໃນສິ່ງທີ່ພຣະເຈົ້າພໍພຣະທັຍ. ຂອບຄຸນພຣະເຈົ້າສຳລັບຄວາມລອດພົ້ນທີ່ພວກເຮົາໄດ້ຮັບ. ໂປໂລເຕືອນວ່າ "ເພື່ອເສຣີພາບນັ້ນແຫລະ, ພຣະຄຣິດຈຶ່ງໄດ້ຊົງໂຜດເຮົາທັງຫລາຍໃຫ້ເປັນອິສຣະ ເຫດສັນນັ້ນຈົ່ງຕັ້ງໝັ້ນຄົງຢູ່ ແລະຢ່າຍອມເຂົ້າທຽມແອກເປັນຂ້ອຍຂ້າອີກ" (ຄາລາເຕັຽ 5:1).

**2. <u>ດຳເນີນຊີວິດໃນພຣະວິນຍານ:</u>** (8:5-10)

ຄຣິສຕຽນສາມາດມີຈິດໃຈສອງຢ່າງ: ເຂົາສາມາດອຽງໄປທາງຝ່າຍມະນຸດ ແລະກາຍເປັນຄຣິສຕຽນເນື້ອໜັງ ແລະເປັນສັດຕຣູກັບພຣະເຈົ້າ; ຫລືອຽງໄປຝ່າຍພຣະວິນຍານ ແລະກາຍເປັນຄຣິສຕຽນຝ່າຍວິນຍານ ແລະຜົນຕອບແທນກໍຄືຄວາມຍິນດີໃນຊີວິດແລະສັນຕິສຸກ. ຄົນທັງຫລາຍທີ່ຢູ່ຝ່າຍມະນຸດຈະເປັນທີ່ຊອບພຣະທັຍພຣະເຈົ້າກໍບໍ່ໄດ້, ແລະພຣະເຈົ້າກໍຊົງພໍພຣະທັຍກັບຄົນທັງຫລາຍທີ່ຢູ່ຝ່າຍພຣະວິນຍານ.

ມີແຕ່ຜູ້ເຊື່ອເທົ່ານັ້ນທີ່ຈະສາມາດດຳເນີນຊີວິດຢູ່ຝ່າຍພຣະວິນຍານຂອງພຣະເຈົ້າ. ຜູ້ບໍ່ເຊື່ອກໍບໍ່ມີພຣະວິນຍານຢູ່ດ້ວຍ ແລະຜູ້ນັ້ນກໍບໍ່ໄດ້ເປັນຂອງພຣະເຈົ້າ. ພຣະເຈົ້າໄດ້ຊົງປິ່ນປົວຄວາມຜິດບາບຂອງມະນຸດໂດຍຊົງມອບຊີວິດໃໝ່ໃຫ້. ໂປໂລກ່າວວ່າ, ຖ້າພຣະຄຣິດຢູ່ໃນທ່ານ, ຮ່າງກາຍກໍຕາຍໄປແລ້ວເພາະຄວາມຜິດບາບ, ແຕ່ວິນຍານຈິດກໍມີຊີວິດຢູ່ເພາະຄວາມຊອບທັມ (8:10). ເນື້ອກາຍບໍ່ໄດ້ເປັນຜູ້ບັງຄັບອີກຕໍ່ໄປ ແຕ່ແມ່ນພຣະຄຣິດແລະຄວາມຊອບທັມຊຶ່ງໄດ້ນຳເຮົາອອກຈາກຄວາມຜິດບາບ.

**3. <u>ຄວາມໝັ້ນໃຈໃນພຣະວິນຍານ:</u>** (8: 11)

ອັຄສາວົກໂປໂລບໍ່ໄດ້ເວົ້າເຖິງຄວາມສົງສັຍເຣື່ອງຄວາມພົ້ນຂອງບຸກຄົນທີ່ທ່ານກຳລັງຂຽນຈົດໝາຍໄປຫາໃນຂະນະນີ້. ທີ່ຈິງທ່ານໄດ້ກ່າວວ່າ, "ຖ້າພຣະວິນຍານຂອງພຣະອົງ ຜູ້ຊົງບັນດານໃຫ້ພຣະເຢຊູຄືນພຣະຊົນນັ້ນຊົງສະຖິດຢູ່ໃນເຈົ້າທັງ ຫລາຍແລ້ວ." ສະນັ້ນຜູ້ທີ່ເຊື່ອພວກນີ້ສາມາດມີຄວາມໝັ້ນໃຈວ່າພຣະວິນຍານຈະສາມາດເຮັດໃຫ້ຮ່າງກາຍຂອງພວກເຂົາທີ່ຈະຕ້ອງຕາຍໄປໄດ້ຄືນກັບມາອີກເທື່ອນຶ່ງ. ຄຳສອນນີ້ຢັ້ງຢືນເຖິງເຣື່ອງຊີວິດນິຣັນກັບພຣະເຈົ້າຂອງຜູ້ທີ່ເຊື່ອທຸກ ຄົນ. ຊີວິດຝ່າຍເນື້ອໜັງບໍ່ມີຫຍັງທີ່ຈະມາຄ້ຳປະກັນໄດ້, ແຕ່ຊີວິດຝ່າຍພຣະວິນຍານມີຄວາມໝັ້ນໃຈຢ່າງຄົບບໍຣິບູນ.

## <u>ນຳຄວາມຈິງໄປສູ່ຊີວິດ</u>

1. ຄຣິສຕຽນຄວນດຳເນີນຊີວິດດ້ວຍຄວາມໝັ້ນໃຈ ເພາະວ່າພວກເຮົາໄດ້ມີຄວາມສັມພັນທີ່ຖືກຕ້ອງແລ້ວກັບພຣະເຈົ້າ. ພຣະວິນຍານບໍຣິສຸດຈະເຮັດໃຫ້ຮ່າງກາຍຂອງພວກເຮົາທີ່ຈະຕາຍໄປນັ້ນຄືນຂຶ້ນມາອີກເທື່ອນຶ່ງ.

2. ຄຣິສຕຽນຕ້ອງຍອມຮັບວ່າພວກເຮົາບໍ່ສາມາດທີ່ຈະຮັກສາພຣະບັດຍັດຢ່າງຖືກຕ້ອງທຸກງຂໍ້. ໂດຍທາງພຣະຄຣິດ ພຣະເຈົ້າໄດ້ຊົງອະພັຍຄວາມຜິດບາບ ແລະຊົງປະທານຊີວິດໃໝ່ໃຫ້ພວກເຮົາ.

3. ຄຣິສຕຽນຈະຕ້ອງດຳເນີນຊີວິດເພື່ອໃຫ້ຄົນທົ່ວໄປໄດ້ເຫັນພຣະຄຸນຂອງພຣະເຈົ້າໃນຊີວິດນັ້ນ.

4. ຄຣິສຕຽນຄວນຮັບໃຊ້ພຣະເຈົ້າດ້ວຍຄວາມໝັ້ນໃຈ ເພາະຮູ້ວ່າພຣະວິນຍານຊົງໃຫ້ກຳລັງແລະຣິດເດດໃນການຮັບໃຊ້ນັ້ນ.

**<u>ຄຳຖາມ:</u>**

1. ແມ່ນຫຍັງແດ່ໃນການປະພຶດ ແລະອຸປນິສັຍຂອງທ່ານທີ່ສະແດງໃຫ້ເຫັນເຖິງຄວາມໝົດຫວັງທີ່ຈະດຳເນີນຊີວິດຕາມພຣະປະສົງຂອງພຣະເຈົ້າ? ທ່ານເຮັດແນວໃດເວລາສິ່ງເຫລົ່ານັ້ນເກີດຂຶ້ນກັບທ່ານ?

2. ທ່ານແກ້ໄຂຢ່າງໃດເວລາມີຄວາມສົງສັຍກ່ຽວກັບເຣື່ອງຄວາມພົ້ນ?

3. ທ່ານເຄີຍລືມຄວາມຈິງເຣື່ອງພຣະເຈົ້າຊົງໃຫ້ທ່ານໄດ້ມີຄວາມສັມພັນຢ່າງຖືກຕ້ອງກັບພຣະອົງທາງພຣະຄຣິດບໍ່? ທ່ານຈະພຍາຍາມຢ່າງໃດເພື່ອຈະບໍ່ອອກຈາກຄວາມຈິງນີ້?

4. ທ່ານເຄີຍຄິດບໍ່ວ່າຕົວເອງຈະບໍ່ສາມາດສຳເຣັດພຣະປະສົງຂອງພຣະເຈົ້າສຳລັບຊີວິດ? ແມ່ນຫຍັງຄືຄຳຕອບ?

*ສຈ. ດຣ. ສິດນີ ຄານ*

# ບົດຮຽນທີ 9
# ນີ້ຄືຊີວິດທີ່ມີໄຊຊະນະ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຣມ 8:12-39
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ໂຣມ 8:12-39
**ຈຸດສໍາຄັນຂອງບົດຮຽນນີ້:** ຊີວິດຄຣິສຕຽນອາດຈະມີບັນຫາແລະຄວາມລໍາບາກ ແຕ່ເປັນຊີວິດທີ່ມີໄຊຊະນະເພາະຄວາມຮັກຂອງພຣະຜູ້ເປັນເຈົ້າໃນພຣະເຢຊູຄຣິດ.
**ຄໍາຖາມເພື່ອການສໍາຣວດ:** ໃຜຈະຊ່ວຍພວກເຮົາເວລາມີບັນຫາ ຫລືພົບຄວາມທຸກລໍາບາກໃນຊີວິດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາຄໍາສອນໃນພຣະທັມຕອນນີ້ ທີ່ຈະໃຫ້ຄວາມໝັ້ນໃຈສໍາລັບຊີວິດຄຣິສຕຽນເມື່ອພົບກັບບັນຫາ ແລະຄວາມທຸກລໍາບາກ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

### ຄໍານໍາ

ເໝືອນກັບຄົນທົ່ວໆໄປ, ຄຣິສຕຽນດໍາເນີນຊີວິດໃນໂລກທີ່ເຕັມດ້ວຍບັນຫາ, ການທົດລອງ, ແລະຄວາມທຸກລໍາບາກ. ແຕ່ສໍາລັບຄຣິສຕຽນ, ພວກເຮົາສາມາດຕໍ່ສູ້ກັບສິ່ງເຫລົ່ານີ້ໄດ້ດ້ວຍຄວາມໝັ້ນໃຈ ເພາະການດູແລຮັກສາອັນບໍ່ສິ້ນສຸດຂອງອົງພຣະຜູ້ເປັນເຈົ້າ, ການຊົງໄຖ່ທີ່ຄົບບໍຣິບູນຂອງພຣະເຢຊູຄຣິດ, ແລະການຮັບໃຊ້ສ່ວນຕົວຂອງພຣະວິນຍານບໍຣິສຸດ.

ຄຣິສຕຽນທຸກຄົນຕ່າງກໍຕ້ອງການໄຊຊະນະຕໍ່ຄວາມບາບ, ຄວາມຢ້ານກົວ, ການທົດລອງແລະໃນທີ່ສຸດກໍຄືຄວາມຕາຍ. ໄຊຊະນະໃນຊີວິດຄຣິສຕຽນຄືຈຸດສໍາຄັນໃນພຣະທັມຕອນນີ້. ໄຊຊະນະເປັນສິ່ງທີ່ແນ່ນອນເພາະພຣະເຈົ້າໄດ້ຊົງຈັດຕຽມໄວ້ຢ່າງຄົບສົມບູນສໍາລັບຜູ້ທີ່ເຊື່ອໃນພຣະເຢຊູຄຣິດ.

**1. ໄຊຊະນະຕໍ່ຄວາມຜິດບາບ:** (8:12-14)
ຄຣິສຕຽນຈະບໍ່ຈົງຮັກພັກດີກັບຝ່າຍເນື້ອກາຍ; ພຣະທັມກ່າວວ່າ, "ເຫດດັ່ງນັ້ນພີ່ນ້ອງທັງຫລາຍເອີຍ, ພວກເຮົາໄດ້ເປັນໜີ້ ແຕ່ບໍ່ແມ່ນໜີ້ໃນທາງເນື້ອກາຍຊຶ່ງດໍາເນີນຊີວິດຕາມຢ່າງມະນຸດນັ້ນ" (12). ຄວາມຈົງຮັກພັກດີຂອງພວກເຮົາແມ່ນຕໍ່ພຣະວິນຍາບໍຣິສຸດຂອງພຣະເຈົ້າ. ພຣະວິນຍານເປັນຜູ້ຊົງຊ່ວຍພວກເຮົາໃຫ້ຮູ້ວ່າເຮົາເປັນຄົນຜິດບາບແລະຕ້ອງການພຣະຜູ້ໂຜດໃຫ້ພົ້ນ. ພຣະວິນຍານເປັນຜູ້ຊົງປະທານຄວາມເຊື່ອໃຫ້, ພຣະວິນຍານເປັນຜູ້ຊົງປະທານທັມມະຊາດມະນຸດໃໝ່ໃນພວກເຮົາ, ແລະພຣະວິນຍານຊົງເປັນພຍານໃນຕົວເຮົາວ່າພວກເຮົາເປັນລູກຂອງພຣະເຈົ້າ. ສະນັ້ນພວກເຮົາຈຶ່ງເປັນໜີ້ກັບພຣະວິນຍານບໍຣິສຸດຂອງພຣະເຈົ້າ.

ພຣະເຢຊູຊົງຮັກພວກເຮົາຫລາຍ ພຣະອົງຊົງຍອມສະລະພຣະຊົນເພື່ອພວກເຮົາ; ພຣະວິນຍານຊົງຮັກພວກເຮົາ ພຣະອົງຊົງຍອມສະຖິດຢູ່ໃນເຮົາ. ທຸກວັນພຣະວິນຍານຊົງອົດທົນຕໍ່ສູ້ກັບທັມມະຊາດຝ່າຍເນື້ອໜັງ ແລະການເຫັນແກ່ຕົວເອງຂອງພວກເຮົາ. ທຸກວັນພຣະວິນຍານຊົງເສົ້າພຣະທັຍເພາະການເຮັດຜິດບາບຂອງພວກເຮົາ; ເພາະຄວາມຮັກພຣະອົງຊົງຍອມຢູ່ໃນພວກເຮົາເພື່ອເປັນຜູ້ຄ້ຳປະກັນຄວາມລອດພົ້ນ ແລະຂອງລາງວັນທີ່ພວກເຮົາຈະໄດ້ຮັບ. ຖ້າຜູ້ໃດບໍ່ມີພຣະວິນຍານສະຖິດຢູ່ໃນເຂົາ ຜູ້ນັ້ນກໍບໍ່ໄດ້ເປັນຂອງພຣະເຈົ້າຫລືລູກພຣະເຈົ້າ.

**2. ຊັຍຊະນະຕໍ່ຄວາມຢ້ານກົວ:** (8:15-17)
ຄວາມຢ້ານກົວ ແລະຄວາມກັງວົນເປັນສັດຕຣູຂອງຊີວິດຄຣິສຕຽນ. ຄຣິສຕຽນຕ້ອງການຊັຍຊະນະຕໍ່ຄວາມຜິດບາບ ແລະພວກເຂົາກໍຕ້ອງການຊັຍຊະນະຕໍ່ຄວາມຢ້ານກົວ. ເສຣີພາບຈາກຄວາມຢ້ານກົວມີໄວ້ສຳລັບທຸກຄົນຜ່ານພຣະເຢຊູຄຣິດ. ໂປໂລປະກາດວ່າຄຣິສຕຽນບໍ່ໄດ້ຮັບວິນຍານຂອງຄວາມຢ້ານກົວ ແຕ່ໄດ້ຮັບພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງພຣະເຈົ້າ (8:15).

ພຣະວິນຍານຜູ້ຊົງໃຫ້ພຣະບຸດຊ່ວຍພວກເຮົາໃຫ້ເອົາຊະນະຄວາມຢ້ານໄດ້ຢ່າງໃດ? ຄຣິສຕຽນມີສິດເອີ້ນພຣະເຈົ້າວ່າ "ອັບບາ" ຫລືພຣະບິດາ. ອັບບາໃນພາສາອາລະເມແປວ່າ "ພໍ່" ຊຶ່ງໝາຍເຖິງຄວາມໃກ້ສິດຂອງສະມາຊິກໃນຄອບຄົວ. ການມີຄວາມໃກ້ສິດກັບພຣະຜູ້ເປັນເຈົ້າ, ການຮູ້ວ່າພຣະເຈົ້າຊົງດູແລຮັກສາ ດີກວ່າພໍ່ແມ່ທີ່ດີທີ່ສຸດຝ່າຍເນື້ອໜັງ, ຊ່ວຍພວກເຮົາໃຫ້ສາມາດຕໍ່ສູ້ ແລະມີຊັຍຊະນະຕໍ່ຄວາມຢ້ານກົວ. ຄຣິສຕຽນເປັນສະມາຊິກໃນຄອບຄົວຂອງຜູ້ທີ່ພົ້ນແລ້ວ ຄອບຄົວທີ່ມີພຣະຜູ້ເປັນເຈົ້າເປັນພໍ່ແລະຜູ້ປົກປັກຮັກສາ. ພວກເຮົາເອີ້ນພຣະເຈົ້າວ່າ "ອັບບາ" ຫລືພຣະບິດາ.

ການເປັນສະມາຊິກໃນຄອບຄົວຂອງພຣະເຈົ້າໝາຍເຖິງການໄດ້ເປັນຜູ້ຮັບມໍຣະດົກ ແລະຜູ້ຮ່ວມຮັບມໍຣະດົກກັບພຣະຄຣິດດ້ວຍ. "ຖ້າແມ່ນເຮົາທັງຫລາຍໄດ້ທົນທຸກທໍຣະມານດ້ວຍກັນກັບພຣະອົງ ພວກເຮົາກໍຈະໄດ້ຮັບສະງ່າຣາສີກັບພຣະອົງເໝືອນກັນ" (8:16-17).

**3. ຊັຍຊະນະຕໍ່ການທົດລອງ:** (8: 18-39)
ເຖິງວ່າຄຣິສຕຽນຈະພົບກັບຄວາມທຸກລຳບາກໃນສມັຍນີ້ ພວກເຂົາຈະໄດ້ຮັບສະງ່າຣາສີເມື່ອພຣະຄຣິດຊົງສະເດັດກັບມາຄັ້ງທີສອງ. ຄວາມຈິງແລ້ວທຸກຢ່າງໃນໂລກກຳລັງຕົກ "ຢູ່ໃຕ້ອຳນາດຂອງອະນິຈັງ" ເພາະຄວາມຜິດບາບທີ່ອາດາມໄດ້ເລີ່ມໄວ້ (8:19-21). ເວລາພຣະຄຣິດສະເດັດມາ, ພຣະອົງຈະຄຸມຂັງມານຊາຕານໄວ້ ສັພສິ່ງທັງຫລາຍໃນໂລກຈະໄດ້ເປັນອິສຣະແລະຈະໄດ້ຊົມຊື່ນຍິນດີ (8:21).

ຄຣິສຕຽນໄດ້ຮັບພຣະວິນຍານ ຜູ້ຊົງເປັນຜົນທຳອິດ ແຕ່ພວກເຮົາລໍຄອຍຖ້າ "ການທີ່ພຣະເຈົ້າຊົງຮັບເປັນບຸດຄືທີ່ຈະຊົງໃຫ້ເນື້ອກາຍຂອງພວກເຮົາພົ້ນຈາກຕາຍ" (8:23). ຈົ່ງສັງເກດເບິ່ງການໂອ່ຍຄາງສາມຢ່າງໃນພຣະທັມ 8:22-26: (1) ສັພສິ່ງທີ່ຊົງສ້າງກຳລັງໂອ່ຍຄາງ (22), (2) ຄຣິສຕຽນກຳລັງໂອ່ຍຄາງ ລໍຖ້າການກັບມາຄັ້ງທີສອງຂອງພຣະຄຣິດ (23), (3) ພຣະວິນຍານຜູ້ຊົງສະຖິດໃນພວກເຮົາກໍໂອ່ຍຄາງໃນການອ້ອນວອນສຳລັບເຮົາ (26).

ໂປໂລຂຽນວ່າ "ເພາະເຮົາທັງຫລາຍບໍ່ຮູ້ວ່າພວກເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ພຣະວິນຍານຊົງຊ່ອຍຂໍແທນພວກເຮົາ" (26). ພຣະເຈົ້າຊົງຮູ້ສິ່ງທີ່ຢູ່ໃນຈິດໃຈຂອງພວກເຮົາ ແລະຊົງຮູ້ເຖິງສິ່ງທີ່ພຣະວິນຍານຊົງຕ້ອງການ ແລ້ວພຣະເຈົ້າຈຶ່ງຊົງປະທານສິ່ງເຫລົ່ານັ້ນ. ພຣະວິນຍານຈະຊົງອ້ອນວອນຕາມນ້ຳພຣະທັຍຂອງພຣະເຈົ້າສຳລັບພວກເຮົາ. ແມ່ນຫຍັງຄືນ້ຳພຣະທັຍຂອງພຣະເຈົ້າສຳລັບຄຣິສຕຽນ? ພຣະເຈົ້າຊົງປະສົງໃຫ້ພວກເຮົາ "ເປັນຕາມລັກສະນະແຫ່ງພຣະບຸດຂອງພຣະອົງ" (29). ພວກເຮົາສາມາດອ້າງພຣະສັນຍາໃນ 8:28 ເພາະພຣະປະສົງໃນ 8:29. ຄຣິສຕຽນ

ທຸກຄົນໄດ້ຖືກເອີ້ນ, ໄດ້ກາຍເປັນຄົນຊອບທັມ, ແລະໄດ້ມີສະງ່າຣາສີ (30). ສິ່ງເຫລົ່ານີ້ໄດ້ເກີດຂຶ້ນໃນເວລາທີ່ພວກເຮົາຮັບເອົາພຣະຄຣິດມາເປັນພຣະຜູ້ໂຜດຂອງພວກເຮົາ. ພວກເຮົາໄດ້ຮັບສະງ່າຣາສີຂອງພຣະເຈົ້າແລ້ວ ແລະຈະຖືກເປີດເຜີຍຢ່າງຄົບບໍຣິບູນໃຫ້ພວກເຮົາໄດ້ເຫັນ ເວລາພຣະຄຣິດສະເດັດກັບມາຄັ້ງທີສອງ.

ໂປໂລໄດ້ຕັ້ງຄຳຖາມຫ້າຂໍ້ ແລະໄດ້ໃຫ້ຄຳຕອບໃນ 8:32-35. ພວກເຮົາບໍ່ຕ້ອງຢ້ານກົວວ່າພຣະເຈົ້າຈະຊົງເຮັດຫຍັງເພາະພຣະອົງຊົງຢູ່ຝ່າຍເຮົາ. ພຣະອົງໄດ້ຊົງປະທານພຣະບຸດໃຫ້ພວກເຮົາ. ມີໃຜແດ່ທີ່ຈະກ່າວໂທດພວກເຮົາເຣື່ອງຄວາມຜິດບາບ? ບໍ່ມີ. ພວກເຮົາໄດ້ເປັນຄົນຊອບທັມແລ້ວໃນພຣະຄຣິດ ແລະບໍ່ມີໃຜຈະປ່ຽນແປງສິ່ງນັ້ນ. ມີໃຜແດ່ຈະມາລົງໂທດພວກເຮົາ? ບໍ່ມີ. ພຣະຄຣິດຊົງໄດ້ສິ້ນພຣະຊົນເພື່ອເຮົາ ແລະພຣະອົງໄດ້ຄືນຈາກຄວາມຕາຍແລ້ວ ເປັນຜູ້ຕໍ່ສູ້ຄະດີແທນເຮົາແລະຜູ້ອ້ອນວອນເພື່ອເຮົາ. ມີໃຜແດ່ທີ່ຈະແຍກພວກເຮົາອອກຈາກຄວາມຮັກຂອງພຣະເຈົ້າ? ບໍ່ມີ. ແມ້ນແຕ່ມານຊາຕານກໍຈະບໍ່ສາມາດເຮັດຫຍັງໄດ້ (8:38). ບໍ່ມີການລົງໂທດ, ບໍ່ມີການຜູກມັດ, ບໍ່ມີການຖືກແຍກ. ບໍ່ມີສິ່ງໃດທີ່ຈະ "ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະເຈົ້າ" (8:39).

## <u>ສລູບ</u>

ພຣະເຈົ້າຄືຜູ້ຄ້ຳປະກັນຊັຍຊະນະຂອງພວກເຮົາຕໍ່ຄວາມລຳບາກ ຫລືການຖືກຂົ່ມເຫງ. ພຣະວິນຍານບໍຣິສຸດຜູ້ຊົງສະຖິດໃນພວກເຮົາຜູ້ທີ່ເຊື່ອຈະຊົງນຳພາໃຫ້ໄດ້ຊັຍຊະນະຕໍ່ຄວາມຜິດບາບ, ຄວາມຢ້ານກົວ, ແລະການທົດລອງ. ພວກເຮົາສາມາດຍ່າງຜ່ານການທົດລອງອັນມະຫາສານໄດ້ດ້ວຍຄວາມໝັ້ນໃຈ ເພາະເຮົາຮູ້ວ່າພຣະເຈົ້າຊົງຢູ່ກັບພວກເຮົາແລະຈະຊົງໃຫ້ຣິດເດດແລະກຳລັງ ເພື່ອພວກເຮົາຈະສາມາດດຳເນີນຊີວິດໃນຊັຍຊະນະຖ້າມກາງບັນຫາຕ່າງໆ.

## <u>ຄຳຖາມ</u>

1. ມີການທົດລອງແນວໃດໃນຊີວິດຂອງທ່ານ? ທ່ານຈະປະໃຫ້ພຣະວິນຍານນຳພາທ່ານຜ່ານການທົດລອງນັ້ນໄດ້ວິທີໃດແດ່?

2. ທ່ານເຄີຍພຍາຍາມປ່ຽນອຸປນິສັຍບໍ່ດີໂດຍຕົນເອງແລະຜິດຫວັງບໍ່? ທ່ານຄິດວ່າທ່ານໄດ້ຜິດຫວັງໄປເພາະການເພິ່ງໃນຕົວເອງ ແທນທີ່ຈະເພິ່ງພຣະວິນຍານບໍຣິສຸດບໍ່?

3. ທ່ານຕໍ່ສູ້ກັບຄວາມຢ້ານແລະຄວາມກັງວົນວິທີໃດ? ທ່ານເຄີຍກັງວົນເຣື່ອງສຸຂພາບ, ເຣື່ອງເງິນ, ເຣື່ອງຖາມະໃນຄອບຄົວ ຫລືເຣື່ອງອື່ນໆບໍ່? ການມີພຣະເຈົ້າເປັນ ອັບບາ ຫລືພຣະບິດາມີຜົນຢ່າງໃດ ໃນການຕໍ່ສູ້ຄວາມຢ້ານກົວ?

4. ມີອຸປສັກຫຍັງແດ່ທີ່ທ່ານກຳລັງຕໍ່ສູ້ຢູ່? ມີຫຍັງແດ່ໃນບົດຮຽນນີ້ທີ່ຈະຊ່ວຍທ່ານໃຫ້ຕໍ່ສູ້ກັບສິ່ງເຫລົ່ານັ້ນ?

*ສຈ. ດຣ. ສີດນີ ຄານ*

## ບົດຮຽນທີ 10
## ມີຫຍັງແດ່ສຳລັບຊົນຊາດຢິວ?

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 9: 1-7; 10:1-13; 11: 1-2, 25-32

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຣມ 9--11

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຍັງຊົງປະທານຄວາມພົ້ນໃຫ້ແກ່ທຸກຄົນ, ຊຶ່ງໝາຍເຖິງຊົນຊາດຢິວ ແລະຊາວຕ່າງຊາດ.

**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າຊົງໃຊ້ວິທີໃດແດ່ ເພື່ອໂຜດຊົນຊາດຢິວໃນສມັຍນີ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕິດຕາມເບິ່ງຄຳສອນຂອງໂປໂລເຣື່ອງການທຳງານຂອງພຣະເຈົ້າກັບຊົນຊາດຢິວ ແລະສລູບເບິ່ງວ່າມີຫຍັງແດ່ສຳລັບຊາວຢິວໃນສມັຍປັດຈຸບັນ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຍອມຮັບທຸກຄົນວ່າມີຄຸນຄ່າເພາະຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າ.

**ຄຳນຳ**

ຫລາຍໆຄົນໃນສມັຍຂອງອັຄສາວົກໂປໂລໄດ້ສແວງຫາຄວາມພົ້ນໂດຍການຮັກສາພຣະບັນຍັດ ແລະໄດ້ພາກັນພາດຫວັງ. ທາງດຽວທີ່ຈະກັບສູ່ຄວາມສັມພັນອັນຖືກຕ້ອງກັບພຣະເຈົ້າ ຄືທາງຄວາມເຊື່ອໃນອົງພຣະເຢຊູຄຣິດ. ພຣະເຈົ້າຊົງຮັກສາພຣະສັນຍາວ່າຈະໂຜດທຸກຄົນທີ່ເຊື່ອໃຫ້ລອດພົ້ນ.

ພຣະເຈົ້າມີພຣະປະສົງຢ່າງໃດສຳລັບຊາວຢິວໃນສມັຍນີ້? ພຣະເຈົ້າມີວິທີໃດເພື່ອໃຫ້ຄົນຢິວໄດ້ຮັບຄວາມພົ້ນ? ໂປໂລໄດ້ໃຫ້ຄຳຕອບໃນພຣະທັມໂຣມຊຶ່ງເປັນຈົດໝາຍຂອງທ່ານໄປເຖິງຄຣິສຕຽນທີ່ກຸງໂຣມ. ທ່ານໄດ້ເນັ້ນໃນໂຣມ 9--11 ວ່າ:

- ພຣະເຈົ້າຍັງຊົງປະທານຄວາມພົ້ນໃຫ້ທຸກຄົນ, ທັງຊົນຊາດຢິວ ແລະຄົນຕ່າງຊາດ.
- ພຣະເຈົ້າຍັງຊົງຮັກສາພຣະສັນຍາຂອງພຣະອົງ.
- ພຣະເຈົ້າຍັງປາຖນາໃຫ້ທຸກໆຄົນໄດ້ພົ້ນ, ຊຶ່ງໝາຍເຖິງຊົນຊາດຢິວດ້ວຍ.

### 1. ພຣະປະສົງຂອງພຣະເຈົ້າສຳລັບທຸກຄົນ: (9:1-7)

ໂປໂລມີພາຣະໃຈສຳລັບຊົນຊາດຢິວ ແລະຕ້ອງການທີ່ຈະໃຫ້ພວກເຂົາໄດ້ຮັບຄວາມພົ້ນ. ທ່ານກ່າວວ່າ, "ເຮົາມີຄວາມທຸກໂສກໜັກແລະມີຄວາມເຈັບຮ້ອນໃຈບໍ່ຂາດ" (2). ໂປໂລຮູ້ສຶກເສັຽໃຈທີ່ຊົນຊາດຢິວໄດ້ປະຕິເສດພຣະເຢຊູວ່າເປັນ

ພຣະເມຊີອາ ແລະພວກເຮົາກໍໄດ້ເຫັນຜູ້ປະກາດພຣະທັມໃນສມັຍພຣະສັນຍາເດີມໄດ້ສະແດງຄວາມຮູ້ສຶກເຊັ່ນນີ້ເໝືອນກັນ (ອົພຍົບ 32:31-32; ເຢເຣມີຢາ 4:19-22). ພວກເຮົາມີຄວາມຮູ້ສຶກເຊັ່ນນີ້ບໍ່ສຳລັບບຸກຄົນທີ່ກຳລັງຫລົງທາງຢູ່? ພຣະເຢຊູຊົງຮັກພວກເຮົາ ຈົນຍອມຮັບຄວາມສາບແສ່ງແທນພວກເຮົາ.

ພຣະເມຊີອາ-ພຣະຄຣິດເກີດໃນເຊື້ອຊາດຢິວ, ເກີດໃນຕະກຸນຢູດາ ແລະເກີດໃຕ້ພຣະບັນຍັດ (8:5); ໂປໂລເອີ້ນພຣະຄຣິດວ່າ "ຜູ້ທີ່ພຣະເຈົ້າຊົງອວຍພອນຕລອດໄປ." ບໍ່ມີຊົນຊາດໃດໃນໂລກທີ່ໄດ້ຮັບພຣະພອນເທົ່າກັບເຊື້ອຊາດອິສຣາເອນ; ແຕ່ຊາວອິສຣາເອນບໍ່ໄດ້ຖືເປັນເຣື່ອງໃຫຍ່ ຊ້ຳຍັງພາກັນປະຕິເສດຄວາມຊອບທັມຂອງພຣະເຈົ້າ. ຄຣິສຕຽນໄດ້ກາຍເປັນຜູ້ທີ່ພຣະເຈົ້າຊົງເລືອກ ແລະໄດ້ຮັບພຣະພອນທຸກໆຢ່າງເໝືອນຊົນຊາດອິສຣາເອນ ເພາະຄວາມເຊື່ອໃນອົງພຣະເຢຊູຄຣິດ.

ພຣະເຈົ້າໄດ້ຊົງເລືອກອັບຣາຮາມໃຫ້ເປັນບິດາຂອງຊາດອິສຣາເອນ. ໂປໂລກ່າວວ່າ, "ເຂົາທັງຫລາຍທີ່ເກີດມາຈາກອິສຣາເອນນັ້ນກໍບໍ່ແມ່ນວ່າເປັນຊາວອິສຣາເອນແທ້ທຸກຄົນ" (9:6).ໃຜຄືລູກແທ້? ຜູ້ທີ່ເກີດຕາມພຣະສັນຍາຈຶ່ງໄດ້ຖືວ່າເປັນຜູ້ສືບເຊື້ອສາຍໄດ້ (9:8). ໃນທີ່ນີ້ໂປໂລເວົ້າເຖິງອີຊາກ ຊຶ່ງເປັນລູກແຫ່ງພຣະສັນຍາຂອງພຣະເຈົ້າ ສຳລັບອັບຣາຮາມ. ຊົນຊາດຢິວເຊື່ອວ່າ ເຊື້ອສາຍຂອງອັບຣາຮາມທຸກຄົນຈະໄດ້ຮັບຄວາມພົ້ນ ແຕ່ໂປໂລເຕືອນວ່າຄວາມຈິງບໍ່ໄດ້ເປັນເຊັ່ນນັ້ນ. ການຖືພຣະບັນຍັດຢ່າງຖືກຕ້ອງບໍ່ແມ່ນທາງຂອງຄວາມພົ້ນ. ຄວາມພົ້ນໄດ້ມາເພາະພຣະຄຸນໂດຍທາງຄວາມເຊື່ອໃນອົງພຣະເຢຊູຄຣິດ (ເອເຟໂຊ 2:8). ຄຣິສຕຽນ ໄດ້ກາຍເປັນລູກຂອງພຣະເຈົ້າເພາະຄວາມເຊື່ອ ແລະໄດ້ມີສ່ວນໃນພຣະພອນຂອງພຣະເຈົ້າສຳລັບເຊື້ອສາຍຂອງອັບຣາຮາມ.

## 2. ເຫັນຜົນຂອງການຫລົງທາງ ແລະທາງສູ່ຄວາມພົ້ນ: (10:1-13)

ຄຳເວົ້າທີ່ສຳຄັນທີ່ສຸດໃນພຣະທັມຕອນນີ້ຄື "ຄວາມຊອບທັມ." ຊົນຊາດຢິວຕ້ອງການຄວາມຊອບທັມ ແລະໄດ້ສແວງຫາຄວາມຊອບທັມຜິດທາງ. ພວກເຂົາມີຄວາມຮ້ອນຮົນທີ່ຈະປະຕິບັດພຣະເຈົ້າ ແລະພຍາຍາມຕັ້ງຄວາມຊອບທັມຂອງຕົນເອງຂຶ້ນ (10:2, 3). ໂປໂລບອກວ່າ "ພຣະຄຣິດຊົງເປັນຜູ້ເຮັດໃຫ້ພຣະບັນຍັດຖືກຍົກເລີກ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຊົງຖືວ່າເປັນຄົນຊອບທັມ" (10:4). ພຣະທັມຂອງພຣະເຈົ້າໄດ້ກ່າວເຖິງຄວາມຊອບທັມສອງຢ່າງເຊັ່ນ: ຄວາມຊອບທັມທີ່ເກີດຈາກການຖືຮັກສາພຣະບັນຍັດ ແລະຄວາມຊອບທັມທີ່ພຣະເຈົ້າປະທານໃຫ້ກັບຜູ້ທີ່ເຊື່ອໃນພຣະບຸດ. ຄວາມຊອບທັມທີ່ຈະນຳໄປສູ່ຄວາມພົ້ນແມ່ນຄວາມຊອບທັມທີ່ຢູ່ໃນປາກ ແລະຢູ່ໃນໃຈ (10: 6-8).

ທາງທີ່ຈະມີຄວາມສັມພັນທີ່ຖືກຕ້ອງກັບພຣະເຈົ້າຄືຜ່ານທາງການຖິ້ມໃຈເກົ່າເອົາໃຈໃໝ່, ການສາຣະພາບ, ແລະຄວາມເຊື່ອ (10:9-10). "ບຸກຄົນໃດທີ່ເຊື່ອໃນພຣະອົງ (ພຣະເຢຊູ) ຈະບໍ່ໄດ້ຮັບຄວາມອັບອາຍ" (10:11). ແລະ "ທຸກ ຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ" (10:13). ໂປໂລໄດ້ເລົ່າຈຸດສຳຄັນຂອງຂ່າວປະເສີດເຣື່ອງຄວາມລອດພົ້ນໃນຕອນນີ້ວ່າ ທຸກຄົນທີ່ຮັບດ້ວຍປາກແລະເຊື່ອດ້ວຍໃຈວ່າພຣະເຢຊູເປັນພຣະເຈົ້າກໍຈະພົ້ນ.

## 3. ຄວາມໝັ້ນໃຈໃນພຣະສັນຍາ: (11:1-2, 25-32)

ພຣະເຈົ້າໄດ້ຊົງລະຖິ້ມຊົນຊາດອິສຣາເອນຫລືບໍ່? ຄຳຕອບກໍຄື "ບໍ່." ໂປໂລກ່າວວ່າ ທ່ານເອງກໍເປັນຊົນຊາດອິສຣາເອນ; ຄວາມພົ້ນທີ່ໂປໂລໄດ້ຮັບເປັນສິ່ງຢືນຢັນວ່າພຣະເຈົ້າຍັງບໍ່ໄດ້ປະຖິ້ມໄພ່ພົນຂອງພຣະອົງ. ໂປໂລໄດ້ເປັນພຍານເຣື່ອງຄວາມພົ້ນຂອງທ່ານເຖິງສາມຄັ້ງໃນພຣະທັມກິຈການ; ແລະໃນ 1 ຕີໂມທຽວ 16 ທ່ານໄດ້ເປັນແບບຢ່າງສຳລັບຜູ້ທີ່ຈະເຊື່ອຊຶ່ງເປັນຊົນຊາດຢິວ. ຊົນຊາດຢິວຫລາຍໆຄົນໄດ້ມີໃຈແຂງກະດ້າງແລະບໍ່ຍອມຮັບພຣະຄຸນຂອງພຣະເຈົ້າ (11:7) ແຕ່ກໍຍັງມີ "ພວກທີ່ເຫລືອ" (11:5), ຫລື "ຜູ້ທີ່ພຣະເຈົ້າຊົງເລືອກໄວ້" (11:7) ໄດ້ຍອມເຊື່ອໃນອົງພຣະເຢຊູຄຣິດ ແລະໃນພຣະສັນຍາຂອງພຣະຜູ້ເປັນເຈົ້າ.

ໃນຂໍ້ 25, ໂປໂລໄດ້ອະທິບາຍປະວັດເຣື່ອງຄວາມພົ້ນໂດຍເອີ້ນວ່າ "ຂໍ້ຄວາມອັນເລິກລັບ" (ຊຶ່ງໝາຍເຖິງສິ່ງ ທີ່ບໍ່ສາມາດເຂົ້າໃຈໄດ້ໃນສມັຍກ່ອນ ແຕ່ໃນປັດຈຸບັນໄດ້ຖືກເປີດເຜີຍໃຫ້ເຫັນ). ໂປໂລກ່າວວ່າຊົນຊາດອິສຣາເອນຈະໃຈແຂງກະດ້າງຕໍ່ໄປ ຈົນເຖິງເວລາທີ່ຄົນຕ່າງຊາດທັງໝົດ (ທີ່ພຣະເຈົ້າຊົງເລືອກໄວ້) ໄດ້ເຂົ້າສູ່ຣາຊອານາຈັກຂອງພຣະເຈົ້າ. ໂປໂລບອກວ່າ "ແລະດັ່ງນັ້ນພວກອິສຣາເອນທັງໝົດຈຶ່ງຈະໄດ້ພົ້ນ" (11:26). ຜູ້ຊຽນຄິດວ່າ ໂປໂລອາດຈະໝາຍເຖິງຄົນຢິວຈຳນວນນຶ່ງທີ່ຈະມາເຊື່ອ ແລະ ບໍ່ໄດ້ໝາຍເຖິງປະເທດອິສຣາເອນທັງໝົດຈະໄດ້ຮັບຄວາມພົ້ນຢ່າງບໍ່ມີເງື່ອນໄຂ. ຖ້າພວກເຮົາເບິ່ງພຣະທັມ ໂຢຊວຍ 7:25 ແລະ 2 ຊາມູເອນ 16: 22, ພວກເຮົາຈະເຂົ້າໃຈການໃຊ້ຄຳເວົ້າປະເພດນີ້ດີຂື້ນ. ພຣະທັມຂໍ້ 11:26 ສັນຍາວ່າຄົນຢິວຈຳນວນນຶ່ງຈະຍອມຮັບພຣະເຢຊູຄຣິດວ່າເປັນພຣະເມຊີອາຂອງພວກເຂົາ.

ໂປໂລເຊື່ອວ່າພຣະຜູ້ເປັນເຈົ້າຈະຮັກສາພຣະສັນຍາຂອງພຣະອົງ ເພາະພຣະສັນຍາຂອງພຣະເຈົ້າບໍ່ປ່ຽນແປງ. ໃນສມັຍ ກ່ອນໆ ທັງຄົນຕ່າງຊາດ ແລະຊົນຊາດຢິວຕ່າງກໍບໍ່ເຊື່ອຟັງພຣະເຈົ້າ, ແຕ່ພຣະເຈົ້າກໍໄດ້ຊົງກະທຳຫລາຍໆຢ່າງ ຊຶ່ງໄດ້ ສະແດງເຖິງພຣະຄຸນແລະຄວາມຮັກຂອງພຣະອົງສຳລັບຄົນທັງສອງກຸ່ມ (11:28-30). ພຣະເຈົ້າໄດ້ຊົງເມດຕາທຸກ ຄົນທີ່ຢູ່ໃນຄວາມບໍ່ເຊື່ອ ຟັງ (11:32). ໃນຄຳສັຣເສີນຂອງໂປໂລ ໃນ 11:33-36, ທ່ານໄດ້ສັຣເສີນພຣະເຈົ້າຜູ້ຊົງປະທານຄວາມລອດພົ້ນໃຫ້ກັບທຸກຄົນ, ທັງຄົນຢິວແລະຄົນຕ່າງຊາດ.

## <u>ສລູບ</u>

ພຣະເຈົ້າຊົງມີພຣະປະສົງໃຫ້ທຸກໆຄົນໄດ້ຮັບຄວາມພົ້ນ ແຕ່ຫລາຍຄົນໄດ້ປະຕິເສດພຣະເມຊີອາ ແລະໄດ້ຫລົງທາງໄປຈາກພຣະອົງ. ຊົນຊາດຢິວພຍາຍາມຄືນດີກັບພຣະເຈົ້າໂດຍການຖືຮັກສາພຣະບັນຍັດ ແຕ່ບໍ່ມີໃຜທີ່ຈະໄປເຖິງພຣະອົງໄດ້ໂດຍທາງນີ້. ທາງທີ່ຈະນຳໄປສູ່ສັນຕິສຸກກັບພຣະເຈົ້າ ແມ່ນທາງຄວາມເຊື່ອໃນອົງພຣະຄຣິດ. ເຖິງວ່າຊົນຊາດຢິວທີ່ໂປໂລພຍາຍາມເປັນພຍານໃຫ້ໃນພຣະທັມໂຣມນັ້ນໄດ້ຫລົງທາງໄປ, ພຣະເຈົ້າຈະຊົງປະທານຄວາມພົ້ນໃຫ້ທຸກຄົນທີ່ຈະເຊື່ອໃນອົງພຣະຄຣິດໃນອະນາຄົດ.

## ຄຣິສຕຽນຄວນ...

- ໄວ້ວາງໃຈໃນຄວາມສັດຊື່ຂອງພຣະເຈົ້າວ່າພຣະອົງຈະຊົງຮັກສາພຣະສັນຍາ
- ອ້ອນວອນເພື່ອຄວາມລອດພົ້ນຂອງຊົນຊາດຢິວ
- ຫລີກເວັ້ນການກຽດຊັງຄົນທີ່ມາຈາກເຊື້ອຊາດຢິວ
- ຫລີກເວັ້ນການໃຊ້ພຣະທັມຕອນນີ້ເພື່ອຜົນປໂຍດທາງການເມືອງ.

## <u>ຄຳຖາມ</u>

1. ທ່ານຄິດວ່າໂປໂລໝາຍຄວາມວ່າແນວໃດເວລາທ່ານກ່າວວ່າ "ອິສຣາເອນທັງໝົດຈຶ່ງຈະໄດ້ພົ້ນ" (11:26)?

2. ເປັນຫຍັງຊົນຊາດຢິວໃນສມັຍຂອງໂປໂລ ຕັ້ງຫລວງຫລາຍບໍ່ຍອມຮັບພຣະເຢຊູຄຣິດ?

3. ແມ່ນຫຍັງແດ່ໃນບົດຮຽນນີ້ ທີ່ເຮັດໃຫ້ທ່ານມີໃຈທີ່ຢາກຈະເປັນພຍານກັບທຸກໆຄົນ?

4. ມີຄຳສອນຫຍັງແດ່ໃນບົດຮຽນນີ້ທີ່ຈະຊ່ວຍທ່ານໃນການເປັນພຍານໃຫ້ກັບຄົນທີ່ມາຈາກເຊື້ອຊາດຢິວ?

*ສຈ. ດຣ. ສົດນີ ຄານ*

# ບົດຮຽນທີ 11
# ມີຊີວິດທີ່ເໝາະກັບພຣະເມດຕາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 12:1-8
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຣມ 12:1-8
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອພຣະເຈົ້າເມດຕາເຮົາຫລາຍປານນັ້ນ ເຮົາຄວນຖວາຍຕົນໃຫ້ພຣະອົງ.
**ຄຳຖາມເພື່ອການສຳຣວດ:** ເຮົາຈະຖວາຍຕົນເອງຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳທ່ານໃຫ້ຖວາຍຕົວຕໍ່ພຣະອົງ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ໂປໂລຂຽນຈົດໝາຍສບັບນີ້ຈາກເມືອງໂກຣິນໂທ ເພື່ອຊັກຊວນຄຣິສຕຽນໃນກຸງໂຣມຖວາຍຕົວແກ່ພຣະເຈົ້າເພື່ອເປັນການເໝາະສົມກັບພຣະເຈົ້າໄດ້ຊົງເມດຕາກະຣຸນາຢ່າງໃຫຍ່ຫລວງ ທີ່ຊົງໄຖ່ດ້ວຍພຣະໂລຫິດພຣະບຸດອົງດຽວຂອງພຣະອົງ.

**1. ຖວາຍຕົວທຸກວັນເວລາ:** ( 12:1-2 )

*"ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ໂດຍເຫັນແກ່ພຣະເມດຕາກະຣຸນາຂອງພຣະເຈົ້າ ເຮົາຈຶ່ງຊັກຊວນພວກເຈົ້າໃຫ້ຖວາຍຕົວແກ່ພຣະອົງ ເພື່ອເປັນເຄື່ອງບູຊາທີ່ມີຊີວິດ ເປັນອັນບໍຣິສຸດ, ແລະເປັນທີ່ຊອບພຣະທັຍພຣະເຈົ້າ ຊຶ່ງເປັນການທີ່ສົມກັບຝ່າຍວິນຍານຂອງເຈົ້າທັງຫລາຍ "* (ຂໍ້ 1). ໂປໂລເລີ້ມຕົ້ນດ້ວຍຄຳວ່າ *ເຫດສັນນັ້ນ* ທີ່ມີການບົ່ງບອກວ່າພຣະເຈົ້າໄດ້ເຮັດການອັນສຳຄັນກ່ອນແລ້ວຈຶ່ງມີຄຳວ່າເຫດສັນນັ້ນ, ໂດຍສເພາະແມ່ນພຣະເຈົ້າໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາຕາຍແທນຄວາມຜິດບາບຂອງເຮົາສັນໃດເຮົາຄວນຖວາຍຕົວແກ່ພຣະອົງສັນນັ້ນ. ໂປໂລຊັກຊວນຄຣິສຕຽນໃນກຸງໂຣມໃຫ້ຖວາຍຕົວ ເພາະການຖວາຍຕົວເປັນເຄື່ອງບູຊາທີ່ມີຊີວິດ ບໍ່ແມ່ນຖວາຍສິ່ງຂອງທີ່ບໍ່ມີຊີວິດ ແລະການຖວາຍແນວນີ້ໂປໂລບອກວ່າພຣະເຈົ້າຊົງພໍພຣະທັຍ ເພາະວ່າ *ເປັນການທີ່ສົມກັບຝ່າຍວິນຍານ.*

*ຢ່າດຳເນີນຊີວິດເຫມືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວອຸປນິສັຍຂອງພວກເຈົ້າຈຶ່ງຈະປ່ຽນໃຫມ່ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ນ້ຳພຣະທັຍຂອງພຣະເຈົ້າຈະໄດ້ຮູ້ວ່າອັນໃດດີ ອັນໃດເປັນທີ່ຊອບພຣະທັຍ ແລະອັນໃດ*

*ດີທີ່ສຸດ* "ໃນຂໍ້ ໒ ໂປໂລຫ້າມບໍ່ໃຫ້ດຳເນີນຊີວິດຢ່າງຊາວໂລກນີ້ ຄຳວ່າຊາວໂລກທີ່ໂປໂລກ່າວມີຄວາມໝາຍວ່າພວກຄົນທີ່ບໍ່ເຊື່ອໃນພຣະເຢຊູຄຣິດ ເມື່ອບໍ່ເຊື່ອພຣະເຢຊູຄຣິດພວກເຂົາກໍຈະບໍ່ຟັງຄຳສັ່ງສອນຂອງພຣະອົງ, ແຕ່ໂປໂລຂໍໃຫ້ການປ່ຽນແປງນັ້ນມາຈາກທາງໃນຄືການ *ປ່ຽນແປງຈິດໃຈ* ເພາະວ່າຄຣິສຕຽນສ່ວນຫລາຍພະຍາຍາມດຳເນີນຊີວິດຕາມພຣະທັມພຣະເຈົ້າ ແຕ່ບໍ່ໄດ້ຮັບການປ່ຽນແປງທາງຈິດໃຈ ຈຶ່ງເປັນຕົ້ນເຫດໃຫ້ຄຣິສຕຽນຫລາຍຄົນລ້າຖອຍໄປໃຊ້ຊີວິດຢ່າງເດີມ. ການປ່ຽນແປງຈາກທາງໃນທີ່ໂປໂລໄດ້ກ່າວຈະສາມາດປ່ຽນແປງພາຍນອກຄືປ່ຽນແປງອຸປນິສັຍ, ເມື່ອອຸປນິສັຍປ່ຽນແປງຈຶ່ງຈະຮູ້ວ່າອັນໃດເປັນນ້ຳພຣະທັຍພຣະເຈົ້າ.

**2. <u>ມີຊີວິດເໝາະກັບຄວາມເຊື່ອ:</u>** ( 12: 3 )

*"ເຮົາກ່າວແກ່ ເຈົ້າທັງຫລາຍທຸກຄົນໂດຍພຣະຄຸນທີ່ຊົງປະທານແກ່ເຮົາແລ້ວວ່າ ຢ່າຄິດຖືຕົວເກີນທີ່ຄົນຄວນຈະຄິດນັ້ນ ແຕ່ຈົ່ງຄິດໃຫ້ພໍສົມກັບຂະໜາດແຫ່ງຄວາມເຊື່ອ ທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ແກ່ທຸກຄົນ"* ໂປໂລກ່າວເຕືອນວ່າການເປັນຄຣິສຕຽນຈຳເປັນຕ້ອງມີຊີວິດທີ່ປ່ຽນແປງຕລອດເຖິງການປາກເວົ້າກໍປ່ຽນແປງ ແລະຄວນເວົ້າຕາມຂນາດແຫ່ງຄວາມເຊື່ອຂອງຄົນ, ບໍ່ໃຫ້ເວົ້າຄຸຍໂມ້ເກີນກວ່າການປະຕິບັດຂອງຄົນ ດ້ວຍວ່າການປະຕິບັດເປັນເຄື່ອງບົ່ງບອກຂນາດຂອງຄວາມເຊື່ອຜູ້ນັ້ນ, ຫລືຜູ້ ທີ່ປະຕິບັດແລ້ວກໍຢ່າຄິດຖືຕົວເກີນກວ່າຕົນຈະຄິດ. ຄຣິສຕຽນລາງຄົນໃນກຸງໂຣມພາກັນຖືຕົວວ່າເປັນຄົນຮູ້ຫລາຍ, ລາງຄົນຖືຕົວວ່າເປັນຄົນຊອບທັມຫລາຍກວ່າຄົນອື່ນ, ລາງຄົນຖືຕົວວ່າເປັນຄຣິສຕຽນທີ່ເຂັ້ມແຂງກວ່າຄົນອື່ນຈຶ່ງ ເປັນຕົ້ນເຫດໃຫ້ສາວົກໂປໂລກ່າວເຕືອນສະຕິເພື່ອທຸກຄົນຈະໄດ້ຢູ່ຢ່າງປອງດອງຕາມນ້ຳພຣະທັຍພຣະເຈົ້າ. *"ຈົ່ງເປັນນ້ຳນຶ່ງໃຈດຽວກັນ ຢ່າຄິດໃຫຍ່ໃຝ່ສູງ ແຕ່ຈົ່ງຮັບຮູ້ຄົນສາມັນຕ່ຳຕ້ອຍ ຢ່າຖືຕົວວ່າເປັນຜູ້ສລາດ"* (12:16).

**3. <u>ເປັນກາຍດຽວກັນ:</u>** ( 12:4-5 )

*"ເພາະວ່າໃນຮ່າງກາຍອັນດຽວນັ້ນເຮົາມີອະວັຍວະຫລາຍຢ່າງ ແລະອະວັຍວະເຫລົ່ານັ້ນບໍ່ມີໜ້າທີ່ຢ່າງດຽວກັນສັນໃດພວກເຮົາຜູ້ເປັນຫລາຍຄົນກໍຍັງເປັນຮ່າງກາຍອັນດຽວໃນພຣະຄຣິດ ແລະເປັນອະວັຍວະແກ່ກັນແລະກັນສັນນັ້ນ" (ຂໍ້ 4-5).* ການເປັນນ້ຳນຶ່ງໃຈດຽວກັນນັ້ນໂປໂລໄດ້ຍົກເອົາຮ່າງກາຍຂອງເຮົາມາເປັນເຄື່ອງປຽບທຽບເພື່ອຄຣິສຕຽນໃນກຸງໂຣມຈະໄດ້ຮູ້ເຖິງຄວາມສຳຄັນຂອງການເປັນນ້ຳນຶ່ງໃຈດຽວກັນ, ຮ່າງກາຍມີອະວັຍະວະຫລາຍຢ່າງ ແຕ່ລະຢ່າງຕ່າງກໍມີຄວາມສຳຄັນຂອງມັນສັນໃດຜູ້ຮັບໃຊ້ ແລະຄຣິສຕຽນທົ່ວໄປກໍມີຄວາມສຳຄັນຕໍ່ກັນແລະກັນສັນນັ້ນ. ໂປໂລບອກໃຫ້ຄຣິສຕຽນໃນກຸງໂຣມເຂົ້າໃຈວ່າ ທຸກຄົນສຳຄັນໝົດ ແຕ່ຄວາມສຳຄັນນັ້ນບໍ່ຄືກັນ ດັ່ງນັ້ນວຽກງານການຮັບໃຊ້ພຣະເຈົ້າຕ້ອງເພິ່ງພາອາສັຍຊຶ່ງກັນແລະກັນ. *"ເຮົາເປັນຜູ້ປູກ ອາໂປໂລເປັນຜູ້ຫົດນ້ຳ ແຕ່ພຣະເຈົ້າຊົງບັນດານໃຫ້ໃຫຍ່ຂຶ້ນເພາະສັນນັ້ນຜູ້ປູກຫລືຜູ້ຫົດນ້ຳຈຶ່ງບໍ່ສຳຄັນອັນໃດ ແຕ່ພຣະ ເຈົ້າຜູ້ຊົງບັນດານໃຫ້ໃຫຍ່ຂຶ້ນນັ້ນກໍສຳຄັນຜູ້ປູກກັບຜູ້ຫົດນ້ຳກໍສເມີກັນ ແຕ່ທຸກຄົນກໍຈະໄດ້ຮັບຣາງວັນຕາມການຂອງຕົນ"* (1ກຣທ 3:6-8).

**4. <u>ຊີວິດທີ່ມີໝາກຜົນ:</u>** ( 12:6-8 )

*"ແລະເຮົາທຸກຄົນໄດ້ຮັບຂອງພຣະຣາຊທານຕ່າງໆກັນ ຕາມພຣະຄຸນທີ່ໄດ້ຊົງໂຜດປະທານແກ່ພວກເຮົາ ຄືຖ້າເປັນການປະກາດພຣະທັມ ກໍຈົ່ງປະກາດຕາມຂນາດແຫ່ງຄວາມເຊື່ອຖ້າເປັນການປະຕິບັດກໍຈົ່ງປະຕິບັດ ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນຖ້າເປັນການເຕືອນສະຕິກໍຈົ່ງເຕືອນສະຕິ ຖ້າເປັນການບໍຣິຈາກກໍຈົ່ງບໍຣິຈາກດ້ວຍໃຈກວ້າງຂວາງ ຜູ້ຄຸ້ມຄອງກໍຈົ່ງຄຸ້ມຄອງດ້ວຍເອົາໃຈໃສ່ ຜູ້ທີ່ສະແດງຄວາມເມດຕາກໍຈົ່ງສະແດງດ້ວຍໃຈຍິນດີ"*

1. ຂອງພຣະຣາຊທານທີ່ໂປໂລ ເວົ້າເຖິງມີຄວາມໝາຍວ່າເຮົາບໍ່ມີສິ່ງເຫລົ່ານີ້ເປັນຂອງເຮົາ, ພຣະເຈົ້າຊົງປະທານ ສິ່ງນີ້ໃຫ້ຜູ້ຮັບໃຊ້ທຸກຄົນຕາມນ້ຳພຣະທັຍພຣະອົງ (*ຕາມພຣະຄຸນ*). ເຣື່ອງຂອງພຣະຣາຊທານມີຫຍັງແດ່ນັ້ນ

ໂປໂລໄດ້ກ່າວໄວ້ໃນ 1 ກຣທ 12:4-31 ແລະ ອຟຊ 4:11-12. ຂອງພຣະຣາຊທານຕ່າງກັນກໍຈິງ ແຕ່ມີພຣະປະສົງອັນດຽວຄືປະທານໃຫ້ແຕ່ລະຄົນເພື່ອຮັບໃຊ້ພຣະອົງເທົ່ານັ້ນ, ດັ່ງນັ້ນທຸກຄົນທີ່ໄດ້ຮັບຂອງພຣະຣາຊທານຈຶ່ງມີໜ້າທີ່ຊອກສແວງໃຊ້ຂອງພຣະຣາຊທານນັ້ນໃຫ້ເກີດຜົນປໂຍດແກ່ແຜ່ນດິນສວັນຂອງພຣະເຈົ້າ. ພຣະເຢຊູຄຣິດຊົງກ່າວວ່າ *"ກົງທຸກກົງໃນເຮົາທີ່ບໍ່ເກີດຜົນ ພຣະອົງຊົງລິເສັງ ແລະກົງທຸກກົງທີ່ເກີດຜົນ ພຣະອົງຊົງຕອນເພື່ອໃຫ້ເກີດຜົນຫລາຍຂຶ້ນ"* (ໂຢຮັນ 15:2).

2. *ຖ້າເປັນການປະກາດພຣະທັມ ກໍຈົ່ງປະກາດຕາມຂນາດແຫ່ງຄວາມເຊື່ອ* ແປວ່າຖ້າຈະເວົ້າເຣື່ອງພຣະເຈົ້າກໍໃຫ້ເວົ້າຕາມຂນາດແຫ່ງຄວາມເຊື່ອທີ່ຕົນເອງມີຢູ່, ຄຳຖາມມີຢູ່ວ່າຈະຮູ້ໄດ້ແນວໃດວ່າຄວາມເຊື່ອຂອງຕົນມີໜ້ອຍຫລືຫລາຍ? ສາສນາຈານຜູ້ນຶ່ງແນະນຳວ່າຄວາມເຊື່ອນັ້ນແມ່ນການສແດງອອກຊຶ່ງການປະຕິບັດ ແປວ່າການປະຕິບັດຂອງເຮົາໄດ້ຊ່ຳໃດ ຄວາມເຊື່ອຂອງເຮົາກໍມີຫລາຍຊ່ຳນັ້ນ.

3. *ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນຖ້າເປັນການເຕືອນສະຕິກໍຈົ່ງເຕືອນສະຕິ* ແປວ່າຫາກທ່ານມີຂອງພຣະຣາຊທານເຣື່ອງການສັ່ງສອນເຕືອນສະຕິກໍຈົ່ງໃຊ້ຂອງພຣະຣາຊທານນັ້ນເພື່ອສັ່ງສອນ, ເຕືອນສະຕິຕາມຄວາມເໝາະສົມ ຄືຢ່າສັ່ງສອນແລະເຕືອນສະຕິຄົນອື່ນເກີນກວ່າຕົວເອງຈະປະຕິບັດໄດ້.

*4. ຖ້າເປັນການບໍຣິຈາກກໍຈົ່ງບໍຣິຈາກດ້ວຍໃຈກວ້າງຂວາງ* ແປວ່າຜູ້ມີໃຈເມຕາກະຣຸນາຊ່ອຍເຫລືອຄົນອື່ນບໍ່ວ່າທາງຊັບສິນ ຫລືເຫື່ອແຮງກໍຈົ່ງເຮັດສິ່ງນັ້ນດ້ວຍຄວາມຈິງໃຈ ເພາະວ່ານັ້ນແມ່ນຂອງພຣະຣາຊທານຂອງທ່ານ.

*5. ຜູ້ຄຸ້ມຄອງກໍຈົ່ງຄຸ້ມຄອງດ້ວຍເອົາໃຈໃສ່ ຜູ້ທີ່ສະແດງຄວາມເມດຕາກໍຈົ່ງສະແດງດ້ວຍໃຈຍິນດີ* ແປວ່າຜູ້ມີຂອງພຣະຊາທານເປັນຜູ້ນຳເຊັ່ນ; ເປັນອາຈານ, ເປັນຜູ້ປົກຄອງ, ເປັນຄຣູສອນ, ເປັນຫົວໜ້າພແນກການໃນໂບດ, ເປັນຜູ້ສັ່ງສອນແລະອື່ນໆກໍຈົ່ງສອນແລະຄຸ້ມຄອງສະມາຊິກດ້ວຍເອົາໃຈໃສ່ຢ່າງສຸພາບອ່ອນນ້ອມ ດ້ວຍວ່າຜູ້ນຳຝ່າຍສາສນາບໍ່ແມ່ນນາຍ.

ສລູບແລ້ວໃຫ້ທຸກຄົນທີ່ມີຂອງພຣະຣາຊທານຈົ່ງໃຊ້ຂອງພຣະຣາຊທານທີ່ຕົນມີໃຫ້ຖືກຕ້ອງແລະເໝາະສົມກັບພຣະຄຸນພຣະເຈົ້າທີ່ຊົງມອບໝາຍໃຫ້ຕາມພຣະປະສົງຂອງພຣະອົງ, ເຮັດດັ່ງນີ້ຈຶ່ງຈະມີຊີວິດທີ່ເກີດຜົນແກ່ແຜ່ນດິນສວັນຂອງພຣະເຈົ້າ.

<u>ຄຳຖາມ:</u>

1. ໂປໂລຂຽນຈົດໝາຍສະບັບນີ້ເຖິງກຸງໂຣມຂໍຮ້ອງໃຫ້ຄຣິສຕຽນກຸງໂຣມເຮັດຫຍັງ?

2. ເປັນຫຍັງຈຶ່ງຊັກຊວນໃຫ້ຄຣິສຕຽນໃນກຸງໂຣມຖວາຍຕົວ?

3. ການຖວາຍຕົວເປັນເຄື່ອງບູຊາແນວໃດ?

4. ພຣະເຈົ້າພໍພຣະທັຍ (ພໍໃຈ) ນຳຄຣິສຕຽນເມື່ອເຂົາເຮັດຫຍັງ?

5. ໂປໂລຫ້າມບໍ່ໃຫ້ດໍາເນີນຊີວິດຢ່າງຊາວໂລກນີ້ ໝາຍຄວາມວ່າແນວໃດ?

6. ເຮັດແນວໃດອຸປະນິສັຍຂອງຄຣິສຕຽນຈຶ່ງຈະປ່ຽນໃໝ່?

7. ຢ່າຄິດຖືຕົວເກີນຂນາດແຫ່ງຄວາມເຊື່ອໝາຍຄວາມວ່າແນວໃດ?

8. ເຮົາທັງຫລາຍເປັນເໝືອນກາຍອັນດຽວກັນທີ່ໂປໂລກ່າວເຖິງນັ້ນທ່ານເຂົ້າໃຈແນວໃດ?

9. ຂອງພຣະຣາຊທານແມ່ນອັນໃດສູງກວ່າກັນ?

10. ເຮັດແນວໃດເຮົາຈຶ່ງຈະມີຊີວິດເໝາະສົມກັບພຣະເມຕາກະຣຸນາ?

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນບົດທີ 12
# ເອີ້ນມາຢູ່ໃນຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 12:9-18; 13:1-14
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຣມ 12:9--13:14
**ຈຸດສຳຄັນຂອງບົດຮຽນນີ້:** ການເປັນເປັນຄຣິສຕຽນຈຳຕ້ອງປະຕິບັດຕາມພຣະທັມໃນທຸກບ່ອນ.
**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງເປັນເຄື່ອງຊັກຈູງທ່ານໃນການຢູ່ກິນແຕ່ລະວັນວັນໆ.
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊັກຊວນໃຫ້ຄຣິສຕຽນປະຕິບັດຕາມຄວາມເຊື່ອ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ຄຣິສຕຽນບໍ່ມີເຄື່ອງແບບທີ່ຈະນຸ່ງຫົ່ມເໝືອນພວກນັກຮຽນຫລືຂ້າຣາຊການບາງໂຮງການ, ດັ່ງນັ້ນເມື່ອເບິ່ງດ້ານນອກຂອງຄຣິສຕຽນຈະບໍ່ຮູ້ວ່າຄົນນັ້ນເປັນຄຣິສຕຽນຫລືບໍ່? ຂໍ້ຄວາມທີ່ໂປໂລສັ່ງສອນໃນບົດຮຽນນີ້ມັນເປັນຄ້າຍເຄື່ອງແບບຫລືເຄື່ອງແຕ່ງກາຍຂອງຄຣິສຕຽນ ດ້ວຍວ່າການເປັນຄຣິສຕຽນກໍຍາກຢູ່ແລ້ວແຕ່ການຈະປະຕິບັດຕົນໃນການເປັນຄຣິສຕຽນແລະດຳເນີນຊີວິດກັບສັງຄົມຍິ່ງຍາກກວ່ານັ້ນອີກ, ແຕ່ຫາກຄຣິສຕຽນຜູ້ທີ່ພຣະເຈົ້າຊົງເອີ້ນມາໃຫ້ຢູ່ໃນຄວາມເຊື່ອແລ້ວຜູ້ນັ້ນກໍຈະປະຕິບັດພຣະທັມໂດຍບໍ່ມີບັນຫາ.

### 1. ເພື່ອຄວາມສົມບູນ: ( 12:9-18 )

ເຮົາຈະເວົ້າວ່າເຮົາເປັນຄຣິສຕຽນກໍບໍ່ໄດ້ ຫາກເຮົາບໍ່ມີຈິດໃຈຮັກຍາດຕິພີ່ນ້ອງໃນໂບດດຽວກັນຜູ້ທີ່ເຫັນໜ້າກັນທຸກໆວັນອາທິດ ແລະຍັງຈະຮ້ອງວ່າຄຣິສຕຽນອີກບໍ່ໄດ້ຫາກບໍ່ຮັກພີ່ນ້ອງຮ່ວມຄວາມເຊື່ອທີ່ສັງກັດຢູ່ຄຣິສຕະຈັກອື່ນໆ ແລະຄຳວ່າຮັກບໍ່ແມ່ນຈະເວົ້າວ່າຮັກພໍໃຫ້ຖືກຕາມຫລັກພຣະຄັມພີເທົ່ານັ້ນ ແຕ່ຕ້ອງຮັກດ້ວຍໃຈຈິງເໝືອນຮັກຄົນໃນຄອບຄົວຂອງຕົນເອງ, ຄວາມຮັກແບບຄອບຄົວນັ້ນມີການຊ່ອຍເຫລືອເກື້ອກູນ, ຜ່ອນໜັກຜ່ອນເບົາ, ເອົາໃຈໃສ່ຕໍ່ກັນແລະກັນ ສ່ວນຄວາມຮັກແບບທຳມະດານັ້ນ ເຫັນໜ້າກັນກໍເວົ້າ ບໍ່ເຫັນໜ້າກັນກໍແລ້ວໄປ ໂປໂລບໍ່ຢາກໃຫ້ພວກເຮົາຮັກກັນແບບນັ້ນ ເພາະການຮັກກັນແບບນັ້ນໂປໂລຖືວ່າຍັງບໍ່ທັນເປັນຄຣິສຕຽນທີ່ສົມບູນ.ໂປໂລໄດ້ສອນເຮົາທັງຫລາຍໃຫ້ເປັນຄຣິສຕຽນທີ່ສົມບູນຕໍ່ຈາກ 12:1-8 ໃນເຣື່ອງ ຊີວິດທີ່ເໝາະສົມກັບພຣະເມດຕາ ດັ່ງນັ້ນເພື່ອຄວາມສົມບູນໃນການທີ່ມີຊີວິດທີ່ເໝາະສົມກັບພຣະເມດຕາຂອງພຣະເຈົ້າ ເໝາະສົມໃນການເປັນຄຣິສຕຽນໂປໂລຈຶ່ງກ່າວໃນ 12:9-18 *"ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດຊັງສິ່ງຊົ່ວຮ້າຍ ຈົ່ງຍຶດໝັ້ນໃນທາງທີ່ດີ"* (ຂໍ້ 9) ເຮົາສັງເກດເຫັນວ່າໂປໂລໃຊ້ຄຳວ່າ *"ຈົ່ງ"*

ຕັ້ງຫລາຍເທື່ອເປັນການເນັ້ນໜັກໃຫ້ປະຕິບັດຢ່າງເຄັ່ງຄັດ.

ໃນພຣະທັມກິຈການ 5:1-11 ມີຄຣິສຕຽນສອງຜົວເມັຽ ຊື່ອານາເນັຽກັບຊະຟີຣາໄດ້ສະແດງຕົນວ່າເປັນຄົນຮັກພຣະເຈົ້າ, ຮັກຄຣິສຕຽນດ້ວຍກັນ ສ່ວນໃຈຂອງພວກເພິ່ນນັ້ນບໍ່ເປັນດັ່ງການປາກເວົ້າ ວັນນຶ່ງເພິ່ນໄດ້ໃຊ້ວິທີຕົບຕາຕົວະຜູ້ຮັບໃຊ້ພຣະເຈົ້າແລ້ວທັງສອງກໍຕາຍ, ໃນເຣື່ອງນີ້ບໍ່ແມ່ນພຣະເຈົ້າໂຫດຮ້າຍແຕ່ຢ່າງໃດ ແຕ່ພຣະອົງຊົງສອນໃຫ້ຮູ້ວ່າພຣະອົງຊົງເປັນພຣະເຈົ້າເຊິ່ງຮູ້ເຫັນເຣື່ອງໃນໃຈຂອງທຸກຄົນ ບໍ່ມີໃຜສາມາດຕົວະພຣະອົງໄດ້. ຄຣິສຕຽນທີ່ເວົ້າວ່າຮັກພຣະເຈົ້າ ແລະຮັກຍາດພີ່ນ້ອງໃນໂບດ ແຕ່ບໍ່ໄດ້ເຮັດຫຍັງເລີຍກໍຈະເປັນທຳນອງດຽວກັນກັບອານາເນັຽກັບຊະຟີຣາ ແຕ່ຈະບໍ່ລົ້ມລົງຕາຍຄືທ່ານທັງສອງ ແຕ່ຈະຕາຍຈາກຄວາມເຊື່ອແລ້ວກັບໄປໃຊ້ຊີວິດເດີມ. ໂປໂລຍັງສັ່ງອີກວ່າຈົ່ງກຽດຊັງສິ່ງຊົ່ວ ຈົ່ງຍຶດໝັ້ນໃນສິ່ງທີ່ດີ ແປວ່າ ໃຫ້ອອກຈາກຊີວິດຊົ່ວຮ້າຍແລ້ວມຸ້ງໜ້າແລະຊອກສແວງຫາສິ່ງທີ່ດີ.

ຂ້າພະເຈົ້າຮ້ອງພຣະທັມໂຣມ 12:9-18 ໄດ້ວ່າເປັນຣະບຽບການຢູ່ກິນແບບຄຣິສຕຽນເພື່ອຈະນຳໄປສູ່ຄວາມສົມບູນໃນຖານະເປັນຜູ້ເຊື່ອໃນອົງພຣະຜູ້ເປັນເຈົ້າ, ຣະບຽບດັ່ງກ່າວນີ້ເປັນຣະບຽບເບື້ອງຕົ້ນຂອງຜູ້ເຊື່ອທຸກຄົນຈຳຕ້ອງປະຕິບັດ ແລະຣະບຽບນີ້ບໍ່ແມ່ນໂປໂລຄຶດວ່າດີແລ້ວເພິ່ນກໍເວົ້າໂລດ ແຕ່ເພິ່ນໄດ້ອີງໃສ່ການເທສນາຂອງພຣະເຢຊູທີ່ຈ້າຍພູໃນພຣະທັມມັດທາຍ. ໂປໂລລົງທ້າຍວ່າ *"ຖ້າເປັນໄປໄດ້ໃນເຣື່ອງທີ່ຂຶ້ນຢູ່ກັບພວກເຈົ້ານັ້ນຈົ່ງຢູ່ຢ່າງສງົບສຸກກັບຄົນທັງປວງ"* (ຂໍ້ 18). ຊຶ່ງທ່ານໝາຍເຖິງພວກທີ່ບໍ່ເຊື່ອພຣະເຈົ້າທີ່ຢູ່ອ້ອມຂ້າງເຮົາອາດໝິ່ນປມາດຫລືປຽບຍ່ຳຜູ້ທີ່ເຊື່ອພຣະເຈົ້າ, ນອກນັ້ນຍັງມີພວກກຽດຊັງຄຣິສຕຽນໂດຍບໍ່ມີເຫດຜົນ ຈົນເຖິງຂັ້ນໃຊ້ອຳນາດກົດຂີ່ຂົ່ມເຫັງເຂັ່ນຂ້າຄຣິສຕຽນ ໂປໂລສອນວ່າ *ຖ້າເປັນໄປໄດ້ໃນເຣື່ອງທີ່ຂຶ້ນຢູ່ກັບພວກເຈົ້ານັ້ນຈົ່ງຢູ່ຢ່າງສງົບສຸກ*" ອີງຕາມຈິດໃຈມະນຸດແລ້ວມັນເປັນໄປບໍ່ໄດ້ດອກທີ່ຈະບໍ່ມີການຕໍ່ສູ້ກັນ ແຕ່ໃນພຣະນາມຂອງພຣະເຈົ້າເຮົາສາມາດເຮັດໄດ້ທຸກຢ່າງໂປໂລກ່າວວ່າ *"ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊູກຳລັງເຮົາ"* (ຟີລິປອຍ 4:13). ເພື່ອຄວາມສົມບູນໃນຖານະເປັນຜູ້ເຊື່ອ ໂປໂລກ່າວວ່າ; *"ຢ່າເຮັດຊົ່ວຕອບແທນການຊົ່ວແກ່ຜູ້ນຶ່ງຜູ້ໃດ ແຕ່ຈົ່ງພະຍາຍາມເຮັດແຕ່ສິ່ງທີ່ທຸກຄົນເຫັນວ່າດີ"*. (ຂໍ້ 17).

**2. <u>ຄິສຕຽນກັບສັງຄົມ:</u>** ( 13:1-14 )

ຄຣິສຕະຊົນເປັນປະຊາກອນຂອງພຣະເຈົ້າແລະຢູ່ໃນອານາຈັກຂອງຄວາມສະວ່າງ ແຕ່ໃນເວລາດຽວກັນເຂົາຍັງດຳເນີນຊີວິດຢູ່ໃນໂລກຊຶ່ງເປັນອານາຈັກຂອງຄວາມມືດ ໂປໂລສອນບັນດາຜູ້ເຊື່ອກ່ຽວກັບຄວາມສັມພັນຣະຫວ່າງພວກເຂົາກັບຜູ້ມີອຳນາດໃນການປົກຄອງໃຫ້ຍອມຢູ່ໃຕ້ອຳນາດຂອງເຂົາ ຍອມເຊື່ອຟັງຜູ້ນຳອານາຈັກໂຣມັນ ຊຶ່ງໃນເວລານັ້ນມີຣະບົບການປົກຄອງທີ່ຂ້ອນຂ້າງເປັນທັມແລະຍຶດຄວາມຍຸຕິທັມເປັນຫລັກ ແຕ່ເມື່ອພວກຜູ້ນຳໃຊ້ອຳນາດໃນທາງຜິດແລະຂັດຕາມນ້ຳພຣະທັຍພຣະເຈົ້າ ຄຣິສຕະຊົນຕ້ອງເລືອກທີ່ຈະຟັງພຣະເຈົ້າຫລາຍກວ່າ.
ພຣະເຈົ້າມີພຣະເມຕາກະຣຸນນາອັນໃຫຍ່ຫລວງ ໄດ້ເອີ້ນເຮົາທັງຫລາຍອອກມາຈາກຄວາມມືດໃນຊີວິດທີ່ເຮົາເອງບໍ່ຮູ້ວ່າຕົນເອງຢູ່ໃນຄວາມມືດມົນໃນຊີວິດ ເມື່ອຊົງເອີ້ນອອກມາແລ້ວຍັງສອນເຮົາທັງຫລາຍໃຫ້ຢູ່ຢ່າງສັນຕິສຸກກັບຄົນທັງປວງໃນໂລກນີ້ ເພາະວ່າການຄຶດຕໍ່ສູ້ກັນ, ການຄຶດປອງຮ້າຍກັນເປັນເໝືອນໄຟນ້ອຍໆທີ່ສາມາດເຜົາໄໝ້ທັງປ່າໄດ້ສັນໃດ ຄວາມຄຶດປອງຮ້າຍກັນຈະເຜົາໄໝ້ສັນນັ້ນ. ໂປໂລຍັງສອນໃຫ້ເຮົາຍອມຢູ່ໃຕ້ອຳນາດກົດຣະບຽບແລະຢູ່ໃຕ້ອຳນາດຂອງພວກຜູ້ປົກຄອງບ້ານເມືອງທີ່ເຮົາອາສັຍຢູ່ນັ້ນ *"ທຸກຄົນຈົ່ງຍອມຢູ່ໃຕ້ບັງຄັບຜູ້ມີອຳນາດປົກຄອງ ດ້ວຍວ່າບໍ່ມີອຳນາດອັນໃດທີ່ບໍ່ໄດ້ມາຈາກພຣະ ເຈົ້າ ແລະຜູ້ທີ່ມີອຳນາດນັ້ນກໍແມ່ນພຣະເຈົ້າຊົງແຕ່ງຕັ້ງຂຶ້ນເຫດສັນນັ້ນຜູ້ທີ່ຂັດຂືນອຳນາດນັ້ນ ກໍຂັດຂືນຜູ້ຊຶ່ງພຣະເຈົ້າຊົງແຕ່ງຕັ້ງຂຶ້ນ ແລະຜູ້ທີ່ຂັດຂືນນັ້ນຈະຕ້ອງຖືກພິພາກສາລົງໂທດ"* (ຂໍ້ 1-2).

ຄຣິສຕຽນທີ່ດີຈະຕ້ອງປະຕິບັດແລະນັບຖືຜູ້ປົກຄອງແລະກົດໝາຍບ້ານເມືອງ ເພາະເຮົາຮູ້ແລ້ວວ່າອຳນາດທີ່ເຂົາມີກໍມາຈາກພຣະເຈົ້າ ເມື່ອມາຈາກພຣະເຈົ້າກໍແມ່ນພຣະເຈົ້າເປັນຜູ້ແຕ່ງຕັ້ງເຂົາ ສິ່ງສຳຄັນທີ່ສຸດໃຫ້ເຮົາເຂົ້າໃຈວ່າພຣະເຈົ້າມີອຳນາດເປັນການສູງສຸດ ເພາະພຣະອົງຊົງແຕ່ງຕັ້ງແລະປົດຕຳແໜ່ງຜູ້ປົກຄອງທຸກຣະດັບຕາມນ້ຳພຣະທັຍພຣະອົງ. *"ເຫດສັນນັ້ນກ່ອນສິ່ງອື່ນໃດ ເຮົາຂໍຮ້ອງເຈົ້າທັງຫລາຍໃຫ້ອ້ອນວອນໄຫວ້ວອນທູນຂໍ ແລະຂອບພຣະຄຸນເພື່ອຄົນທັງປວງເພື່ອກະສັດທັງຫລາຍ ແລະເພື່ອຄົນທັງປວງທີ່ມີຕຳແໜ່ງສູງ ເພື່ອເຮົາທັງຫລາຍຈະໄດ້ດຳເນີນຊີວິດຢ່າງງຽບໆ ແລະສງົບສຸກໃນທາງທັມແລະສະງ່າຜ່າເຜີຍທຸກຢ່າງ ການເຮັດແນວນັ້ນເປັນການດີແລະເປັນທີ່ຊອບພຣະທັຍພຣະເຈົ້າຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ"* (1ຕີໂມທຽວ 2.1-3).

*"ເພາະວ່າຜູ້ປົກຄອງນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າເພື່ອໃຫ້ປໂຍດແກ່ເຈົ້າ ແຕ່ວ່າຖ້າເຈົ້າເຮັດການຊົ່ວຈົ່ງຢ້ານ ເພາະວ່າຜູ້ປົກຄອງນັ້ນບໍ່ໄດ້ຖືດາບໄວ້ຊື່ໆ ທ່ານເປັນຜູ້ຮັບໃຊ້ຂອງພຣະເຈົ້າ ເປັນຜູ້ໃຊ້ຄວາມຮ້າຍຂາດແທນພຣະເຈົ້າແກ່ທຸກຄົນທີ່ເຮັດການຊົ່ວ"* (ຂໍ້ 4). ໂປໂລບອກອີກວ່າຜູ້ປົກຄອງນັ້ນບໍ່ໄດ້ຖືດາບໄວ້ຊື່ໆ ແປວ່າຜູ້ປົກຄອງນັ້ນມີອຳນາດແລະບໍ່ມີໄວ້ ລ້າໆ ຜູ້ໃດຜິດເພິ່ນກໍຈະລົງໂທດຕາມການກະທຳຂອງຄົນນັ້ນ.

ນອກຈາກການປະຕິບັດກັບພວກຜູ້ປົກຄອງແລະກົດໝາຍບ້ານເມືອງແລ້ວ ໂປໂລຍັງສັ່ງສອນໃນການດຳເນີນຊີວິດກັບຄົນທົ່ວໄປຕລອດເຖິງພີ່ນ້ອງຮ່ວມຄວາມເຊື່ອດ້ວຍ *"ຢ່າເປັນໜີ້ສິ່ງໃດແກ່ໃຜນອກຈາກຄວາມຮັກຊຶ່ງກັນແລະກັນ ເພາະວ່າຜູ້ທີ່ຮັກເພື່ອນມະນຸດກໍປະຕິບັດຕາມພຣະບັນຍັດຢ່າງຄົບຖ້ວນແລ້ວ"* (ຂໍ້ 8). ໂປໂລກ່າວເຖິງການເປັນໜີ້ສອງຢ່າງຄື; 1. ເປັນຊັບສົມບັດແລະສິ່ງຂອງຕ່າງໆ 2. ເປັນໜີ້ຄວາມຮັກ. ການເປັນໜີ້ຊັບສົມບັດແລະສິ່ງຂອງນັ້ນເປັນຂໍ້ຫ້າມບໍ່ໃຫ້ເປັນໜີ້ຕໍ່ກັນແລະກັນ ເພາະວ່າການເປັນໜີ້ຊັບຫລືສິ່ງຂອງອາດນຳໄປເຖິງການທະເລາະວິວາດຜິດຖຽງກັນ ໂດຍສະເພາະຢ່າງຍິ່ງໂປໂລເວົ້າເຖິງຂໍ້ 6-7 ເຣື່ອງຈ່າຍພາສີ. ສ່ວນການເປັນໜີ້ຄວາມຮັກນັ້ນໂປໂລແນະນຳໃຫ້ເຮົາເປັນໜີ້ຕໍ່ກັນແລະກັນ ເພາະວ່າໜີ້ຄວາມຮັກບໍ່ອາດໃຊ້ໝົດຈັກເທື່ອ ແລະໜີ້ຄວາມຮັກນີ້ຈະຢູ່ຈົນເຖິງວັນຕາຍ. *ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"* (ໂຢຮັນ 3:16).

ເຮົາທັງຫລາຍເປັນໜີ້ຄວາມຮັກແລະພຣະຄຸນພຣະເຈົ້າ ພຣະອົງຊົງຮັກເຮົາຢ່າງຫລວງຫລາຍຈົນໄດ້ໂຜດປະທານພຣະບຸດອົງດຽວຂອງພຣະອົງລົງມາຕາຍແທນຄວາມຜິດບາບຂອງເຮົາ, ໜີ້ອັນນີ້ແຫລະທີ່ໂປໂລເວົ້າເຖິງໃຫ້ພວກເຮົາເປັນໜີ້ຄວາມຮັກຕໍ່ກັນແລະກັນ ຄືຜູ້ອື່ນເຮັດນຳເຮົາດ້ວຍຄວາມຮັກຢ່າງໃດເຮົາກໍຄວນຕອບສນອງເພິ່ນດ້ວຍຄວາມຮັກຢ່າງດຽວກັນ *"ທີ່ຄວນຈະເຮັດດັ່ງນີ້ກໍເພາະພວກເຈົ້າໄດ້ຮູ້ຈັກກາລະເວລາແລ້ວວ່າ ບັດນີ້ເປັນເວລາທີ່ເຈົ້າຄວນຈະຕື່ນຈາກຫລັບແລ້ວ ດ້ວຍວ່າເວລາທີ່ພວກເຮົາຈະພົ້ນນັ້ນໃກ້ກວ່າເວລາທີ່ເຮົາຫາກໍເຊື່ອນັ້ນ"* (ຂໍ້ 11).

ເຮົາທັງຫລາຍກາຍເປັນຜູ້ໃຫຍ່ໃນພຣະເຈົ້າຈຶ່ງສົມຄວນທີ່ຈະເລີກຈາກການເຮັດຜິດບາບແລະຫັນມາຫາທາງຊອບທັມຂອງພຣະເຈົ້າດ້ວຍວ່າ *"ກາງຄືນກໍລ່ວງໄປຫລາຍແລ້ວ ແລະຮຸ່ງເຊົ້າກໍໃກ້ເຂົ້າມາ ເຫດສັນນັ້ນພວກເຮົາຈົ່ງເລີກເຮັດການຝ່າຍຄວາມມືດ ແລະຈົ່ງປະກອບຕົວດ້ວຍອາວຸດແຫ່ງຄວາມສວ່າງ ພວກເຮົາຈົ່ງປະຕິບັດຕົວໃຫ້ເໝາະສົມກັບເວລາກາງເວັນ ບໍ່ແມ່ນໃນການລ້ຽງດ້ວຍເສບສຸຣາຢາເມົາ ບໍ່ແມ່ນໃນການວິວາດເຖິງສາກັນ ແຕ່ຈົ່ງປະຕິບັດຕົວດ້ວຍພຣະເຢຊູຄຣິດເຈົ້າ ແລະຢ່າຈັດຫາອັນໃດເພື່ອບຳຣຸງຕັນຫາຂອງເນື້ອກາຍ"* (ຂໍ້ 12-14). ນີ້ຄືຊີວິດຜູ້ທີ່ເຊື່ອພຣະເຈົ້າທີ່ໂປໂລ ສອນໃຫ້ຄອຍຣະວັງເຣື່ອງນີ້ ໃນຖານະຄຣິສຕຽນຍັງໃຊ້ຊີວິດຢູ່ໃນສັງຄົມໂລກອີກຕໍ່ໄປ.

<u>ຄຳຖາມ:</u>

1. ການດຳເນີນຊີວິດໃຫ້ເໝາະກັບພຣະເມດຕາ ແມ່ນການດຳເນີນຊີວິດແບບໃດ?

2. ໂປໂລສອນເຮົາໃຫ້ຮັກກັນສັນພີ່ນ້ອງ ໝາຍຄວາມວ່າແນວໃດ?

3. ຖ້າເປັນໄປໄດ້ໃນເລື່ອງທີ່ຂື້ນຢູ່ກັບພວກເຈົ້ານັ້ນ ຈົ່ງຢູ່ຢ່າງສງົບສຸກກັບຄົນທັງປວງ ແມ່ນເພິ່ນໝາຍເຖິງໃຜ?

4. ເປັນຫຍັງໂປໂລຈື່ງສອນໃຫ້ເຮົານັບຖືຜູ້ປົກຄອງ ຖ້າຜູ້ປົກຄອງເຮັດບໍ່ດີຈະຟັງຢູ່ບໍ່?

5. ພວກທີ່ມີອຳນາດໃນການປົກຄອງຖືກແຕ່ງຕັ້ງມາແຕ່ໃສ?

6. ຜູ້ປົກຄອງຖືດາບແປວ່າຫຍັງ?

7. ເຮັດແນວໃດເຮົາຈື່ງຈະຢູ່ຢ່າງສງົບສຸກກັບສັງຄົມທົ່ວໄປ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ບົດຮຽນທີ 13
# ຍອມຮັບຊຶ່ງກັນແລະກັນ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຣມ 14:1-21
**ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້:** ໂຣມ 14:1--15:3
**ຈຸດສໍາຄັນຂອງບົດຮຽນນີ້:** ຊັກຊວນຄຣິສຕຽນບໍ່ໃຫ້ຕັດສິນຜູ້ໃດ ແລະຄວນຊອກຫາທາງປອງດອງ.
**ຄໍາຖາມເພື່ອການສໍາຣວດ:** ເຮັດແນວໃດຈຶ່ງຈະຫລຸດຜ່ອນການຕັດສິນຂອງເຮົາໄດ້?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊ່ອຍທ່ານໃຫ້ຮູ້ຈັກວິທີທາງຫລຸດຜ່ອນການຕັດສິນຂອງທ່ານ.

**ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນໍາ

ກຸງໂຣມເປັນແຫລ່ງສໍາຄັນຂອງຜູ້ຄົນທ່ອງທ່ຽວໄປມາຢ່າງຫລວງຫລາຍ ດັ່ງນັ້ນຈຶ່ງມີຫລາຍຊາດ, ຫລາຍວັດທະນະທັມ ແລະສັງຄົມທີ່ແຕກຕ່າງກັນ, ຄົນໃນໂບດດຽວກັນກໍມີຫລາຍເຊື້ອຊາດ, ຈາກຫລາຍບ້ານຫລາຍເມືອງ ແຕ່ລະຊາດກໍນໍາວັດທະນະທັມຂອງຕົນເຂົ້າມາໃນໂບດ, ດັ່ງນັ້ນໃນໂບດຈຶ່ງມີຄວາມຄິດແຕກຕ່າງກັນ ຜົນສະທ້ອນຕາມມາຄືຄົນໃນໂບດບໍ່ຍອມຮັບກັນແລະກັນ ຊຶ່ງບໍ່ເປັນການຖືກຕ້ອງຕາມລັກສະນະຂອງຜູ້ເຊື່ອພຣະເຈົ້າ ດັ່ງນັ້ນໂປໂລຈຶ່ງມີຄວາມຄິດຄວາມເຫັນ ແລະສິດສອນຄຣິສຕຽນໃນກຸງໂຣມດັ່ງຕໍ່ໄປນີ້;

**1. ເບິ່ງໃນທາງບວກ:** ( 14:1-12 )
ຂ້າພະເຈົ້າໄດ້ຍິນອາຈານຜູ້ນຶ່ງເລົ່າເຣື່ອງວ່າ; "ມີຊາຍແກ່ຜູ້ນຶ່ງຂີ່ຫລັງຄວາຍໄປລ້ຽງໃນປ່າເປັນປະຈໍາ ພໍຕົກແລງມາລາວກໍເກັບຜັກຫັກໜໍ່ໄມ້ມາເປັນອາຫານ. ຢູ່ມາວັນນຶ່ງຊາຍແກ່ຜູ້ນີ້ບໍ່ໄດ້ຂີ່ຄວາຍໂຕນັ້ນແລ້ວເພາະໂຈນໄດ້ລັກຄວາຍໂຕນັ້ນ ແຕ່ແທນທີ່ລາວຈະໂອຍອາຍ ລາວກັບກ່າວວ່າ "ຂອບພຣະຄຸນພຣະເຈົ້າ" ຫລາຍຄົນບໍ່ເຂົ້າໃຈວ່າເປັນຫຍັງລາວຈຶ່ງຂອບຄຸນພຣະເຈົ້າເມື່ອຄວາຍເສັຽທັງໂຕ ລາວຕອບວ່າ ຖ້າຂ້ອຍຂີ່ຄວາຍໂຕນັ້ນໄປຂ້ອຍກໍຈະເສັຽຄືກັນ". ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າຫາກເຮົາເບິ່ງໃນທາງບວກ ຫລືທາງດີ ເຮົາຈະຮູ້ຈັກຂອບພຣະຄຸນເໝືອນລູງຄົນນີ້.
ໃນໂບດເຮົາອາດມີຄົນຫາກໍເຊື່ອໃໝ່ ຫລືວ່າເຊື່ອດົນແລ້ວແຕ່ບໍ່ເຂັ້ມແຂງຝ່າຍຄວາມເຊື່ອໂປໂລສອນດັ່ງນີ້; *"ສ່ວນຄົນທີ່ອ່ອນໃນຄວາມເຊື່ອນັ້ນ ຈົ່ງຮັບເອົາໄວ້ ແຕ່ບໍ່ໃຊ່ເພື່ອຖົກຖຽງກັນໃນເຣື່ອງຄວາມເຊື່ອທີ່ແຕກຕ່າງກັນຄົນນຶ່ງຖືວ່າຈະກິນອັນໃດກໍໄດ້ຫມົດ ແຕ່ຄົນທີ່ຍັງອ່ອນໃນຄວາມເຊື່ອກໍກິນແຕ່ຜັກເທົ່ານັ້ນຢ່າໃຫ້ຄົນທີ່ກິນນັ້ນຫມິ່ນປມາດຄົນທີ່ບໍ່ກິນ ແລະຢ່າໃຫ້ຄົນທີ່ບໍ່ກິນກ່າວໂທດຄົນທີ່ກິນ ດ້ວຍວ່າພຣະເຈົ້າໄດ້ຊົງໂຜດຮັບເອົາຜູ້ນັ້ນແລ້ວ"* (ຂໍ້ 1-3). ຫາກເຮົາຈະເບິ່ງໃນ

ທາງບອກເຮົາອາດເວົ້າວ່າຂອບພຣະຄຸນພຣະເຈົ້າທີ່ມີຄົນອ່ອນແອຝ່າຍຄວາມເຊື່ອ ເພື່ອໃຫ້ຂ້າພະເຈົ້າມີໂອກາດຊ່ອຍລາວໃຫ້ໃຫຍ່ ຂ້າພະເຈົ້າບໍ່ສາມາດໄປເຮັດງານຂອງພຣະເຈົ້າເມືອງໄກ ແຕ່ພຣະເຈົ້າຊົງມອບໜ້າທີໃຫ້ຢູ່ໃກ້ບ້ານ ຂ້າພະເຈົ້າຈະເຮັດໜ້າທີ່ນີ້ດ້ວຍຄວາມຍິນດີ. ຫາກເຮົາເບິ່ງໃນທາງບວກເຮົາຈະພໍໃຈ ແຕ່ຖ້າຫາກເບິ່ງທາງລົບເຮົາກໍຈະໝິ່ນປະໝາດກັນແລະນຳໄປສູ່ການແຕກແຍກກັນເທົ່ານັ້ນ, ໂປໂລກ່າວວ່າພຣະເຈົ້າຊົງຮັບຜູ້ນັ້ນເຮົາເປັນໃຜຈຶ່ງບໍ່ຍອມຮັບລາວ.

"*ເຈົ້ານັ້ນແມ່ນໃຜຈຶ່ງກ່າວໂທດໃສ່ບ່າວຂອງຜູ້ອື່ນ ບ່າວນັ້ນຈະຕັ້ງໝັ້ນຢູ່ຫລືລົ້ມລົງກໍສຸດແລ້ວແຕ່ນາຍຂອງຕົນ ແລະເຂົາຄົງຈະຕັ້ງໝັ້ນຢູ່ເປັນແນ່ ດ້ວຍວ່າອົງພຣະຜູ້ເປັນເຈົ້າຊົງຣິດອາດໃຫ້ຜູ້ນັ້ນຕັ້ງໝັ້ນຢູ່ໄດ້ ດ້ວຍວ່າອົງພຣະຜູ້ເປັນເຈົ້າຊົງຣິດອາດໃຫ້ຜູ້ນັ້ນຕັ້ງໝັ້ນຢູ່ໄດ້*" (ຂໍ້ 4) ໂປໂລໃຫ້ຖາມຕົນເອງວ່າທ່ານແມ່ນໃຜຈຶ່ງກ່າວໂທດໃສ່ບ່າວຜູ້ອື່ນ? ມີຄວາມໝາຍວ່າທ່ານບໍ່ມີໜ້າທີ່ຈະກ່າວໂທດຫລືຕັດສິນຜູ້ຮັບໃຊ້ຜູ້ອື່ນວ່າເປັນຄົນອ່ອນແອຫລືເຂັ້ມແຂງແຕ່ຢ່າງໃດເພາະຕົວທ່ານເອງກໍມີນາຍຜູ້ດຽວກັນຫລືມີພຣະເຈົ້າອົງດຽວກັນກັບຜູ້ທີ່ທ່ານຄິດວ່າອ່ອນແອນັ້ນ ຜູ້ນັ້ນຈະເປັນແນວໃດກໍສຸດແລ້ວແຕ່ນາຍ ແປວ່າສຸດແລ້ວແຕ່ພຣະເຈົ້າ, ຄຳວ່າບ່າວແປວ່າຜູ້ຮັບໃຊ້ ຫລືຂ້ອຍໃຊ້ ດັ່ງທີ່ເຫັນຕົວຢ່າງດັ່ງນີ້; "*ບໍ່ມີຜູ້ໃດສາມາດເປັນຂ້າສອງເຈົ້າບ່າວສອງນາຍໄດ້*" (ມັດທາຍ 6:24). ການຊັກຊວນຂອງໂປໂລໃຫ້ເຫັນພາບພົດຕົນເອງໃນສິດສເນີພາບດັ່ງນີ້; "*ໃນພວກເຮົາບໍ່ມີຜູ້ໃດມີຊີວິດຢູ່ເພື່ອຕົນເອງຝ່າຍດຽວ ແລະບໍ່ມີຜູ້ໃດຕາຍເພື່ອຕົນເອງຝ່າຍດຽວ ດ້ວຍວ່າຖ້າເຮົາທັງຫລາຍມີຊີວິດຢູ່ກໍເພື່ອອົງພຣະຜູ້ເປັນເຈົ້າແລະຖ້າເຮົາຕາຍກໍຕາຍເພື່ອອົງພຣະຜູ້ເປັນເຈົ້າ ເຫດສັນນັ້ນຖ້າເຮົາທັງຫລາຍມີຊີວິດຫລືຕາຍກໍດີ ເຮົາກໍເປັນຄົນຂອງອົງພຣະຜູ້ເປັນເຈົ້າ ເພາະເຫດນີ້ແຫລະ, ພຣະຄຣິດຈຶ່ງໄດ້ສິ້ນພຣະຊົນແລະໄດ້ຊົງຄືນພຣະຊົນອີກເພື່ອຈະໄດ້ຊົງເປັນອົງພຣະຜູ້ເປັນເຈົ້າຂອງຄົນຕາຍແລະຂອງຄົນເປັນ*" (ຂໍ້ 7-9). ດ້ວຍເຫດນີ້ແຫລະເຮົາບໍ່ສົມຄວນຈະກ່າວໂທດຫລືຕັດສິນຜູ້ໃດ ດ້ວຍວ່າເຮົາທຸກຄົນທັງຜູ້ເຊື່ອແລະບໍ່ເຊື່ອຈະໄດ້ຢືນຢູ່ຕໍ່ໜ້າພຣະອົງໃນວັນຕັດສິນ (ຂໍ້ 10-12). "*ເຫດສັນນັ້ນພວກເຈົ້າຢ່າຕັດສິນສິ່ງໃດກ່ອນເວລາຈົນກວ່າອົງພຣະຜູ້ເປັນເຈົ້າຈະສະເດັດມາ ພຣະອົງຈະຊົງເປີດເຜີຍຄວາມລັບທີ່ເຊື່ອງໄວ້ໃນຄວາມມືດໃຫ້ແຈ່ມແຈ້ງ ແລະຈະຊົງເຜີຍຄວາມຄາດໝາຍໃນໃຈມະນຸດດ້ວຍ ເມື່ອນັ້ນແຫລະ, ທຸກຄົນຈະໄດ້ຮັບຄຳຊົມເຊີຍຈາກພຣະເຈົ້າຕາມສົມຄວນ*" (1ກຣທ 4:5).

**2. <u>ຢ່າຕິຕຽນກັນ</u>:** (14:13-23 )

"*ເຫດສັນນັ້ນພວກເຮົາຢ່າກ່າວໂທດໃສ່ກັນແລະກັນອີກຕໍ່ໄປ ແຕ່ວ່າຈົ່ງຕັ້ງໃຈເຮັດດັ່ງນີ້ດີກວ່າ ຄືຢ່າໄດ້ເອົາສິ່ງໃດເປັນເຫດໃຫ້ຊຸນສະດຸດຫລືລົ້ມລົງມາຂວາງທາງຂອງພີ່ນ້ອງ*" (ຂໍ້ 13). ສິ່ງໃດເປັນອັນກີດຂວາງຄວາມຮັກແພງ ແລະເປັນສິ່ງກີດຂວາງໃນການຊ່ອຍກັນໃຫ້ຈະເຣີນຂຶ້ນ ຄຣິສຕຽນຄວນບໍ່ໃຫ້ມີສິ່ງເຫລົ່ານັ້ນໃນຊີວິດ ເພາະວ່າການຕິຕຽນກ່າວໂທດໃສ່ກັນແລະກັນນັ້ນເປັນຕົ້ນເຫດໃຫ້ພີ່ນ້ອງສະດຸດແລະລົ້ມລົງເທົ່ານັ້ນ. ຫົນທາງທີ່ຈະຊ່ອຍຄົນອື່ນໃຫ້ເຂັ້ມແຂງນັ້ນບໍ່ແມ່ນຂຶ້ນຢູ່ກັບການຕິສິນນິນທາຊຶ່ງກັນແລະກັນ ແຕ່ຂຶ້ນຢູ່ກັບການຊູກຳລັງໃຈຊຶ່ງກັນແລະກັນ "*ເຫດດັ່ງນີ້ພວກເຮົາຈົ່ງສແວງຫາສິ່ງທັງຫລາຍທີ່ເຮັດໃຫ້ເກີດຄວາມສງົບສຸກ ແລະເຮັດໃຫ້ເກີດຄວາມຈະເຣີນແກ່ກັນແລະກັນ*" (ຂໍ້ 19).

ເຣື່ອງການກິນແລະບໍ່ກິນກໍເປັນອີກເຣື່ອງນຶ່ງທີ່ຄຣິສຕຽນໃນກຸງໂຣມເວົ້າໃຫ້ກັນ ແລະການຕິສິນນິນທາກັນ ລາງກຸ່ມບໍ່ກິນຊີ້ນ, ກຸ່ມບໍ່ກິນກໍເວົ້າໃຫ້ກຸ່ມກິນຊີ້ນວ່າເຮັດບໍ່ຖືກ ດ້ວຍວ່າມີຂໍ້ຫ້າມດັ່ງນັ້ນດັ່ງນີ້ ເມື່ອເປັນເຊັ່ນນັ້ນໂປໂລຈຶ່ງກ່າວກັບເຂົາວ່າ "*ເຮົາຮູ້ແລະເຊື່ອແນ່ໃຈໃນພຣະເຢຊູເຈົ້າວ່າ ບໍ່ມີສິ່ງນຶ່ງສິ່ງໃດທີ່ເປັນຂອງຕ້ອງຫ້າມໃນຕົວມັນເອງ ແຕ່ຖ້າຜູ້ນຶ່ງຜູ້ໃດຖືວ່າສິ່ງໃດເປັນຂອງຕ້ອງຫ້າມ ມັນກໍເປັນຂອງຕ້ອງຫ້າມສຳລັບຜູ້ນັ້ນແທ້ຖ້າພີ່ນ້ອງຂອງເຈົ້າເປັນທຸກໃຈເພາະອາ*

*ຫານທີ່ເຈົ້າກິນ ເຈົ້າກໍບໍ່ໄດ້ປະຕິບັດໄປຕາມທາງແຫ່ງຄວາມຮັກເສັຽແລ້ວ ພຣະຄຣິດຊົງສິ້ນພຣະຊົນເພື່ອຜູ້ໃດກໍຢ່າໃຫ້ຜູ້ນັ້ນຈິບຫາຍເພາະອາຫານທີ່ເຈົ້າກິນນັ້ນ "* (ຂໍ້ 14-15). ມີຄວາມໝາຍວ່າຖ້າທີ່ນ້ອງຕ້ອງສະດຸດຍ້ອນອາຫານທີ່ທ່ານກິນທ່ານກໍບໍ່ສົມຄວນຈະກິນ ເພິ່ນຍັງບອກວ່າຫາກກິນກໍບໍ່ໄດ້ປະຕິບັດທາງແຫ່ງຄວາມຮັກ ແປວ່າເຮັດໃຫ້ຜູ້ອື່ນຕ້ອງສະດຸດລົ້ມລົງ ຫລືເຮັດໃຫ້ຄວາມເຊື່ອລາວນ້ອຍລົງ ແຕ່ຢ່າງໃດກໍດີໂປໂລຍັງກ່າວອີກວ່າ *"ເພາະວ່າຣາຊອານາຈັກຂອງພຣະເຈົ້າບໍ່ແມ່ນໝາຍເຖິງການກິນແລະການດື່ມ"* (ຂໍ້ 16). ແປວ່າການກິນຫລືບໍ່ກິນບໍ່ໄດ້ຊ່ອຍໃຫ້ຜູ້ໃດຂຶ້ນສວັນ ແຕ່ຄວາມຊອບທັມໃນພຣະເຈົ້າຈະນຳພາໄປສວັນ *"ແຕ່ໝາຍເຖິງຄວາມຊອບທັມແລະສັນຕິທັມ ກັບຄວາມຊົມຊື່ນຍິນດີທີ່ມາຈາກພຣະວິນຍານບໍຣິສຸດ "* (ຂໍ້ 17).

ພຣະເຢຊູຄຣິດຊົງກ່າວວ່າ *"ຢ່າກ່າວໂທດໃສ່ເຂົາເພື່ອພຣະເຈົ້າຈະບໍ່ຊົງກ່າວໂທດໃສ່ທ່ານເພາະວ່າທ່ານຈະກ່າວໂທດໃສ່ເຂົາຢ່າງໃດ ພຣະເຈົ້າຈະຊົງກ່າວໂທດໃສ່ທ່ານຢ່າງນັ້ນ ພວກທ່ານຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ ພຣະເຈົ້າຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ ເປັນຫຍັງທ່ານຈຶ່ງຫລຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົນທ່ານບໍ່ຮູ້ສຶກ "* (ມັດທາຍ 7:1-3). *"ອາຫານບໍ່ແມ່ນສິ່ງທີ່ເຮັດໃຫ້ພວກເຮົາເປັນທີ່ຊອບພຣະທັຍພຣະເຈົ້າ ຖ້າບໍ່ກິນເຮົາບໍ່ໄດ້ຊົ່ວລົງ ຖ້າກິນເຮົາກໍບໍ່ດີຂຶ້ນ"* (1.ກຣທ 8:8). *"ເຫດສັນນັ້ນເມື່ອເຈົ້າທັງຫລາຍຈະກິນ, ຈະດື່ມ ຫລືຈະເຮັດສິ່ງໃດກໍດີ ຈົ່ງເຮັດທຸກສິ່ງເພື່ອຖວາຍກຽດແດ່ພຣະເຈົ້າ "* (1ກຣທ 10:31).

ການຕິສົນນິນທາກັນນີ້ບໍ່ວ່າຈະຢູ່ໃນສມັຍໃດກໍຕາມມັນບໍ່ໄດ້ສົ່ງເສີມໃຫ້ຄົນມີຄວາມກະຕືລືລົ້ນແຕ່ຢ່າງໃດນອກຈາກຈະນຳໄປສູ່ທາງແຫ່ງຄວາມແຕກແຍກດັ່ງນັ້ນໂປໂລຈຶ່ງຢ້ຳອີກວ່າ *"ອາຫານທຸກຢ່າງບໍ່ແມ່ນຂອງຕ້ອງຫ້າມກໍຈິງ ແຕ່ຄົນໃດທີ່ກິນອາຫານຊຶ່ງເປັນເຫດໃຫ້ຜູ້ອື່ນສະດຸດໃຈກໍມີຄວາມຜິດທີ່ຈະບໍ່ກິນຊີ້ນ ຫລືດື່ມເຫລົ້າແວງ ຫລືເຮັດສິ່ງໃດໆທີ່ເປັນເຫດໃຫ້ພີ່ນ້ອງສະດຸດໃຈກໍເປັນການດີຢູ່ແລ້ວ ຄວາມເຊື່ອທີ່ເຈົ້າມີຢູ່ນັ້ນຈົ່ງຍຶດຖືໄວ້ໃຫ້ໝັ້ນລະຫວ່າງຕົວເຈົ້າກັບພຣະເຈົ້າ ຜູ້ໃດບໍ່ມີເຫດທີ່ຈະຕິຕຽນຕົນເອງໃນສິ່ງທີ່ຕົນເຫັນຊອບແລ້ວນັ້ນກໍເປັນສຸກ ແຕ່ຜູ້ທີ່ມີຄວາມສົງສັຍຖ້າຍັງກິນກໍຖືວ່າມີຜິດ ເພາະຜູ້ນັ້ນບໍ່ໄດ້ກິນຕາມທີ່ຕົນເຊື່ອ ທັງນີ້ກໍເພາະການກະທຳທີ່ບໍ່ໄດ້ເກີດຈາກຄວາມເຊື່ອຫມັ້ນກໍເປັນບາບທັງໝົດ "* (ຂໍ້ 20-23). ທີ່ຈິງຄວາມຜິດບາບໄດ້ເກີດຂຶ້ນກັບຜູ້ກະທຳບາບ ແຕ່ມັນກໍບໍ່ໄດ້ຢຸດລົງພຽງເທົ່ານັ້ນ ມັນຍັງນຳຜົນສະທ້ອນໄປຍັງຄົນອື່ນອີກ ເພາະຜູ້ອື່ນຕ້ອງສະດຸດຍ້ອນສິ່ງທີ່ຕົນເອງເຮັດຫລືກິນແລະດື່ມນັ້ນ. ລາງເທື່ອສິ່ງເຮົາບໍ່ເຮັດກໍເຮັດໃຫ້ຜູ້ອື່ນສະດຸດເຊັ່ນກັນ ຄືການບໍ່ເຮັດຕາມຄວາມເຊື່ອ ດັ່ງນັ້ນເມື່ອເຮົາເປັນຜູ້ເຊື່ອເຮົາຄວນປະຕິບັດຕາມທາງແຫ່ງຄວາມເຊື່ອໂດຍບໍ່ມີຂໍ້ຕຳນິຕິຕຽນຜູ້ໃດ ເຮົາກໍຈະກາຍເປັນຜູ້ອູ້ມຊູຄົນອື່ນໂດຍບໍ່ຮູ້ສຶກຕົວ.

**<u>ຄຳຖາມ:</u>**

1. ເປັນຫຍັງໂບດໃນກຸງໂຣມ ຈຶ່ງມີວັດທະນະທັມບໍ່ຄືກັນ?

2. ການມີວັດທະນະທັມແຕກຕ່າງກັນເປັນຜົນສະທ້ອນແນວໃດ?

3. ເຮົາສົມຄວນເຮັດແນວໃດກັບຄົນມີຄວາມເຊື່ອທີ່ຂ້ອນຂ້າງອ່ອນແອ?

4. ເຮົາຈະເບິ່ງຄົນອ່ອນແອໃນທາງບວກ (ທາງດີ) ຢ່າງໃດ?

5. ເປັນຫຍັງໂປໂລຈຶ່ງກ່າວວ່າ *ເຈົ້ານັ້ນແມ່ນໃຜຈຶ່ງກ່າວໂທດໃສ່ບ່າວຂອງຜູ້ອື່ນ*

6. ແທນທີ່ຈະກ່າວໂທດຊຶ່ງກັນແລະກັນ ໂປໂລຊັກຊວນໃຫ້ເຮັດແນວໃດ?

7. *ເພາະວ່າຣາຊອານາຈັກຂອງພຣະເຈົ້າບໍ່ແມ່ນໝາຍເຖິງການກິນແລະການດື່ມ*" (ຂໍ້ 16) ແປວ່າຫຍັງ?

8. ການກ່າວໂທດຊຶ່ງກັນແລະກັນເປັນບັນຫາແນວໃດ?

9. ເຮັດແນວໃດເຮົາຈຶ່ງຈະບໍ່ເປັນຄົນຕັດສິນຜູ້ອື່ນ.

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*